ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

16 - 23 ທັນວາ 2023
ປີທີ 12
ສະບັບທີ 950
ລາຍສັບປະດາ



ລະນຶກເຖິງວັນເກີດ

ປະທານ ໄກສອນ ພົມວິຫານ

ຄົບຮອບ 103 ປີ

# ຮ່ຳຮຽນ ແລະ ປະຕິບັດຕາມແບບຢ່າງຄຸນສົມບັດສົມທ່ານປະຕິວັດ ຂອງປະທານ ໄກສອນ ພົມວິຫານ




ຈົ່ງປະຕິບັດຕາມແບບຢ່າງທີ່ດີຂອງປະທານ ໄກສອນ ໃຫ້ສອດຄ່ອງກັບສະພາບປັດຈຸບັນ.

ທ່າມກາງບັນຍາກາດ 2 ວັນປະຫວັດສາດ ໃນເດືອນທັນວາປີນີ້, ຄະນະປະຈຳພັກແຕ່ລະຂັ້ນ ນັບແຕ່ສູນກາງ ລົງຮອດທ້ອງຖິ່ນ ໄດ້ສືບຕໍ່ຖືເອົາການສະເຫຼີມສະຫຼອງ ວັນຊາດ ທີ 2 ທັນວາ ແລະ ວັນເກີດ ປະທານ ໄກສອນ ພົມວິຫານ ຈັດຕັ້ງໂຄສະນາ-ປາຖະກະຖາ ສຶກສາອົບຮົມ, ປຸກລະດົມຂົນຂວາຍ, ຊຸກຍູ້ ປວງຊົນລາວທັງຊາດ ໃຫ້ຍົກສູງນ້ຳໃຈຮັກຊາດ, ເສີມຂະຫຍາຍຄວາມສາມັກຄີເປັນຈິດໜຶ່ງໃຈດຽວ ເພື່ອຍູ້ແຮງບົດບາດການນຳພາຂອງພັກ, ສືບຕໍ່ດຳເນີນແນວທາງປ່ຽນແປງໃໝ່, ສືບຕໍ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IXແລະ 2 ວາລະແຫ່ງຊາດ ໝົດທ້າຍສະໄໝ.

ອ່ານຕໍ່ໜ້າ 5

# ຮຽບຮຽງເນື້ອໃນຮ່າງກົດໝາຍວ່າດ້ວຍການບັນຊີ

(ສພຊ) ວັນທີ 12 ທັນວາ 2023 ທີ່ຫໍສະພາແຫ່ງຊາດ ໄດ້ມີກອງປະຊຸມຮຽບຮຽງເນື້ອໃນຂອງຮ່າງກົດໝາຍວ່າດ້ວຍການບັນຊີ(ສະບັບປັບປຸງ) ໂດຍການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມມີທ່ານ ປອ. ພູທອນ ວໍລະເພັດ ຮອງປະທານກຳມາທິການກົດໝາຍ; ທ່ານ ທັນຕາ ກອງຜາລີ ຮອງປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ ແລະ ທ່ານ ບຸນປອນ ວັນນະຈິດ ຮອງລັດຖະມົນຕີກະຊວງການເງິນ; ບັນດາທ່ານທີ່ປຶກສາທາງດ້ານກົດໝາຍ, ຫ້ອງວ່າການສຳນັກງານປະທານປະເທດ, ສຳນັກງານນາຍົກລັດຖະມົນຕີ, ກະຊວງຍຸຕິທຳ, ຄະນະກົມ, ຄະນະພະແນກ ພ້ອມດ້ວຍພາກສ່ວນ



ທີ່ກ່ຽວຂ້ອງຈາກສະພາແຫ່ງຊາດ ແລະ ກະຊວງການເງິນ.

ກອງປະຊຸມຄັ້ງນີ້, ໄດ້ຮັບຟັງການສະເໜີບັນດາຄຳເຫັນຂອງສະມາຊິກສະພາແຫ່ງຊາດ (ສສຊ) ທີ່ໄດ້ປະກອບຄຳເຫັນຢູ່ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ຈາກຕາງໜ້າກົມກົດໝາຍຂອງສະພາແຫ່ງຊາດ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ພ້ອມກັນສຸມໃສ່ຄົ້ນຄວ້າ, ເລືອກເຟັ້ນເອົາບັນດາຄຳຄິດເຫັນຂອງ ສສຊ ທີ່ມີເຫດຜົນ ມາປັບປຸງໃສ່ຮ່າງກົດໝາຍສະບັບດັ່ງກ່າວ.

ໃນກອງປະຊຸມ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ມີຄຳເຫັນວ່າ: ກອງປະຊຸມຄົ້ນຄວ້າ ແລະ ຮຽບຮຽງເນື້ອໃນຂອງກົດໝາຍທີ່ຜ່ານການພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ຄື ກົດໝາຍວ່າດ້ວຍການບັນຊີ (ສະບັບປັບປຸງ) ຕາມການປະກອບຄຳເຫັນຂອງບັນດາທ່ານສະມາຊິກສະພາແຫ່ງຊາດ ໃນຄັ້ງວັນທີ 14 ພະຈິກ 2023 ເຊິ່ງການຄົ້ນຄວ້າແລະປະກອບຄຳເຫັນຂອງບັນດາທ່ານ ສສຊ ມີຈຳນວນ 24 ທ່ານ ກວມເອົາ 30 ມາດຕາ, 55 ເນື້ອໃນ; ຈາກນັ້ນ, ຄະນະຮັບຜິດຊອບປັບປຸງກົດໝາຍວ່າດ້ວຍການບັນຊີ ກໍໄດ້ຄົ້ນຄວ້າພິຈາລະນາບັນດາຄຳເຫັນຂອງບັນດາທ່ານ ສສຊສຳເລັດໂດຍພື້ນຖານແລ້ວໃນນີ້, ສາມາດປັບປຸງຕາມການປະກອບຄຳເຫັນຂອງ ສສຊ ຈຳນວນ 15 ມາດຕາ ແລະ ສະເໜີຮັກສາໄວ້ຄືເກົ່າ ຈຳນວນ 15 ມາດຕາ ເຊິ່ງກົດໝາຍສະ

ອ່ານຕໍ່ໜ້າ 3

# ກອງປະຊຸມຄົບຄະນະກຳມາທິການການຕ່າງປະເທດ ປະຈຳປີ 2023




ອ່ານຕໍ່ໜ້າ 4

# ປາຖະກະຖາວັນສຳຄັນຂອງຊາດ ແລະ ເຊື່ອມຊຶມມະຕິຂອງພັກ



(ສພຊ) ໃນວັນທີ 12 ທັນວາ 2023 ທີ່ຫໍສະພາແຫ່ງຊາດ, ຄະນະບໍລິຫານງານພັກສະພາແຫ່ງຊາດ ໄດ້ຈັດກອງປະຊຸມເຜີຍແຜ່ເຊື່ອມຊຶມມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 7 ສະໄໝທີ XI, ປາຖະກະຖາວັນຊາດທີ 2 ທັນວາ ຄົບຮອບ 48 ປີ (02/12/1975-02/12/2023) ແລະ ວັນເກີດປະທານ ໄກສອນ ພົມວິຫານ ຄົບຮອບ 103 ປີ (13/12/1920-13/

ອ່ານຕໍ່ໜ້າ 12

# ຍົກສູງຄຸນນະພາບການແກ້ໄຂຄຳຮ້ອງທຸກ



(ສພຊ) ເພື່ອເປັນການສະຫຼູບຕີລາຄາ ແລະ ທົບທວນການຈັດຕັ້ງປະຕິບັດວຽກງານການແກ້ໄຂຄຳຮ້ອງທຸກໃນໄລຍະຜ່ານມາ, ຕິດຕາມກວດກາ ແລະ ຊຸກຍູ້ອົງການທີ່ຮັບຜິດຊອບໃນການແກ້ໄຂຄຳຮ້ອງທຸກ ແລະ ພາກສ່ວນກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານການແກ້ໄຂຄຳຮ້ອງທຸກ ທັງເປັນການປະກອບຄຳຄິດຄຳເຫັນ ແລະ ຖອດຖອນບົດຮຽນເພື່ອປັບປຸງການຈັດຕັ້ງປະຕິບັດວຽກງານການແກ້ໄຂຄຳຮ້ອງທຸກ; ໃນລະຫວ່າງວັນທີ 13-14 ທັນວາ 2023 ກຳມາທິການຍຸຕິທຳສະພາແຫ່ງຊາດ ໄດ້ຈັດກອງປະຊຸມຍົກສູງຄຸນນະພາບໃນການແກ້ໄຂຄຳຮ້ອງທຸກຢູ່ໂຮງແຮມເມືອງແທ້ງ, ນະຄອນຫຼວງວຽງຈັນ ໂດຍການເປັນປະທານກ່າວເປີດຂອງທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ, ປະທານກຳມາທິການກົດໝາຍ; ມີທ່ານ ຄຳແພງ ວິລະພັນ ປະທານກຳມາທິການຍຸຕິທຳ, ບັນດາທ່ານຮອງປະທານກຳມາທິການ, ປະທານ-ຮອງປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ ແລະ ຕາງໜ້າ ສສຊ ຈາກ 18 ເຂດເລືອກຕັ້ງທົ່ວປະເທດ, ຮອງປະທານສານປະຊາຊົນສູງສຸດ, ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ຮອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຄະນະກົມ, ຄະນະພະແນກ ພ້ອມດ້ວຍພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ອ່ານຕໍ່ໜ້າ 3

# ຄະນະພັກຮາກຖານ ຄລສ ເຜີຍແຜ່ເອກະສານສຳຄັນຂອງພັກ



(ສພຊ) ເພື່ອເຮັດໃຫ້ບັນດາສະຫາຍສະມາຊິກພັກ, ພະນັກງານ-ລັດຖະກອນ ພາຍໃນຄະນະເລຂາທິການສະພາແຫ່ງຊາດ (ຄລສ) ໄດ້ເຊື່ອມຊຶມ, ຮັບຮູ້, ເຂົ້າໃຈ ແລະ ນຳໄປຈັດຕັ້ງຜັນຂະຫຍາຍກ່ຽວກັບຄຳສັ່ງ, ຄຳແນະນຳ, ມະຕິກອງປະຊຸມຄົບຄະນະກາງສະໄໝຂອງຄະນະບໍລິຫານງານສູນກາງພັກ ແລະ ມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 7 ສະໄໝທີ XI ຕາມໜ້າທີ່ການເມືອງຂອງຕົນ; ຕອນບ່າຍຂອງວັນທີ 11 ທັນວາ 2023 ທີ່ຫໍສະພາແຫ່ງຊາດ ໄດ້ມີກອງປະຊຸມເຜີຍແຜ່ເຊື່ອມຊຶມຜົນສຳເລັດກອງປະຊຸມກາງສະໄໝຂອງຄະນະບໍລິຫານງານສູນກາງພັກ ແລະ ມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 7 ສະໄໝທີ XI ໂດຍການເປັນປະທານຂອງສະຫາຍ ນາງ ປິ່ງຄຳ ລາຊະສິມມາ ກຳມະການສູນກາງພັກ, ເລຂາຄະນະພັກຮາກຖານ ຄລສ; ເຂົ້າຮ່ວມມີສະຫາຍຮອງເລຂາ, ຄະນະປະຈຳ ແລະກຳມະການຄະນະພັກຮາກຖານ, ເລຂາ-ຮອງເລຂາໜ່ວຍພັກ, ສະມາຊິກພັກ, ພະນັກງານ-ລັດຖະກອນ ທີ່ຂຶ້ນກັບຄະນະພັກຮາກຖານຄະນະເລຂາທິການສະພາແຫ່ງຊາດ.

ກອງປະຊຸມ, ໄດ້ຮັບຟັງ

ອ່ານຕໍ່ໜ້າ 4

# ຄະນະສະມາຊິກສະພາແຫ່ງຊາດ ເພດຍິງ ສະຫຼຸບການຈັດຕັ້ງປະຕິບັດວຽກງານປະຈຳປີ 2023



(ສພຊ) ຄະນະສະມາຊິກສະພາແຫ່ງຊາດ (ສສຊ) ເພດຍິງ ຊຸດທີ IX ໄດ້ຈັດກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດວຽກງານຂອງຕົນ ປະຈຳປີ 2023 ຂຶ້ນໃນວັນທີ 13 ທັນວາ 2023 ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ນາງ ທຸມມາລີ ວົງພະຈັນ ປະທານຄະນະ ສສຊ ເພດຍິງ; ມີບັນດາທ່ານ ສສຊ ເພດຍິງ ຈາກ 18 ເຂດເລືອກຕັ້ງໃນທົ່ວປະເທດ ແລະ ພະນັກງານ-ລັດຖະກອນກ່ຽວຂ້ອງເຂົ້າຮ່ວມ.

ໃນກອງປະຊຸມ ໄດ້ຮັບຟັງບົດສະຫຼຸບການຈັດຕັ້ງປະຕິບັດວຽກງານຂອງ ສສຊ ເພດຍິງ ຊຸດທີ IX ປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024, ຜ່ານຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດວ່າດ້ວຍລະບຽບການເຄື່ອນໄຫວຂອງຄະນະ ສສຊ ເພດຍິງ ຊຸດທີ IX; ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມ ໄດ້ຜັດປ່ຽນກັນປະກອບຄຳຄິດຄຳເຫັນໃສ່ບົດສະຫຼຸບ ແລະ ຮ່າງມະຕິດັ່ງກ່າວ.

ທ່ານ ນາງ ທຸມມາລີ ວົງພະຈັນ ໄດ້ກ່າວເປີດກອງປະຊຸມວ່າ: ກອງປະຊຸມຄົບຄະນະຄັ້ງທຳອິດຂອງຄະນະ ສສຊ ເພດຍິງ ຊຸດທີ IX ແລະ ຍັງເປັນໂອກາດດີທີ່ເຮັດໃຫ້ພວກເຮົາໄດ້ມີການພົບປະ, ປຶກສາຫາລື, ສະຫຼຸບຖອດຖອນບົດຮຽນດ້ວຍກັນ ໃນການປະຕິບັດພາລະບົດບາດຂອງ ສສຊ ເພດຍິງ ທີ່ໄດ້ເປັນເຈົ້າການຊຸກຍູ້, ສົ່ງເສີມໃຫ້ຂະແໜງການທີ່ກ່ຽວຂ້ອງ ເອົາໃຈໃສ່ຕາມພາລະບົດບາດຂອງຕົນ ເພື່ອຫັນເອົາເນື້ອໃນຂອງສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ, ການຈັດຕັ້ງປະຕິບັດແຜນດຳເນີນງານແຫ່ງຊາດເພື່ອຄວາມສະເໝີພາບຍິງ-ຊາຍ 5 ປີ ຄັ້ງທີ IV (2021-2025) ມາຈັດຕັ້ງຜັນຂະຫຍາຍໃຫ້ສອດຄ່ອງກັບວຽກງານຕົວຈິງຂອງຕົນ ເປັນຕົ້ນການສ້າງ ແລະ ປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃຫ້ສອດຄ່ອງກັບການປະຕິບັດການສົ່ງເສີມວຽກງານຄວາມສະເໝີພາບຍິງ-ຊາຍ, ການລົບລ້າງທຸກການຈຳແນກ ແລະ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ທັງເປັນນິຕິກຳທີ່ເປັນເຄື່ອງມືເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການໃນການຮັບໃຊ້ໜ້າທີ່ການເມືອງໃນໄລຍະໃໝ່. ມື້ນີ້, ຄະນະສສຊ ເພດຍິງຂອງພວກເຮົາຈຶ່ງໄດ້ຈັດກອງປະຊຸມຄົບຄະນະປະຈຳປີ 2023 ຂອງຕົນຂຶ້ນເພື່ອສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານໃນໜຶ່ງປີຜ່ານມາ ແລະ ກຳນົດທິດທາງແຜນການໃນປີ 2024 ຂອງຄະນະ ສສຊ ເພດຍິງ ຊຸດທີ IX ແລະ ພ້ອມກັນປຶກສາຫາລືວຽກງານຈຳນວນໜຶ່ງທີ່ເປັນຄວາມຮັບຜິດຊອບໜ້າທີ່ການເມືອງຂອງຄະນະ ສສຊ ເພດຍິງ ເປັນຕົ້ນ: ການສະຫຼຸບຕີລາຄາຄືນການຈັດຕັ້ງປະຕິບັດວຽກງານນັບແຕ່ກອງປະຊຸມຄັ້ງປະຖົມມະລຶກເປັນຕົ້ນມາ ແລະ ກຳນົດທິດທາງແຜນການປະຈຳປີ 2024; ປຶກສາຫາລື ແລະ ສ້າງຄວາມເປັນເອກະພາບຕໍ່ຮ່າງລະບຽບການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະ ສສຊ ເພດຍິງ ຊຸດທີ IX, ການຈັດຕັ້ງປະຕິບັດບັນດາຄາດໝາຍທີ່ຕິດພັນກັບຄວາມສະເໝີພາບຍິງ-ຊາຍເພື່ອໃຫ້ນຳໄປຈັດຕັ້ງປະຕິບັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

**(ນາງ ກຸກກິກ ບຸດດາໄຊ)**

## ຮຽບຮຽງ...

(ຕໍ່ຈາກໜ້າ 1)

ບັບນີ້ ເປັນກົດໝາຍສະບັບໜຶ່ງທີ່ຜ່ານການຮັບຮອງຈາກ ສສຊ ດ້ວຍຄະແນນ 99,34 ສ່ວນຮ້ອຍ ເປັນຄະແນນທີ່ສູງກວ່າໝູ່ໃນຈຳນວນກົດໝາຍທີ່ຖືກພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 6. ກອງປະຊຸມຂອງພວກເຮົາ ດຳເນີນໄປເປັນເວລາ 1 ວັນ ເພື່ອພ້ອມກັນຄົ້ນຄວ້າຄືນບັນດາຄຳເຫັນຂອງສະມາຊິກສະພາແຫ່ງຊາດ ເພື່ອເລືອກເຟັ້ນເອົາຄຳເຫັນທີ່ມີເຫດມີຜົນປັບປຸງໃສ່ກົດໝາຍ ແນໃສ່ເຮັດໃຫ້ເນື້ອໃນຂອງກົດໝາຍມີຄວາມຄົບຖ້ວນ, ສົມບູນ ແລະ ສາມາດຈັດຕັ້ງປະຕິບັດໄດ້ ເຊິ່ງມີ 15 ມາດຕາ ສາມາດປັບປຸງໄດ້ ແລະ ຍັງອີກ 15 ມາດຕາ ບໍ່ສາມາດປັບປຸງໄດ້; ສະນັ້ນ, ເພື່ອຮັບປະກັນໃຫ້ບັນດາຄຳເຫັນທີ່ ສສຊ ໄດ້ປະກອບຄຳເຫັນໃສ່ ໄດ້ຮັບການຄົ້ນຄວ້າພິຈາລະນາຢ່າງເລິກເຊິ່ງ ສະເໜີໃຫ້ບັນດາທ່ານໄດ້ພ້ອມກັນຄົ້ນຄວ້າຕື່ມຕໍ່ຄຳເຫັນທີ່ບໍ່ສາມາດປັບປຸງໄດ້ນັ້ນ ຄະນະຮັບຜິດຊອບໄດ້ໃຫ້ເຫດຜົນພຽງພໍແລ້ວບໍ່ ຫຼື ຕ້ອງໄດ້ປັບປຸງຄືແນວໃດ ເພື່ອເຮັດໃຫ້ກົດໝາຍສະບັບນີ້ປະກາດໃຊ້ ແລ້ວໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ.

(ນາງ ສຸພາວັນ ທອມສະນິດ)

## ຍົກສູງ...

(ຕໍ່ຈາກໜ້າ 1)

ກອງປະຊຸມໄດ້ຮັບຟັງການສະເໜີບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານການແກ້ໄຂຄຳສະເໜີຂອງລັດຖະບານໃນໄລຍະຜ່ານມາ ແລະ ທິດທາງໃນຕໍ່ໜ້າ, ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານການແກ້ໄຂຄຳຮ້ອງຟ້ອງຂອງອົງການສືບສວນ-ສອບສວນ ໃນໄລຍະຜ່ານມາແລະທິດທາງໃນຕໍ່ໜ້າ, ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານການແກ້ໄຂຄຳຮ້ອງຟ້ອງຂອງອົງການໄອຍະການປະຊາຊົນສູງສຸດ ໃນໄລຍະຜ່ານມາ ແລະ ທິດທາງໃນຕໍ່ໜ້າ, ບົດລາຍງານການແກ້ໄຂຄຳສະເໜີ ແລະ ຄຳຮ້ອງຂໍຄວາມເປັນທຳທີ່ພົວພັນກັບການປະ ຕິບັດຄຳຕັດສິນຂອງສານໃນໄລຍະຜ່ານມາ ແລະ ທິດທາງໃນຕໍ່ໜ້າ, ບົດລາຍງານກ່ຽວກັບການແກ້ໄຂຄຳສະເໜີຂອງອົງການກວດກາແຫ່ງລັດ ໃນໄລຍະຜ່ານມາ ແລະ ທິດທາງໃນຕໍ່ໜ້າ ແລະ ບົດລາຍງານກ່ຽວກັບການແກ້ໄຂຄຳສະເໜີຂອງສູນກາງແນວລາວສ້າງຊາດ (ຕາງໜ້າອົງການຈັດຕັ້ງມະຫາຊົນ) ໃນໄລຍະຜ່ານມາ ແລະ ທິດທາງໃນຕໍ່ໜ້າ; ຈາກນັ້ນ, ຜູ້ແທນກອງປະຊຸມໄດ້ຜັດປ່ຽນກັນຂຶ້ນປະກອບຄຳຄິດຄຳເຫັນໃສ່ບົດລາຍງານຕ່າງໆ ເພື່ອແລກປ່ຽນບົດຮຽນເຊິ່ງກັນແລະກັນ ຕາມຄຳເຈາະຈີ້ມຂອງປະທານກອງປະຊຸມ ພ້ອມທັງຮັບຟັງຄຳຊີ້ແຈງຈາກບັນດາທ່ານຜູ້ຕາງໜ້າຈາກກຳມາທິການຍຸຕິທຳ, ກະຊວງແລະອົງການຕ່າງໆ ທີ່ໄດ້ຂຶ້ນສະເໜີບົດລາຍງານດັ່ງກ່າວ.

ໃນໂອກາດນີ້, ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ໄດ້ມີຄຳເຫັນໂອ້ລົມຕໍ່ກອງປະຊຸມ ເຊິ່ງກ່ອນອື່ນທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນສຳເລັດຂອງກອງປະຊຸມໃນຄັ້ງນີ້ ພ້ອມທັງຕີລາຄາສູງຕໍ່ການດຳເນີນກອງປະຊຸມເຖິງວ່າເປັນຄັ້ງທຳອິດ ແຕ່ກໍສາມາດຄົ້ນຄວ້າ ແລະ ປຶກສາຫາລືກັນຫຼາຍບັນຫາທີ່ສຳຄັນ ແລະ ຈຳເປັນ ແນໃສ່ແກ້ໄຂສິ່ງອຸດຕັນ ແລະ ສິ່ງທ້າທາຍຢູ່ໃນແຕ່ລະອົງການ, ກະຊວງຂອງຕົນ; ສະນັ້ນ, ຕໍ່ກັບບັນດາຂໍ້ສະເໜີ ແລະ ທິດທາງ ທີ່ແຕ່ລະອົງການໄດ້ສະເໜີມາ ລ້ວນແລ້ວແຕ່ແມ່ນຄວາມຮັບຜິດຊອບລວມຂອງອົງການລັດ ເຊິ່ງຈະຕ້ອງໄດ້ພ້ອມກັນຮີບຮ້ອນປັບປຸງ, ແກ້ໄຂໃຫ້ທັນການ, ເດັດຂາດ ແລະ ເຂັ້ມງວດຕາມກົດໝາຍ; ຮຽກຮ້ອງມາຍັງບັນດາທ່ານ ການ ນຳທຸກພາກສ່ວນ ສືບຕໍ່ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ ໃຫ້ຖັນແຖວສະມາຊິກພັກ, ພະນັກງານ ໂດຍສະເພາະພະນັກງານ-ລັດຖະກອນ ຜູ້ຮັບຜິດຊອບຄົ້ນຄວ້າວຽກງານຄຳຮ້ອງທຸກໂດຍກົງ ເພື່ອເສີມຂະຫຍາຍດ້ານດີ ຜົນງານທີ່ຍາດມາໄດ້ໃນໄລຍະຜ່ານມາແລະເພີ່ມທະວີບົດບາດເປັນໃຈກາງໃນການຮັກສາຄວາມຍຸຕິທຳ, ຕັດສິນໃຈຜ່າຟັນບັນຫາຫຍຸ້ງຍາກ, ສິ່ງທ້າທາຍຕ່າງໆ ແລະເປັນເຈົ້າການຄົ້ນຄວ້າ, ປັບປຸງແກ້ໄຂຂອດຂັ້ນທີ່ເປັນສິ່ງອຸດຕັນ ເພື່ອຮັບປະກັນໃຫ້ການປະຕິບັດພາລະບົດບາດຂອງແຕ່ລະພາກສ່ວນມີປະສິດທິພາບ ແລະ ໄດ້ຮັບປະສິດທິຜົນສູງຂຶ້ນກວ່າເກົ່າ.

(ສອນສັກ ວັນວິໄຊ)

## ເລື່ອງເດັ່ນ ຂ່າວເດັດ

*# ຄັດໂດຍ: ທອມສະນິດ*

*❐ ມາຮອດປັດຈຸບັນ, ຕາໜ່າງສາທາລະນະສຸກ ມີໂຮງໝໍສູນກາງ 5 ແຫ່ງ, ສູນປິ່ນປົວສະເພາະທາງ 3 ແຫ່ງ, ໂຮງໝໍແຂວງ 17 ແຫ່ງ, ໂຮງໝໍເມືອງ 135 ແຫ່ງ ແລະ ສຸກສາລາ 1.080 ແຫ່ງ; ໃນປີ 1995 ອັດຕາການຕາຍຂອງເດັກນ້ອຍ ລຸ່ມ 1 ປີ ແມ່ນ 104/1.000 ເດັກເກີດມີຊີວິດ, ມາຮອດ 9 ເດືອນປີ 2023, ໂຕເລກລາຍງານຈາກລະບົບຂໍ້ມູນຂ່າວສານສາທາລະນະສຸກ (DHIS2) ແມ່ນຍັງເຫຼືອພຽງ 46/1.000 ເດັກເກີດມີຊີວິດ; ສຳລັບອັດຕາສ່ວນການຕາຍຂອງແມ່ທູດລົງຈາກ 656/100.000 ເດັກເກີດມີຊີວິດໃນປີ 1995 ມາຮອດປີ 2022 ແລະ ອີງຕາມໂຕເລກລາຍງານຂອງອົງການສະຫະປະຊາຊາດ ຍັງເຫຼືອ 126/100.000 ເດັກເກີດມີຊີວິດ. ໃນນັ້ນ, ອາຍຸຍືນສະເລ່ຍ ລວມຂອງປະຊາຊົນລາວໄດ້ເພີ່ມຂຶ້ນຈາກ 51 ປີ ໃນປີ 1995 ມາເປັນ 67 ປີໃນປີ 2022.*

***ໜສພ. ປະຊາຊົນ 12/12/2023***

*❐ ເປີດໂຕບົດລາຍງານການເຄື່ອນຍ້າຍຖິ່ນຖານ ໃນ ສປປ ລາວ ສະບັບທຳອິດ ເຊິ່ງບົດລາຍງານດັ່ງກ່າວ ແມ່ນການສົ່ງເສີມ ແລະ ສະໜັບສະໜູນການສ້າງນະໂຍບາຍ ໂດຍອີງໃສ່ຫຼັກຖານຂໍ້ມູນ ການຄົ້ນຄວ້າກ່ຽວກັບການເຄື່ອນຍ້າຍຖິ່ນຖານ ຢູ່ໃນ ສປປ ລາວ ເພື່ອໃຫ້ຂະແໜງການ ແລະ ພາກສ່ວນຕ່າງໆ ໄດ້ຮັບຮູ້ ແລະ ນຳໃຊ້ເຂົ້າສູ່ວຽກງານຄົ້ນຄວ້າ, ວາງແຜນ ແລະ ຕິດຕາມວຽກງານດັ່ງກ່າວ; ສຳລັບ ສປປ ລາວ ລັດຖະບານ ກຳລັງຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX ເຊິ່ງໃນ 6 ໝາກຜົນທີ່ໄດ້ກຳນົດໄວ້ ລ້ວນແຕ່ໄດ້ຮັບຜົນສະທ້ອນຈາກສະພາບການເຄື່ອນຍ້າຍຖິ່ນຖານ ແລະ ບັນດານະໂຍບາຍຕ່າງໆທີ່ຕິດພັນປິ່ນອ້ອມ ໂດຍສະເພາະແລ້ວ ສປປ ລາວ ແມ່ນປະເທດໜຶ່ງທີ່ຕັ້ງຢູ່ໃນໃຈກາງອະນຸພາກພື້ນລຸ່ມແມ່ນ້ຳຂອງ ແລະ ມີຊາຍແດນຕິດກັບ 5 ປະເທດ ແລະ ມີຈຳນວນປະຊາກອນ ສປປ ລາວ ອອກໄປສູ່ຕ່າງປະເທດຈຳນວນຫຼາຍ ແລະ ມີທ່າອ່ຽງເພີ່ມຂຶ້ນໃນ 2 ທົດສະວັດທີ່ຜ່ານມາ.*

***ໜສພ. ວຽງຈັນໃໝ່ 13/12/2023***

*❐ ກະຊວງປ້ອງກັນຄວາມສະຫງົບ ໃຫ້ຮູ້ວ່າ: ຜ່ານການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ນັບແຕ່ເດືອນກໍລະກົດ 2021-ພະຈິກ 2023 ການແກ້ໄຂ ແລະ ຕ້ານຢາເສບຕິດ ແມ່ນໄດ້ປະຕິບັດໄປຕາມຄຳຂວັນທີ່ວ່າ "ອັດ 3 ທາງ, ມ້າງ 3 ເປົ້າ, ເປັນເຈົ້າ 3 ຫຼັກການ" ເຊິ່ງສາມາດແກ້ໄຂຄະດີຢາເສບຕິດໄດ້ທັງໝົດ 11.558 ເລື່ອງ, ຈັບຜູ້ຖືກຫາໄດ້ 17.074 ຄົນ, ຍິງ 1.913 ຄົນ ເປັນຄົນຕ່າງປະເທດ 346 ຄົນ, ຍິງ 24 ຄົນ, ຢຶດຢາບ້າໄດ້ 330.751.984 ເມັດ, ຢາບ້າເປັນຝຸ່ນ 59,52 ກິໂລກຣາມ ນ້ຳໜັກລວມ 33.134,71 ກິໂລກຣາມ, ຢາໄອສ 8.712,72 ກິໂລກຣາມ, ເຮໂຣອິນ 800,86 ກິໂລກຣາມ, ຄັນຊາ 21.566,41 ກິໂລກຣາມ, ຢາຝິ່ນ 386,39 ກິໂລກຣາມ, ຢາອີ 8.575 ເມັດ ກັບ 31 ກິໂລກຣາມ, ແປ້ງຝຸ່ນປະສົມຢາເສບຕິດ 51.169,52 ກິໂລກຣາມ, ເຄຕາມີນ 2.977,53 ກິໂລກຣາມ, ໂຄເຄນ 3 ກິໂລກຣາມ, ຄາເຟອີນ 168 ກຣາມ, ນ້ຳຢາສານເຄມີ 10,84 ກຣາມ ແລະ ນ້ຳກົດ 9.400 ລິດ, ຢຶດລົດໃຫຍ່ໄດ້ 384 ຄັນ, ລົດຈັກ 1.932 ຄັນ, ເຮືອ 6 ລຳ, ອາວຸດປືນ 73 ກະບອກ, ລູກປືນ 1.496 ລູກ, ໝາກແຕກ 1 ໜ່ວຍ ແລະ ຍັງສາມາດແກ້ໄຂຈຸດມົ້ວສຸມຮ້ານບັນເທີງຢູ່ບັນດາຕົວເມືອງໃຫຍ່ອີກຫຼາຍແຫ່ງ.*

***ໜສພ. ປະເທດລາວ 14/12/2023***

# ການຈັດຕັ້ງປະຕິບັດແຜນເງິນຕາໃນໄລຍະກາງສະໄໝ ຕໍ່ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ

ຕໍ່ຈາກສະບັບກ່ອນ...

-ການນຳໃຊ້ເງິນອີເລັກໂຕຣນິກ (E-Monney) ເຫັນວ່າມີການຂະຫຍາຍຕົວຫຼາຍເຊັ່ນກັນ ໂດຍສະເພາະແມ່ນການອອກເງິນອີເລັກໂຕຣນິກຂອງບໍລິສັດໂທລະຄົມມະນາຄົມ (U-Monney ແລະ M-Monney ເປັນຕົ້ນ) ເຊິ່ງສາມາດນຳໃຊ້ໄດ້ຢ່າງກວ້າງຂວາງ ວ່ອງໄວ ໂດຍຜ່ານປ່ອງບໍລິການຂອງຕົວແທນບໍລິສັດໂທລະຄົມ ເຫັນວ່າ ຈຳນວນຜູ້ໃຊ້ບໍລິການ ເພີ່ມຂຶ້ນ 53,79% ແລະ ມູນຄ່າເພີ່ມຂຶ້ນ 124,55%;

+ ການຊຳລະກັບຕ່າງປະເທດ:

- ສຳເລັດການເຊື່ອງລະບົບການຊຳລະໂດຍກົງກັບ ສປ. ຈີນ ໂດຍຜ່ານລະບົບ CIPS ແລະ ໄດ້ສ້າງທະນາຄານທຸລະກິດຕົວແທນ ເພື່ອດຳເນີນການຊຳລະສະສາງເງິນຢວນ;

- ການເຊື່ອມຈອດເຄືອງມືການຊຳລະດັບສາກົນຄື: 1 ສຳເລັດການເຊື່ອມຕໍ່ລະບົບຊຳລະຍ່ອຍຂ້າມແດນໃນຮູບແບບ QR Code ລະຫວ່າງ ລາວ-ກຳປູເຈຍ ໄລຍະທີ 1 ໂດຍທີ່ຄົນກຳປູເຈຍ ສາມາດນຳ QR ສະແກນໃນດິນແດນລາວໄດ້; 2 ໄດ້ເຈລະຈາ ກັບ ທະນາຄານແຫ່ງລັດຫວຽດນາມ ກ່ຽວກັບການກະກຽມການເຊື່ອມຕໍ່ລະບົບຊຳລະຍ່ອຍຂ້າມແດນໃນຮູບແບບ QR Code ລະຫວ່າງ ລາວ-ຫວຽດນາມ; 3 ສຳເລັດສ້າງບົດບັນທຶກຄວາມເຂົ້າໃຈ (MOU)ການເຊື່ອມຊຳລະລະຫວ່າງລະບົບຊຳລະເງິນຂອງລາວ (LapNet) ແລະ ລະບົບຊຳລະເງິນຂອງຈີນ



(UnionPayInternational-UPI); 4 ສຳເລັດການເຈລະຈາການຊຳລະຍ່ອຍລະຫວ່າງ ລາວ-ໄທ ແລະ 0 ລິເລີ່ມການເປີດການເປີດການໂອນເງິນກັບປະເທດຂອງແຮງງານລາວ ລະຫວ່າງ ລາວ-ເກົາຫຼີ, ທັງສາມາດຮອງຮັບນັກທ່ອງທ່ຽວເກົາຫຼີສາມາດຊຳລະຢູ່ລາວໄດ້ໃນຮູບແບບ QR ເຊິ່ງຈະຊ່ວຍຫຼຸດຜ່ອນການຖືເງິນສົດຂອງນັກທ່ອງທ່ຽວ ແລ້ວມາແລກປ່ຽນຊະຊາຍ ແລະ ທັງຫຼຸດຜ່ອນຄວາມຕ້ອງການແລກເງິນຕາໃນສັງຄົມຂອງຄົນລາວ ທີ່ໄປເຄື່ອນໄຫວຢູ່ຕ່າງປະເທດ.

6). ວຽກງານຕະຫຼາດທຶນ.

ໄລຍະປີ 2021 ເປັນຕົ້ນມາ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ໄດ້ສຳເລັດຫຼາຍໜ້າວຽກ ຄື:

-ດ້ານວຽກງານນິຕິກຳ: ໄດ້ປັບປຸງດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄຄຊ; ສຳເລັດການສ້າງແລະປັບປຸງນິຕິກຳໃຕ້ກົດໝາຍວ່າດ້ວຍຫຼັກຊັບ ຈຳນວນ 55 ສະບັບ ອັນພົ້ນເດັ່ນແມ່ນໄດ້ອອກຂໍ້ຕົກລົງວ່າດ້ວຍການຂໍອະນຸຍາດດຳເນີນທຸລະກິດຂອງບໍລິສັດ ບໍລິຫານກອງທຶນເພື່ອການລົງທຶນ; ຂໍ້ຕົກລົງວ່າດ້ວຍການກວດກາບໍລິສັດຫຼັກຊັບ (ສະບັບປັບປຸງ) ແລະ ຂໍ້ຕົກລົງວ່າດ້ວຍການຮັບຮອງບໍລິສັດກວດສອບ (ສະບັບປັບປຸງ); ສຳເລັດການສ້າງ ແລະ ປັບປຸງນິຕິກຳຕິດພັນກັບຕົວຊີ້ວັດທີ 6 ກ່ຽວກັບການປົກປ້ອງຜູ້ລົງທຶນລາຍຍ່ອຍ; ສຳເລັດການຄົ້ນຄວ້ານະໂຍບາຍຕ່າງໆ ຈຳນວນ 4 ສະບັບ ເປັນຕົ້ນ ນະໂຍບາຍດ້ານອາກອນຂອງບໍລິສັດຈົດທະບຽນ ແລະ ການຍົກເວັ້ນຄ່າທຳນຽມຊື້ຂາຍຫຼັກຊັບ;

- ດ້ານການຄຸ້ມຄອງບໍລິສັດຈົດທະບຽນ: ໄດ້ສຳເລັດການຄົ້ນຄວ້າອະນຸມັດການອອກຈຳໜ່າຍຮຸ້ນກູ້ຢູ່ປະເທດໄທໃຫ້ແກ່ 3 ບໍລິສັດ ລວມຈຳນວນ 6 ຄັ້ງ ແລະ ໄດ້ອະນຸມັດການອອກຈຳໜ່າຍຮຸ້ນກູ້ພາຍໃນປະເທດ ໃນວົງຈຳກັດ 1 ບໍລິສັດ ແລະ ສຳເລັດການຄົ້ນຄວ້າຖອນການຈົດທະບຽນຂອງບໍລິສັດ ລາວເວີນມະຫາຊົນ ອອກຈາກ ຕລຊລ. ພ້ອມນີ້, ໄດ້ສຸມໃສ່ການສ້າງຄວາມເຂັ້ມແຂງໃຫ້ແກ່ບັນດາບໍລິສັດຈົດທະບຽນ ໂດຍການຊຸກຍູ້ບໍລິສັດຈົດທະບຽນຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ແລະ ຄຳແນະນຳວ່າດ້ວຍການຄຸ້ມຄອງບໍລິຫານ CG Score-card;

- ດ້ານການຄຸ້ມຄອງຕະຫຼາດຫຼັກຊັບລາວ: ໄດ້ສຳເລັດການຊຸກຍູ້ ແລະ ຈັດກອງປະຊຸມຜູ້ຖືຮຸ້ນ ລະຫວ່າງ ທຫລ ແລະຕະຫຼາດຫຼັກຊັບ ສ.ເກົາຫຼີ; ສຳເລັດການຄົ້ນຄວ້ານຳສະເໜີຫ້ອງວ່າການສຳນັກງານນາຍົກ ເພື່ອແຕ່ງຕັ້ງຄະນະຄົ້ນຄວ້າພັນທະບັດສີຂຽວ, ສັງຄົມ ແລະ

ອ່ານຕໍ່ສະບັບໜ້າ

# ນາຍົກລັດຖະມົນຕີ ລາຍງານສະພາບການເຄື່ອນໄຫວວຽກງານ ທີ່ພົ້ນເດັ່ນກາງສະໄໝ 5 ປີ ຄັ້ງທີ IX

ຕໍ່ຈາກສະບັບກ່ອນ...

4) ສຸມໃສ່ຍູ້ແຮງການສົ່ງເສີມການຜະລິດກະສິກຳ ເພື່ອຄ້ຳປະກັນສະບຽງອາຫານ, ທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກໃຫ້ຫຼາຍ; ສືບຕໍ່ສົ່ງເສີມຈຸລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃຫ້ແຂງແຮງກວ່າເກົ່າ ໂດຍເລັ່ງການຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອ ຕາມທີ່ລັດຖະບານໄດ້ຕົກລົງແລ້ວ ຕາມຂໍ້ຕົກລົງ 93/ນຍ ໃຫ້ເປັນຮູບປະທຳ.

5) ເລັ່ງປັບປຸງຂັ້ນຂອດການບໍລິການຂົນສົ່ງສິນສິນຄ້າຜ່ານດ່ານຊາຍແດນ ແລະ ບັນດາທ່າບົກໃຫ້ງ່າຍດາຍ, ວ່ອງໄວ, ສະດວກກວ່າເກົ່າ ແລະ ຫຼຸດຄ່າໃຊ້ຈ່າຍທີ່ບໍ່ຈຳເປັນເພື່ອສາມາດແຂ່ງຂັນໃນການ ເຊື່ອມຈອດ ແລະ ເຊື່ອມໂຍງກັບສາກົນ ໂດຍເລັ່ງຄົ້ນຄວ້າການເກັບຄ່າບໍລິການຜ່ານທ່າບົກ, ການຂົນສົ່ງ ສິນຄ້າຜ່ານທາງລົດໄຟ, ທາງລົດບັນທຸກຂົນສົ່ງສິນຄ້າ,



ຄ່າທຳນຽມ, ຄ່າບໍລິການຜ່ານດ່ານ ໃຫ້ສົມເຫດສົມຜົນ ແລະ ເປັນເອກະພາບກັນ;

6) ເລັ່ງການຈັດຕັ້ງປະຕິບັດມະຕິ 09/ລບ ກ່ຽວກັບການປະຕິບັດນະໂຍບາຍ ແລະ ມາດຕະການແກ້ໄຂບັນຫາຄູອາສາສະໝັກ, ການຂາດແຄນຄູສອນຢູ່ເຂດຊົນນະບົດ ໃຫ້ເປັນຮູບປະທຳໂດຍໄວ, ທ້ອງຖິ່ນໃດ ມີຄວາມພ້ອມກໍແມ່ນເລີ່ມປະຕິບັດໃນໄຕມາດ 4 ປີ 2023 ໄດ້ເລີຍ. ພ້ອມກັນນີ້, ກໍສືບຕໍ່ກະກຽມຄວາມພ້ອມຮອບດ້ານ ເພື່ອເປີດປີທ່ອງທ່ຽວລາວໃນປີ 2024 ໃຫ້ຮັບປະກັນທາງດ້ານປະສິດທິພາບ ແລະ ປະສິດທິຜົນ.

7) ສຸມໃສ່ກະກຽມຄວາມພ້ອມຮອບດ້ານໃຫ້ແກ່ການເປັນປະທານອາຊຽນຂອງລາວ ໃນປີ 2024, ໃນນີ້ລວມທັງວຽກງານປ້ອງກັນຊາດແລະປ້ອງກັນຄວາມສະຫງົບ, ການກະກຽມທາງດ້ານການຄ້ຳປະກັນທາງດ້ານຄວາມສະດວກ, ຄວາມສະອາດ ແລະ ການບໍລິການຕ່າງໆ ເພື່ອເປັນການສ້າງສະພາບແວດລ້ອມທີ່ດີ ໃຫ້ແກ່ແຂກທ່ອງທ່ຽວຕ່າງໆມາທ່ຽວປະເທດລາວ ໃຫ້ຫຼາຍຂຶ້ນກວ່າເກົ່າ. ພ້ອມກັນນັ້ນ ກໍສຸມໃສ່ຈັດຕັ້ງຜັນຂະຫຍາຍບັນດາຂໍ້ຕົກລົງ, ສັນຍາ ແລະ ສົນທິສັນຍາທີ່ລາວເຮົາໄດ້ລົງນາມ ແລະ ເປັນພາຄີ ໂດຍສະເພາະແຜນການຮ່ວມກັບປະເທດເພື່ອນມິດໃຫ້ເປັນຮູບປະທຳ; ສືບຕໍ່ເຄື່ອນໄຫວການຕ່າງປະເທດຢ່າງມີໄຫວພິບ ແລະ ທັນກັບສະພາບການຕາມທິດທາງການທູດປ້ອງກັນເຫດແບບບຸກທະລຸ ສ້າງການຫັນປ່ຽນໃໝ່ຢ່າງແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ.

## ຄະນະພັກ...

(ຕໍ່ຈາກໜ້າ 1)

ການເຜີຍແຜ່ຄຳສັ່ງແນະນຳວ່າດ້ວຍການຜັນຂະຫຍາຍຜົນສຳເລັດກອງປະຊຸມຄົບຄະນະກາງສະໄໝຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI ສະບັບເລກທີ 434/ຄອສພ, ລົງວັນທີ 18 ກັນຍາ 2023; ຄຳແນະນຳຂອງຄະນະໂຄສະນາອົບຮົມສູນກາງພັກ ສະບັບເລກທີ 23/ຄອສພ, ລົງວັນທີ 28 ກັນຍາ 2023; ມະຕິກອງປະຊຸມຄົບຄະນະກາງສະໄໝຂອງຄະນະບໍລິຫານງານສູນກາງພັກສະໄໝທີ XI; ເອກະສານຕີລາຄາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ XI ຂອງພັກ ໃນໄລຍະກາງສະໄໝ; ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ໃນກາງສະໄໝ ຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ແລະ ທິດທາງແຜນການທ້າຍສະໄໝຮອດປີ 2025; ບົດສຳຫຼວດການນຳພາລວມໃນໄລຍະກາງສະໄໝຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI; ຄວາມເຫັນສະຫຼຸບວາລະເປີດກວ້າງ ແລະ ວາລະພາຍໃນຂອງສະຫາຍເລຂາທິການໃຫຍ່ແລະການເຜີຍແຜ່ມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 7 ສະໄໝທີ XI.

**(ນາງ ສຸພາວັນ ທອມສະນິດ)**

## ກຳມາທິການ...

(ຕໍ່ຈາກໜ້າ 1)

(ສພຊ) ວັນທີ 14-15 ທັນວາ 2023 ຢູ່ຫໍສະພາແຫ່ງຊາດ ໄດ້ມີກອງປະຊຸມຄົບຄະນະຂອງກຳມາທິການການຕ່າງປະເທດ ໂດຍການເປັນປະທານຮ່ວມຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ຜູ້ຊີ້ນຳວຽກງານການຕ່າງປະເທດ; ທ່ານ ສະເຫຼີມໄຊ ກົມມະສິດ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດ ແລະ ທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ; ເຂົ້າຮ່ວມມີບັນດາທ່ານປະທານ-ຮອງປະທານກຳມາທິການພາຍໃນສະພາແຫ່ງຊາດ, ຮອງລັດຖະມົນຕີ, ບັນດາສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງທີ່ສັງກັດກຳມາທິການການຕ່າງປະເທດ, ຕາງໜ້າກະຊວງແຜນການ ແລະ ການລົງທຶນ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ຄະນະກຳມະການຮ່ວມມືລາວ-ຫວຽດນາມ, ຄະນະກຳມະການຮ່ວມມືລາວ-ຈີນພ້ອມດ້ວຍພະນັກງານວິຊາການທີ່ກ່ຽວຂ້ອງຈາກສະພາແຫ່ງຊາດ; ພ້ອມນັ້ນ, ຍັງໄດ້ຮັບການເຂົ້າຮ່ວມຜ່ານທາງອອນລາຍຈາກສະຖານທູດລາວປະຈຳຢູ່ຕ່າງປະເທດອີກຈຳນວນໜຶ່ງ.

ກອງປະຊຸມ ໄດ້ຮັບຟັງບົດສະຫຼຸບການເຄື່ອນໄຫວວຽກງານການຕ່າງປະເທດປະຈຳປີ 2023 ແລະສະເໜີແຜນການປະຈຳປີ 2024; ລາຍງານກ່ຽວກັບການເຄື່ອນໄຫວວຽກງານຕ່າງປະເທດຂອງລັດຖະບານປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024 ແລະ ບັນຫາທີ່ພົວພັນກັບຊາຍແດນແຫ່ງຊາດ, ບັນຫາຕາຝັ່ງເຈື່ອນທີ່ກະທົບຕໍ່ເສັ້ນຊາຍແດນ ແລະ ສະພາບການພົ້ນເດັ່ນໃນພາກພື້ນ ແລະ ສາກົນ, ການຄຸ້ມຄອງບັນດາອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ (INGOs) ແລະອົງການຈັດຕັ້ງທາງສັງຄົມ (CSOs); ລາຍງານກ່ຽວກັບການຄຸ້ມຄອງແຮງງານລາວທີ່ອອກໄປເຮັດວຽກຢູ່ຕ່າງປະເທດພາຍຫຼັງທີ່ ສປປລາວ ໄດ້ເປີດປະເທດຢ່າງເຕັມຮູບແບບ; ລາຍງານກ່ຽວກັບການຄຸ້ມຄອງແຫຼ່ງທຶນການຊ່ວຍເຫຼືອລ້າເພື່ອການພັດທະນາ (ODA); ລາຍງານກ່ຽວກັບຜົນການຮ່ວມມືລາວ-ຫວຽດນາມ ປະຈຳປີ 2023 ແລະ ແຜນການຮ່ວມມືປະຈຳປີ 2024; ລາຍງານກ່ຽວກັບຜົນການຮ່ວມມືລາວ-ຈີນ ປະຈຳປີ 2023 ແລະແຜນການຮ່ວມມືປະຈຳປີ 2024; ລາຍງານສະພາບການທີ່ພົ້ນເດັ່ນການປ້ອງກັນຕາຝັ່ງເຈື່ອນ ແລະ ການດູດຫີນດູດຊາຍຕາມລຳແມ່ນ້ຳຂອງໃນປີ 2023 ແລະທິດທາງແຜນການປີ 2024; ແລະ ລາຍງານກ່ຽວກັບສະພາບການທີ່ພົ້ນເດັ່ນຢູ່ຕ່າງປະເທດຈຳນວນໜຶ່ງ ຈາກສະຖານເອກອັກຄະລັດຖະທູດລາວທີ່ປະຈຳຢູ່ຕ່າງປະເທດ.

ໃນໂອກາດນີ້, ທ່ານ ສັນຍາ ປຣະເສີດ ໄດ້ມີຄຳເຫັນຕໍ່ກອງປະຊຸມວ່າ: ເພື່ອເຮັດໃຫ້ກອງປະຊຸມຄັ້ງນີ້ປະ ສົບຜົນສຳເລັດຕາມຈຸດປະສົງລະດັບຄາດໝາຍ ຮຽກຮ້ອງມາຍັງບັນດາທ່ານກຳມະການຂອງກຳມາທິການການຕ່າງປະເທດ ແລະບັນດາທ່ານຜູ້ແທນທີ່ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ຈົ່ງໄດ້ຍົກສູງຄວາມຮັບຜິດຊອບດ້ານການເມືອງ, ສຸມທຸກສະຕິປັນຍາເຂົ້າໃນການຄົ້ນຄວ້າ, ປະກອບຄຳຄິດຄຳເຫັນໃສ່ການເຄື່ອນໄຫວວຽກງານຂອງກຳມາທິການການຕ່າງປະເທດຢ່າງມີຈຸດສຸມ ຮັບປະກັນຄວາມຖືກຕ້ອງ, ສອດຄ່ອງກັບທິດທາງແຜນການລວມຂອງສະພາແຫ່ງຊາດ, ສ່ອງແສງໃຫ້ເຫັນດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ ແລະ ວິທີການແກ້ໄຂ ແນໃສ່ເຮັດໃຫ້ການເຄື່ອນໄຫວວຽກງານການຕ່າງປະເທດ ມີຄຸນນະພາບ ແລະ ປະສິດທິພາບສູງ ຮັບໃຊ້ໜ້າທີ່ການເມືອງຂອງພັກ ແລະ ຜົນປະໂຫຍດຂອງປະຊາຊົນຢ່າງແທ້ຈິງ, ຜັນຂະຫຍາຍວຽກງານຂອງກຳມາທິການການຕ່າງປະເທດ ໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ ແລະ ສະພາບຄວາມເປັນຈິງແຫ່ງການພັດທະນາເສດຖະກິດ-ສັງຄົມໃນໄລຍະໃໝ່.

**(ນາງ ໄຊໂສພາພອນ ມົ່ງມຸງຄຸນ)**

## ປະທານ ໄກສອນ...

(ຕໍ່ຈາກໜ້າ 1)

ຢ່າງໃດກໍຕາມ, ໃນສະພາບປັດຈຸບັນ ພວກເຮົາຕ່າງຮູ້ ແລະ ເຫັນແຈ້ງວ່າ: ມີຄວາມຫຍຸ້ງຍາກ, ສິ່ງທ້າທາຍທົດສອບຕ່າງໆທີ່ໜັກໜ່ວງສົມຄວນ, ມີຫຼາຍບັນຫາທີ່ເຄັ່ງຮ້ອນ ເປັນຕົ້ນ ບັນຫາເງິນກີບອ່ອນຄ່າ, ບັນຫາເງິນເຟີ້ ແລະ ລາຄາສິນຄ້າທີ່ນັບມື້ເພີ່ມຂຶ້ນ ເຊິ່ງໄດ້ກະທົບຕໍ່ການດໍາລົງຊີວິດຂອງພະນັກງານ, ທະຫານ-ຕໍາຫຼວດ ແລະ ປະຊາຊົນທຸກຄົນ. ສະນັ້ນ, ຈຶ່ງຮຽກຮ້ອງພວກເຮົາທຸກຄົນຕ້ອງເດັດດ່ຽວບຸກບືນຕໍ່ສູ້ຜ່ານຜ່າກັບສະພາບການຫຍຸ້ງຍາກນີ້ໄປໃຫ້ໄດ້. ໃນປຶ້ມ ໄກສອນ ພົມວິຫານ ພົມ 4 ດ້ານ ກໍໄດ້ລະບຸວ່າ: "ເສັ້ນທາງຊີວິດ ຈະບໍ່ເປັນທາງສາຍຊື່, ມັນມັກຄົດລ້ຽວໄປມາ, ແຕ່ກໍບໍ່ໄດ້ຂຶ້ນກັບໂຊກຊາຕາ ແຕ່ຫາກຂຶ້ນກັບແຮງປາຖະໜາເຮົາເອງ". ແນ່ນອນ, ແຮງປາຖະໜາທີ່ປວງຊົນລາວເຮົາທັງຊາດໃນຕອນນີ້, ກໍແມ່ນການຜ່ານຜ່າຄວາມຫຍຸ້ງຍາກໃນບັນຫາເຄັ່ງຮ້ອນຕ່າງໆ. ໃນສະພາບການເຄັ່ງຮ້ອນແບບນີ້ ເຮັດໃຫ້ການປຸກລະດົມນໍ້າໃຈຮັກຊາດຍິ່ງມີຄວາມຮຽກຮ້ອງຕ້ອງການທີ່ຕ້ອງໄດ້ເຮັດເປັນປະຈໍາ ແລະ ເຮັດໃຫ້ທົ່ວເຖິງໃນສັງຄົມ ເພື່ອໃຫ້ພະນັກງານ, ສະມາຊິກພັກ, ທະຫານ, ຕໍາຫຼວດ ແລະ ປະຊາຊົນ ມີຄວາມສະຖຸ້ງໄວ ແລະ ມີສະຕິລະວັງຕົວຕໍ່ກົນອຸບາຍເລ່ຫຼ່ຽມ, ການສ້າງຄວາມລະແວງສົງໄສ, ປັ່ນປ່ວນພາຍໃນ ອັນເປັນຜົນກະທົບຕໍ່ຄວາມເຊື່ອໝັ້ນຂອງປະຊາຊົນ ທີ່ມີຕໍ່ການນໍາພາ-ຊີ້ນໍາ ຂອງພັກ-ລັດຖະບານ.

ສະນັ້ນ, ພວກເຮົາຈໍາຕ້ອງເພີ່ມທະວີການປຸກລະດົມນໍ້າໃຈຮັກຊາດໃຫ້ສູງເດັ່ນຂຶ້ນຕື່ມ ແລະ ເພື່ອຈະໄດ້ແນວນັ້ນ ກໍຕ້ອງເຊີດຊູຜູ້ທີ່ເປັນແບບຢ່າງທີ່ດີ ເປັນເບົ້າຫຼອມແກ່ການຝຶກຝົນຮໍ່າຮຽນ, ຜູ້ທີ່ພັກ-ລັດຖະບານເຮົາມັກຍົກເອົາຜົນງານ, ຄຸນງາມຄວາມດີ ແລະ ຄວາມເປັນແບບຢ່າງທີ່ດີຂອງເພິ່ນ ຂຶ້ນມາເປັນຊື່ທໍາອິດທີ່ພົ້ນເດັ່ນນັ້ນກໍແມ່ນ "ປະທານ ໄກສອນ ພົມວິຫານ" ເຊິ່ງຍາມໃດ ຄຸນງາມຄວາມດີຂອງເພິ່ນ ກໍເປັນມໍລະດົກອັນລໍ້າຄ່າ ເພື່ອຝຶກຝົນຫຼໍ່ຫຼອມປວງຊົນລາວບັນດາເຜົ່າ ຜູ້ສືບທອດພາລະກິດຂອງພັກ ໃຫ້ເປັນຄົນດີ ມີຄຸນນະພາບ, ສືບຕໍ່ຍູ້ແຮງຜັນຂະຫຍາຍແນວທາງປ່ຽນແປງໃໝ່ ເຂົ້າສູ່ລວງເລິກ, ສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ໃນການນໍາພາຂອງພັກ.

ໂອກາດສະເຫຼີມສະຫຼອງວັນເກີດ ປະທານ ໄກສອນ ພົມວິຫານ ຄົບຮອບ 103 ປີ (13/12/1920-13/12/2023), ພັກ-ລັດຖະບານເຮົາໄດ້ຖືສໍາຄັນ ດ້ວຍການເຊີດຊູຜົນງານອັນໃຫຍ່ຫຼວງ, ລະນຶກເຖິງຄຸນງາມຄວາມດີ, ນໍາເອົາຄວາມເປັນແບບຢ່າງທີ່ດີຂອງເພິ່ນມາໃຫ້ຄວາມສໍາຄັນ ແລະ ສຸມໃສ່ເຜີຍແຜ່ໃຫ້ທົ່ວເຖິງທຸກຊັ້ນຄົນໃນສັງຄົມລາວ, ເພື່ອໃຫ້ປວງຊົນລາວບັນດາເຜົ່າ ຮໍ່າຮຽນເອົາເປັນແບບຢ່າງທີ່ດີຂອງເພິ່ນ ໂດຍສະເພາະດ້ານຄຸນທາດການເມືອງ, ທັດສະນະຫຼັກໝັ້ນຊົນຊັ້ນທີ່ໜັກແໜ້ນ, ທັດສະນະຫຼັກໝັ້ນມິດ-ສັດຕູ ແລະ ຄວາມເດັດດ່ຽວໜຽວແໜ້ນຕໍ່ອຸດົມການສັງຄົມນິຍົມ ອັນໄດ້ສ່ອງແສງຢ່າງຈະແຈ້ງຜ່ານຄວາມສາມາດໃນການນໍາພາຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກທີ່ມີຄວາມສະຖຸ້ງໄວຕໍ່ການປ່ຽນແປງຂອງສະພາບການໃໝ່, ກ້າຫານ, ປະດິດສ້າງ ເພື່ອລິເລີ່ມ ແລະ ນໍາພາ ພາລະກິດປ່ຽນແປງໃໝ່ຢ່າງຮອບດ້ານທີ່ມີຫຼັກການຂອງພັກ. ປັດຈຸບັນ, ແນວທາງການປ່ຽນແປງໃໝ່ໄດ້ສ້າງການຫັນປ່ຽນໃໝ່ຢ່າງໃຫຍ່ຫຼວງໃນການນໍາພາຂອງພັກ ແລະ ການຄຸ້ມຄອງ-ບໍລິຫານຂອງລັດ, ໂສມໜ້າຂອງຊາດໄດ້ມີການຫັນປ່ຽນຢ່າງຮອບດ້ານ. ດັ່ງນັ້ນ, ພວກເຮົາຕ້ອງນໍາເອົາຄວາມເປັນແບບຢ່າງອັນດີນີ້ ມາປະພຶດຕົວຈິງໃຫ້ສອດຄ່ອງກັບການນໍາພາ-ຊີ້ນໍາ ຂອງພັກ-ລັດຖະບານ ຕາມເງື່ອນໄຂໃນສະພາບປັດຈຸບັນ ເຊິ່ງພັກ-ລັດຖະບານ ກໍາລັງນໍາພາ-ຊີ້ນໍາ ເພື່ອສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນ ກ້າວຂຶ້ນຈຸດໝາຍສັງຄົມນິຍົມ ຢ່າງເດັດດ່ຽວໜຽວແໜ້ນ ເທື່ອລະກ້າວ.

ການຮໍ່າຮຽນເອົາແບບຢ່າງທີ່ດີຂອງປະທານ ໄກສອນ ພົມວິຫານ ໄດ້ຮຽກຮ້ອງໃຫ້ມີຄວາມຈະແຈ້ງຂຶ້ນ ໃນການປະພຶດຕົວຈິງຂອງພະນັກງານ-ສະມາຊິກພັກ ໃນດ້ານແບບແຜນການເຄື່ອນໄຫວວຽກງານ ແລະ ການດໍາລົງຊີວິດ, ຄວາມເປັນແບບຢ່າງນໍາໜ້າ, ການນໍາພາ, ການດໍາລົງຊີວິດທີ່ປອດໃສ. ຈາກສະພາບປັດຈຸບັນ, ທົ່ວໂລກ ແລະ ນັບທັງປະເທດເຮົາ ກໍາລັງປະເຊີນກັບບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ. ຄຸນສົມບັດສິນທໍາປະຕິວັດໃນຖັນແຖວພະນັກງານ, ສະມາຊິກພັກ, ທະຫານ, ຕໍາຫຼວດ ທຸກຂັ້ນ ແມ່ນຄວາມຈໍາເປັນພາວະວິໄສ ທີ່ຕ້ອງໄດ້ຍົກສູງຄວາມເອົາໃຈໃສ່ໃນການຮໍ່າຮຽນເອົາຄຸນສົມບັດສິນທໍາປະຕິວັດຂອງປະທານ ໄກສອນ ພົມວິຫານ ເພື່ອນໍາໃຊ້ເຂົ້າໃນການປະພຶດຕົວຈິງຂອງຕົນເພື່ອໃຫ້ເກີດໝາກເກີດຜົນຕົວຈິງ.

ເພື່ອຢາກເຮັດໄດ້ທີ່ກ່າວມານັ້ນ, ພວກເຮົາປະຕິບັດດັ່ງນີ້: 1). ພວກເຮົາຕ້ອງມີທັດສະນະຫຼັກໝັ້ນຊົນຊັ້ນ, ທັດສະນະຫຼັກໝັ້ນ ມິດ-ສັດຕູ ແລະ ຄວາມເດັດດ່ຽວໜຽວແໜ້ນ ຕໍ່ອຸດົມການສັງຄົມນິຍົມ ດ້ວຍຄວາມບໍ່ຫວັ່ນໄຫວຄອນແຄນ, ທຸ່ນທ່ຽງ ມີຄວາມເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ, ຮັບຟັງຂໍ້ມູນຂ່າວສານທີ່ເປັນທາງການ ບໍ່ຫຼົງເຊື່ອການປຸກປັ່ນຂອງກຸ່ມຄົນບໍ່ຫວັງດີຜ່ານສື່ສັງຄົມອອນລາຍ ທີ່ກໍາລັງເຜີຍຫຼາຍ ແລະ ເມື່ອໄດ້ຮັບຂໍ້ມູນທີ່ເປັນຄວາມຈິງແລ້ວ ກໍເປັນເຈົ້າການຊີ້ແຈງອະທິບາຍ, ຕອບຕ້ານການບິດເບືອນ ແລະ ໃສ່ຮ້າຍປ້າຍສີ. ນີ້ກໍສະແດງເຖິງຄວາມໜັກແໜ້ນດ້ານຄຸນທາດການເມືອງ ໃນພຶດຕິກໍາຕົວຈິງ. 2) ຄຽງຄູ່ກັບການຝຶກຝົນຫຼໍ່ຫຼອມຕົນເອງ ໃຫ້ມີຄຸນທາດການເມືອງທີ່ດີ, ໜັກແໜ້ນ. ຄຸນສົມບັດສິນທໍາປະຕິວັດ ກໍເປັນສິ່ງທີ່ສໍາຄັນ ເພື່ອຍົກສູງນໍ້າໃຈເສຍສະຫຼະເພື່ອຊາດ ເພື່ອປະຊາຊົນ ຮັບໃຊ້ພາລະກິດປະຕິວັດໃນໄລຍະໃໝ່ຂອງຊາດ ໂດຍບໍ່ທໍ້ຖອຍຕໍ່ອຸປະສັກ ແລະ ຄວາມຫຍຸ້ງຍາກນາໆປະການ ເວົ້າແລ້ວຕ້ອງປະຕິບັດ. 3) ມີຄວາມບຸກບືນ, ຕື່ນຕົວ, ເປັນເຈົ້າການ, ດູໝັ່ນ ແລະ ຊອກຮູ້, ຄົ້ນຄິດ ພັດທະນາຄວາມສາມາດ ແລະ ປະດິດສ້າງ ສ້າງຜົນປະໂຫຍດສູງສຸດ, ເຮັດວຽກມີແຜນການ, ມີການຕິດຕາມກວດກາ, ເຮັດຜິດພາດກໍແກ້ໄຂໃຫ້ດີຂຶ້ນ. 4) ຕ້ອງເປັນແບບຢ່າງໃນການປະຢັດ, ບໍ່ຟຸ່ມເຟືອຍ. ໃນກອງປະຊຸມສຸນກາງຄົບຄະນະກາງສະໄໝ ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI ໂດຍສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ ໄດ້ເນັ້ນວ່າ: "... ຍິ່ງໃນເງື່ອນໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ຄ່າຄອງຊີບສູງ, ຊີວິດການເປັນຢູ່ຂອງພະນັກງານ, ສະມາຊິກພັກ ແລະ ປະຊາຊົນ ມີຄວາມຝືດເຄືອງ-ຫຍຸ້ງຍາກ ໃນປັດຈຸບັນ, ພວກເຮົາ ຍິ່ງຕ້ອງປັບຫຼຸດຄວາມສິ້ນເປືອງຕ່າງໆ ເພື່ອປະຢັດງົບປະມານ,...". 5) ໃນການເຄື່ອນໄຫວວຽກງານ ແລະ ການດໍາລົງຊີວິດຕົວຈິງ ການນໍາເອົາຄວາມເປັນແບບຢ່າງຊື່ສັດ ຂອງປະທານ ໄກສອນ ພົມວິຫານ ແມ່ນຕ້ອງສະແດງອອກໃນການກະທໍາທີ່ສອດຄ່ອງກັບຄໍາເວົ້າ, ບໍ່ສໍ້ໂກງ, ບໍ່ສວຍໂອກາດລັກໂລບເອົາຂອງສ່ວນລວມ ແລະ ຂອງຜູ້ອື່ນມາເປັນຂອງສ່ວນຕົວ. ຕ້ອງປະຕິບັດຕາມກົດໝາຍ, ມີລະບຽບວິໄນ, ເຄົາລົບກົດໝາຍ, ເດັດດ່ຽວແກ້ໄຂສິ່ງຫຍໍ້ທໍ້ຕ່າງໆໃນສັງຄົມ. 6) ຕ້ອງສ້າງຄວາມສາມັກຄີ, ເອື້ອເຟື້ອເພື່ອແຜ່ ນັບຖືຮັກແພງ, ຈິງໃຈຕໍ່ກັນ ນີ້ສິ່ງຂ່າວ ກໍສ້າງເຊິ່ງກັນແລະກັນ. 7) ເອົາຄຸນສົມບັດສິນທໍາປະຕິວັດ ນິຍົມຂອງຊາດຕົນ ມາປະພຶດຕົວຈິງໃນການຊຸກຍູ້ສົ່ງເສີມຄວາມພູມໃຈຕໍ່ຊາດ, ຕໍ່ຜົນສໍາເລັດຂອງຄົນລາວ ເພື່ອສົ່ງເສີມ ແລະ ໂຄສະນາເຜີຍແຜ່ສິ່ງທີ່ດີງາມຂອງຊາດລາວ. 8) ຕ້ອງປະພຶດຕົນໃຫ້ມີຄວາມສຸພາບຮຽບຮ້ອຍ ແລະ ເຮັດແທ້ທໍາຈິງ ດ້ວຍຄວາມຈິງໃຈ, ເວົ້າແລ້ວກໍຕ້ອງເຮັດໃຫ້ສໍາເລັດ. 9) ອີກໜຶ່ງຄຸນສົມບັດສິນທໍາປະຕິວັດ ອັນເປັນແບບຢ່າງທີ່ດີຂອງປະທານ ໄກສອນ ພົມວິຫານ ກໍຄືການຮໍ່າຮຽນ ແລະ ພັດທະນາຕົນເອງ ຕ້ອງຊອກຮູ້ຮໍ່າຮຽນດ້ວຍຕົນເອງ, ຮຽນຮູ້ນໍາໝູ່ເພື່ອນສະຫາຍ, ຮຽນຮູ້ນໍາຜູ້ອາວຸໂສ, ປຶ້ມຕໍາລາ, ຄູ-ອາຈານ, ຮຽນຈາກຕົວຈິງ, ຮຽນນໍາສັງຄົມ ແລະ ຮຽນນໍາຂະບວນການຕ່າງໆຂອງມະຫາຊົນ ເພື່ອຈະມີຄວາມຮູ້, ຄວາມສາມາດໃນການເຮັດວຽກ ແລະ ການດໍາລົງຊີວິດໄດ້ດີຂຶ້ນ.

ປະທານ ໄກສອນ ພົມວິຫານ ທີ່ເຄົາລົບຮັກ!

## ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃນຂົງເຂດປ້ອງກັນຊາດ

ຕໍ່ຈາກສະບັບກ່ອນ...

- ມາດຕາ 21 ສິດຕົກລົງກ່ຽວກັບຊັ້ນຂອງນາຍທະຫານ: ສິດໃນການຕົກລົງ ເລື່ອນຊັ້ນ ແລະ ປົດຊັ້ນພົນເອກ ໃຫ້ເປັນສິດຂອງລັດຖະມົນຕີກະຊວງປ້ອງກັນປະເທດ ເປັນຜູ້ຕົກລົງ ເໝາະສົມ ຫຼື ບໍ່;

- ມາດຕາ 25 ການກໍານົດຊັ້ນໃສ່ຕໍາແໜ່ງບັນຊາຂອງນາຍທະຫານ ຄວນກໍານົດໃຫ້ຈະແຈ້ງ, ຂາດໂຕ ບໍ່ໃຫ້ມີຄໍາວ່າ (ຫຼື) ແລະ ບໍ່ໃຫ້ຖືເອົາກໍານົດເວລາການເລື່ອນຊັ້ນເປັນຫຼັກ;

-ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ, ການເລື່ອນຊັ້ນ ແລະ ການປະຕິບັດນະໂຍບາຍໃຫ້ນາຍທະຫານ ໄປປະຈໍາການຢູ່ ກໍາມາທິການ ປກຊ-ປກສ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ຫ້ອງການ ປກຊ-ປກສ, ສະຫະພັນນັກຮົບເກົ່າ ແຕ່ສູນກາງລົງຮອດທ້ອງຖິ່ນ



ຄວນກໍານົດເຂົ້າໃນກົດໝາຍ ຫຼື ບໍ່.

3. ບົດຮຽນທີ່ຖອດຖອນໄດ້

1) ເພີ່ມທະວີບົດບາດການນໍາພາ ຂອງຄະນະພັກ-ຄະນະບັນຊາແຕ່ລະຂັ້ນ ໃນການຈັດຕັ້ງປະຕິບັດກົດໝາຍ;

2) ເອົາໃຈໃສ່ໂຄສະນາເຜີຍແຜ່ກົດໝາຍໃນຂົງເຂດວຽກງານປ້ອງກັນຊາດ ໃຫ້ພະນັກງານ-ນັກຮົບ, ພະນັກງານລັດຖະກອນ, ນັກຮຽນ-ນັກສຶກສາ ຕະຫຼອດຮອດປະຊາຊົນບັນດາເຜົ່າ ໃຫ້ມີຄວາມຮັບຮູ້, ເຂົ້າໃຈຕໍ່ເນື້ອໃນກົດໝາຍ ແລະ ວຽກງານປ້ອງກັນຊາດເຮັດໃຫ້ວຽກງານດັ່ງກ່າວເປັນຄວາມຮັບຜິດຊອບຂອງທົ່ວປວງຊົນ;

3) ຍົກສູງການສຶກສາອົບຮົມວຽກງານປ້ອງກັນຊາດ ໃຫ້ສອດຄ່ອງແຕ່ລະເປົ້າໝາຍ ແລະ ຖືເອົາວຽກງານປ້ອງກັນຊາດທົ່ວປວງຊົນ ເປັນວຽກງານຍຸດທະສາດໜຶ່ງ ສອດທ້ອຍເຂົ້າໃນທຸກຂົງເຂດວຽກງານ ແລະ ກໍານົດເປັນຫຼັກສູດການຮຽນ-ການສອນ ຢູ່ສະຖາບັນການສຶກສາຂັ້ນຕ່າງໆ ນັບແຕ່ຊັ້ນມັດທະຍົມຕອນປາຍ ຂຶ້ນໄປ;

4) ປະເມີນການຈັດຕັ້ງປະຕິບັດກົດໝາຍເປັນແຕ່ລະໄລຍະ ເພື່ອໃຫ້ເຫັນບັນຫາທີ່ບໍ່ສອດຄ່ອງ ແລະ ມີຄວາມຫຍຸ້ງຍາກ ໃນການຈັດຕັ້ງປະຕິບັດ;

5) ຕ້ອງເພີ່ມທະວີຄວາມສັກສິດໃນການຈັດຕັ້ງປະຕິບັດ

ອ່ານຕໍ່ສະບັບໜ້າ

## ລາຍງານການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍກໍາລັງປ້ອງກັນຄວາມສະຫງົບປະຊາຊົນ

ຕໍ່ຈາກສະບັບກ່ອນ...

- ດ້ານນະໂຍບາຍ ໂດຍສະເພາະແມ່ນບັນຫາທີ່ຕິດພັນກັບ ນາຍ ແລະ ພົນຕໍາຫຼວດຂອງພວກເຮົາທີ່ໄປປະຈໍາຢູ່ສະພາແຫ່ງຊາດ, ສະພາເຂດ, ຫ້ອງການຄະນະກໍາມະການ ປກຊ-ປກສ ສູນກາງ ລວມທັງອີງການຜູ້ຕາງໜ້າກະຊວງປ້ອງກັນຄວາມສະຫງົບປະຈໍາຢູ່ຕ່າງປະເທດ ຍັງບໍ່ທັນໄດ້ກໍານົດລະອຽດໃສ່ຢູ່ໃນກົດໝາຍສະບັບນີ້ ເຮັດໃຫ້ການຈັດຕັ້ງປະຕິບັດຍັງມີຄວາມຫຍຸ້ງຍາກຢູ່;

- ຄວນກໍານົດອີກພາກໜຶ່ງກ່ຽວກັບການຮັບປະກັນງົບປະມານ ແລະ ອາວຸດຍຸດໂທປະກອນໃຫ້ກໍາລັງປ້ອງກັນຄວາມສະຫງົບປະຊາຊົນ ເພື່ອຮອງຮັບໃນເວລາປະຕິບັດໜ້າທີ່ວຽກງານວິຊາສະເພາະໃຫ້ມີຄວາມຮັບປະກັນຄວາມປອດໄພ.



4. ບົດຮຽນທີ່ຖອດຖອນໄດ້

- ຕ້ອງເພີ່ມທະວີຄວາມເຂັ້ມງວດໃນການຈັດຕັ້ງປະຕິບັດກົດໝາຍດັ່ງກ່າວ ຂອງກົມກອງເຫຼົ່າວິຊາສະເພາະ ໃນທົ່ວກໍາລັງປ້ອງກັນຄວາມສະຫງົບ;

- ຕ້ອງເພີ່ມທະວີເອົາໃຈໃສ່ຊີ້ນໍາໃນການຈັດຕັ້ງປະຕິບັດໂຄສະນາ, ເຜີຍແຜ່, ເຊື່ອມຊຶມກົດໝາຍວ່າດ້ວຍກໍາລັງປ້ອງກັນຄວາມສະຫງົບປະຊາຊົນ ໃຫ້ກໍາລັງປ້ອງກັນຄວາມສະຫງົບຢ່າງກວ້າງຂວາງ ແລະ ທົ່ວເຖິງ ໃນການເປັນເຈົ້າການໃນການຈັດຕັ້ງປະຕິບັດໃຫ້ຖືກຕ້ອງ, ສອດຄ່ອງ ແລະ ເຂັ້ມງວດ;

- ຕ້ອງໄດ້ເອົາໃຈໃສ່ຕິດຕາມກວດກາປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ເປັນຕົ້ນການປະຕິບັດໜ້າທີ່ຂອງນາຍ ແລະ ພົນຕໍາຫຼວດ ການປະຕິບັດກົດໝາຍ ແລະ ລະບຽບການ ຂອງແຕ່ລະກົມກອງເຫຼົ່າວິຊາສະເພາະ, ການປະຕິບັດນະໂຍບາຍ ແລະ ການນໍາໃຊ້ມາດຕະການຕໍ່ຜູ້ລະເມີດຕໍ່ກົດໝາຍ.

IV. ທິດທາງ ແລະ ວິທີແກ້ໄຂໃນຕໍ່ໜ້າ

1. ທິດທາງລວມ

ຈັດຕັ້ງຜັນຂະຫຍາຍບົດ

ອ່ານຕໍ່ສະບັບໜ້າ

# ຕິດຕາມກວດກາການຈັດຕັ້ງປະຕິບັດ ການຊົດເຊີຍ-ການຈັດສັນຍົກຍ້າຍປະຊາຊົນ



(ສພຊ) ທ່ານ ນາງ ຄຳພອນ ພິມມະຈັນ ຮອງປະທານສະພາປະຊາຊົນແຂວງອຸດົມໄຊ ໄດ້ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດການຊົດເຊີຍ-ການຈັດສັນຍົກຍ້າຍປະຊາຊົນ ທີ່ໄດ້ຮັບຜົນກະທົບຈາກໂຄງການກໍ່ສ້າງເຂື່ອນນ້ຳຂອງ ຫຼວງພະບາງ ເມື່ອວັນທີ 6 ທັນວາ 2023 ທີ່ສະໂມສອນບ້ານລາດຫານ ເມືອງງາ ແຂວງອຸດົມໄຊ, ມີປະທານຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ສະພາປະຊາຊົນແຂວງອຸດົມໄຊ, ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ, ຄະນະຮັບຜິດຊອບໂຄງການ, ບໍລິສັດ, ອຳນາດການປົກຄອງບ້ານ ແລະ ປະຊາຊົນພາຍໃນບ້ານເຂົ້າຮ່ວມຢ່າງພ້ອມພຽງ.

ການເຄື່ອນໄຫວໃນຄັ້ງນີ້, ໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດການຊົດເຊີຍຜົນກະທົບຂອງໂຄງການຈາກຄະນະຮັບຜິດຊອບ, ສະພາບລວມຂອງບ້ານຈາກອົງການປົກຄອງບ້ານ ເຊິ່ງເມືອງງາ ແຂວງອຸດົມໄຊ ຖືກຜົນກະທົບຈາກໂຄງການດັ່ງກ່າວ ລວມທັງໝົດ 12 ບ້ານ, 891 ຫຼັງຄາເຮືອນ, ພົນລະເມືອງ 4.038 ຄົນ (ເປັນຂໍ້ມູນເບື້ອງຕົ້ນ) ໃນນີ້, ມີບ້ານຖືກຍົກຍ້າຍ 6 ບ້ານຄື: ລາດຫານ, ຄົກພຸ, ຍອຍໄຮ, ລາດຂະມູນ, ລາດກົມ, ລາດແອ່ນ ແລະ ບ້ານຖືກຫຍັບຍ້າຍ 6 ບ້ານ ຄື: ຫ້ວຍຫີນ, ໂພນສະຫວ່າງ, ຂາດຂາມ, ຫ້ວຍຫົງ, ຫາດເຕີ, ບ້ານບໍ່-ຫ້ວຍຄະ. ພ້ອມນັ້ນ, ຍັງໄດ້ຮັບຟັງຄຳສະເໜີຂອງປະຊາຊົນ ເຊິ່ງປະຊາຊົນມີຄວາມເຫັນດີຍົກຍ້າຍຕາມການຈັດສັນ ແຕ່ຍັງເຫັນວ່າການຊົດເຊີຍແມ່ນບໍ່ທັນເໝາະສົມກັບສະພາບເສດຖະກິດປັດຈຸບັນ ໂດຍສະເພາະແມ່ນຄ່າດິນສວນ, ດິນນາ, ໄມ້ອຸດສາຫະກຳ, ຕົ້ນໄມ້ໃຫ້ໝາກ, ສຸມໄມ້ໄຜ່... ແລະ ສະເໜີກ່ຽວກັບການກຳນົດເອົາໄລຍະຫ່າງຂອງເຂດຄວາມສ່ຽງຈາກລະດັບນ້ຳໜ້າເຂື່ອນຂຶ້ນໄປ ເພາະຕາມການເກັບຂໍ້ມູນຂອງບໍລິສັດກ່ຽວຂ້ອງ ຕໍ່ບ້ານທີ່ຖືກຫຍັບຍ້າຍແມ່ນກຳນົດເອົາລະດັບ 311 masl ລົງລຸ່ມ ເຫັນວ່າພາຍຫຼັງຍົ້ງນ້ຳໜ້າເຂື່ອນເຕັມລະດັບແມ່ນມີຄວາມສ່ຽງສູງທີ່ຈະເກີດຜົນກະທົບຕໍ່ຊັບສິນ ແລະ ຊີວິດການເປັນຢູ່ຂອງປະຊາຊົນຜູ້ທີ່ບໍ່ຖືກຍົກຍ້າຍ, ການຟື້ນຟູເນື້ອທີ່ພາຍຫຼັງສຳເລັດໂຄງການ ແລະ ບັນຫາອື່ນໆ.

ທັງນີ້, ກໍເພື່ອເປັນການຍົກສູງພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາປະຊາຊົນແຂວງ, ຂອງຄະນະກຳມະການໃນການຕິດຕາມກວດກາ ໃຫ້ມີປະສິດທິພາບປະສິດທິຜົນ, ເຂົ້າເຖິງ ແລະ ກຳໄດ້ສະພາບບັນຫາທີ່ເກີດຂຶ້ນໃນການຈັດຕັ້ງປະຕິບັດໂຄງການ, ຊຸກຍູ້ບັນດາບໍລິສັດ, ຈັດຕັ້ງປະຕິບັດໂຄງການໃຫ້ໄປຕາມຂັ້ນຕອນຂອງກົດໝາຍ, ນິຕິກຳທີ່ໄດ້ວາງອອກ ແລະ ປະຕິບັດພັນທະຕ່າງໆຕໍ່ລັດຖະບານ, ຕໍ່ແຂວງ, ເມືອງ, ບ້ານ ຕະຫຼອດຮອດພໍ່ແມ່ປະຊາຊົນ ແລະ ເພື່ອເປັນຂໍ້ມູນໃຫ້ຄະນະກຳມະການ ກໍຄືຄະນະປະຈຳສະພາປະຊາຊົນແຂວງ ເພື່ອສະເໜີໃຫ້ອົງການປົກຄອງແຂວງ ຮີບຮ້ອນແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນຈາກໂຄງການດັ່ງກ່າວ ພ້ອມທັງຊຸກຍູ້ພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດພາລະບົດບາດຂອງຕົນຢ່າງເຂັ້ມງວດ, ມີປະສິດທິຜົນ, ຫຼຸດຜ່ອນບັນຫາຂໍ້ຂັດແຍ່ງຕ່າງໆທີ່ເກີດຂຶ້ນ ແລະ ອາດຈະເກີດຂຶ້ນໃນຕໍ່ໜ້າ.

# ພິທີເຊັນສັນຍາ ໂຄງການກໍ່ສ້າງ ໂຮງຮຽນມັດທະຍົມ ສົມບູນບ້ານເມືອງລ້ອງ ແຂວງຫົວພັນ




(ສພຊ) ໃນວັນທີ 7 ທັນວາ 2023 ພະແນກສຶກສາທິການ ແລະ ກິລາ ແຂວງຫົວພັນ ໄດ້ຈັດພິທີເຊັນສັນຍາໂຄງການກໍ່ສ້າງອາຄານຮຽນ, ຫໍພັກຄູ-ນັກຮຽນ, ເຮືອນຄົວ, ຫ້ອງນ້ຳ ແລະ ຮົ້ວໂຮງຮຽນມັດທະຍົມສົມບູນ ບ້ານເມືອງລ້ອງ ເມືອງສິບເບົາ ແຂວງຫົວພັນ ລະຫວ່າງພະແນກສຶກສາທິການ ແລະ ກິລາແຂວງຫົວພັນ ກັບບໍລິສັດ ຄູນຄຳກໍ່ສ້າງ ແລະ ສ້ອມແປງເຄຫາສະຖານ ຂົວທາງຊົນລະປະທານ ຈຳກັດຜູ້ດຽວ ໂດຍການເຂົ້າຮ່ວມຂອງທ່ານ ນາງ ອຳໄພວອນ ລ້ອມບຸນແພງ ປະທານສະພາປະຊາຊົນແຂວງຫົວພັນ, ມີທ່ານ ມົນທອງ ລຽນຕິຄຸນ ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ, ທ່ານ ໄຊຍະແສງ ຊົງຢົ່ງຢາ ເຈົ້າເມືອງສິບເບົາ, ປະທານບໍລິສັດ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ໂຄງການກໍ່ສ້າງດັ່ງກ່າວ ແມ່ນໄດ້ມາຈາກແຫຼ່ງທຶນຊ່ວຍເຫຼືອຂອງກອງທຶນຈີນ ເພື່ອສັນຕິພາບ ແລະ ການພັດທະນາ ຈາກລັດຖະບານ ສປ ຈີນ ລວມມູນຄ່າການກໍ່ສ້າງທັງໝົດ 373.000 ໂດລາ ໂດຍແມ່ນບໍລິສັດ ຄູນຄຳກໍ່ສ້າງ ແລະ ສ້ອມແປງເຄຫາສະຖານ ຂົວທາງຊົນລະປະທານ ຈຳກັດຜູ້ດຽວ ເປັນຜູ້ຮັບເໝົາໃນການກໍ່ສ້າງ ມີ 7 ໜ້າວຽກຫຼັກຄື: ວຽກກໍ່ສ້າງອາຄານຮຽນ 1 ຫຼັງ ມີ 7 ຫ້ອງຮຽນ, 1 ຫ້ອງຄອມພິວເຕີ; ວຽກກໍ່ສ້າງອາຄານຫໍພັກຄູ 1 ຫຼັງ; ວຽກກໍ່ສ້າງອາຄານຫໍພັກນັກຮຽນ 1 ຫຼັງ; ວຽກກໍ່ສ້າງເຮືອນຄົວ 1 ຫຼັງ; ວຽກກໍ່ສ້າງຫ້ອງນ້ຳ 2 ຫຼັງ; ວຽກສະໜອງນ້ຳ ແລະ ຊຸມອາຈົມ; ວຽກຮົ້ວອ້ອມ, ປະຕູ, ປ້ອງຍ້ຽມ, ປ້າຍຊື່ໂຮງຮຽນ, ເທເດີ່ນ ຈະໃຊ້ເວລາໃນການກໍ່ສ້າງທັງໝົດ 12 ເດືອນຈຶ່ງຈະສຳເລັດ.

ຕອນທ້າຍພິທີ, ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ຍັງໄດ້ຮຽກຮ້ອງໃຫ້ເຈົ້າຂອງໂຄງການ ແລະ ຜູ້ຮັບເໝົາກໍ່ສ້າງໂຄງການດັ່ງກ່າວ ພ້ອມກັນເອົາໃຈໃສ່ຊຸກຍູ້ຕິດຕາມໃນການກໍ່ສ້າງໃຫ້ຖືກຕ້ອງຕາມຫຼັກວິຊາການ, ຖືກຕາມເຕັກນິກໃຫ້ໄດ້ມາດຕະຖານ ຕາມເຕັກນິກໃນການອອກແບບ ຮັບປະກັນຄຸນນະພາບ ເພື່ອໃຫ້ລູກຫຼານໃນເຂດດັ່ງກ່າວມີໂຮງຮຽນງາມ ແລະ ທັນສະໄໝ ແລະ ສາມາດໃຊ້ໄດ້ຍາວນານ.

(ສພຂ ຫົວພັນ)

# ເຂດເລືອກຕັ້ງທີ 6 ສົມທົບກັບອົງການປົກຄອງແຂວງ ສຸມໃສ່ແກ້ໄຂແຕ່ລະບັນຫາຢ່າງລະອຽດ



ທ່ານ ວົງສະຫວັນ ເທບພະຈັນ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 6, ໃນນາມຕາງໜ້າໃຫ້ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 6 ແຂວງຫຼວງພະບາງ ໃນໄລຍະເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ລະຫວ່າງວັນທີ 31 ຕຸລາ ຫາ 21 ພະຈິກ 2023 ທີ່ນະຄອນຫຼວງວຽງຈັນ ໄດ້ໃຫ້ສຳພາດຕໍ່ສື່ມວນຊົນກ່ຽວກັບຜົນງານການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ເຊິ່ງທ່ານໃຫ້ຮູ້ວ່າ: ຜ່ານການຕິດຕາມກວດກາຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະມາຊິກສະພາແຫ່ງຊາດ ໂດຍການເກັບກຳຂໍ້ມູນຈາກພາກສ່ວນທີ່ກ່ຽວຂ້ອງ ແລະ ການເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ເຫັນວ່າ: ມີຫຼາຍບັນຫາທີ່ໄດ້ຮັບການສະເໜີ ເປັນຕົ້ນແມ່ນບັນຫາການລັກລອບຂຸດຄົ້ນແຮ່ຄຳ (ຢູ່ເມືອງປາກອູ, ເມືອງປາກແຊງ) ຜ່ານການລົງຕິດຕາມກວດກາເຫັນວ່າ ມີການລັກລອບຂຸດຄົ້ນຫຼາຍຈຸດ. ສະນັ້ນ, ຈຶ່ງໄດ້ສົມທົບກັບ ຄະນະປະຈຳສະພາປະຊາຊົນແຂວງ ແຈ້ງໃຫ້ອົງການປົກຄອງແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຊີ້ນຳໃຫ້ບໍລິສັດດັ່ງກ່າວ ຢຸດເຊົາການຂຸດຄົ້ນ. ເພື່ອລໍຖ້າການອະນຸມັດຈາກລັດຖະບານ. ຫຼັງຈາກທີ່ໄດ້ຮັບການອະນຸຍາດຂຸດຄົ້ນຢ່າງເປັນທາງການ, ຈຶ່ງຈະສາມາດສືບຕໍ່ດຳເນີນການຂຸດຄົ້ນຕາມຂັ້ນຕອນ ທີ່ໄດ້ກຳນົດໄວ້ໃນສັນຍາ, ລະບຽບການ ແລະ ກົດໝາຍ. ສຳລັບອົງການປົກຄອງເມືອງ ແລະ ບ້ານທີ່ກ່ຽວຂ້ອງ ແມ່ນໄດ້ແນະນຳໃຫ້ເປັນເຈົ້າການ ໃນການຕິດຕາມການເຄື່ອນໄຫວຂອງພາກສ່ວນດັ່ງກ່າວ ຢ່າງໃກ້ຊິດ, ຖ້າມີການລະເມີດແມ່ນໃຫ້ລາຍງານຫາພາກສ່ວນກ່ຽວຂ້ອງຊາບຢ່າງຮີບດ່ວນ.

ທ່ານຍັງໄດ້ຍົກໃຫ້ເຫັນຫຼາຍບັນຫາທີ່ໄດ້ສົມທົບກັບພາກສ່ວນກ່ຽວຂ້ອງ ເປັນຕົ້ນແມ່ນ:

1. ການແກ້ໄຂບັນຫາຢາເສບຕິດ ຜ່ານມາແມ່ນຍັງບໍ່ສາມາດຈັດຕັ້ງປະຕິບັດໄດ້ດີເທົ່າທີ່ຄວນ ຍັງເກີດມີປາກົດການລັກລອບຄ້າຂາຍຢາເສບຕິດ, ເສບຢາເສບຕິດ, ດື່ມ ແລະ ສູບດົມສານເສບຕິດ (ນ້ຳກະທ່ອມ, ກັນຊາ, ປູມເປົ້າ...);

2. ບັນຫາອັດຕາເງິນເຟີ້, ລາຄານ້ຳມັນທີ່ສູງຂຶ້ນ ແລະ ລາຄາສິນຄ້າອຸປະໂພກ-ບໍລິໂພກ ນັບມື້ນັບເພີ່ມຂຶ້ນ ເຊິ່ງໄດ້ສົ່ງຜົນກະທົບໂດຍກົງ ຕໍ່ການດຳລົງຊີວິດຂອງປະຊາຊົນ.

3. ໃນໄລຍະຜ່ານມາ ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 6, ໄດ້ສົມທົບກັບຄະນະປະຈຳສະພາປະຊາຊົນແຂວງ ແລະ ອົງການປົກຄອງແຂວງ ໄດ້ຕິດຕາມຕາມກວດກາ 2 ວາລະແຫ່ງຊາດ ຄື:

ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ. ໄດ້ຕີລາຄາວ່າ ບັນດາແຜນວຽກງານຈຸດສຸມຂອງວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແມ່ນໄດ້ຮັບການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ເປັນຕົ້ນແມ່ນການຊຸກຍູ້ສົ່ງເສີມການການປູກ-ການລ້ຽງ, ການຜະລິດ ເພື່ອຊົມໃຊ້ພາຍໃນ ແລະ ສົ່ງອອກ ເຊັ່ນ ການລ້ຽງສັດແບບເປັນຟາມ ໄດ້ມີການຂະຫຍາຍຕົວ, ການຂຸດຄົ້ນແຮ່ທາດ ໂດຍສະເພາະແມ່ນແຮ່ຄຳຕົກຂ້ອນທີ່ລັດຖະບານອະນຸຍາດໄດ້ຮັບການຄຸ້ມຄອງ, ການຊຸກຍູ້ສົ່ງເສີມ, ອຳນວຍຄວາມສະດວກໃຫ້ແກ່ທຸລະກິດການບໍລິການ ແລະ ການທ່ອງທ່ຽວມີການຟື້ນຕົວ, ສາມາດປັບປຸງສະພາບແວດລ້ອມທີ່ເອື້ອອຳນວຍຄວາມສະດວກ ໃຫ້ແກ່ການລົງທຶນມີຄວາມວ່ອງໄວຂຶ້ນກວ່າເກົ່າ ເຊິ່ງເປັນປັດໄຈທີ່ສາມາດດຶງດູດການລົງທຶນຂອງພາກເອກະຊົນ ຈາກທັງພາຍໃນແລະຕ່າງປະເທດເພີ່ມຂຶ້ນ; ດ້ານການເກັບລາຍຮັບເຂົ້າງົບປະມານຂອງແຂວງ ກໍໄດ້ຮັບການປັບປຸງ ແລະ ທັນເປັນທັນສະໄໝ ຈົນສາມາດເຮັດໃຫ້ແຂວງຫຼວງພະບາງ ມີລາຍຮັບເພີ່ມຂຶ້ນ, ມີລາຍຮັບເກີນແຜນ 2 ປີ ຕິດຕໍ່ກັນ ແລະ ໄດ້ມີການຄຸ້ມຄອງລາຍຈ່າຍໄປຕາມທິດປະຢັດ ແລະ ຕ້ານການຟູມເຟືອຍ. ນອກນັ້ນ, ຍັງໄດ້ສຸມໃສ່ແກ້ໄຂໜີ້ສິນສາທາລະນະຕາມມະຕິຂອງສະພາແຫ່ງຊາດ; ເອົາໃຈໃສ່ຊຸກຍູ້ພາກສ່ວນທະນາຄານ ແລະ ສະຖາບັນການເງິນພາຍໃນແຂວງ ໃນການສ້າງສະຖຽນລະພາບດ້ານເງິນຕາ; ໄດ້ເອົາໃຈໃສ່ຍົກສູງປະສິດທິພາບໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ ດ້ວຍກົດໝາຍ ເປັນຕົ້ນແມ່ນໄດ້ໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳທີ່ສຳຄັນຂອງແຂວງ ໄດ້ຈຳນວນໜຶ່ງ, ປັບປຸງຄຸນນະພາບຂອງການບໍລິຫານລັດ ດ້ວຍການປັບປຸງກົງຈັກການຈັດຕັ້ງຕາມທິດກະທັດຮັດ.

ເຖິງຢ່າງໃດກໍຕາມ ໃນການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ຍັງມີບັນຫາຈຳນວນໜຶ່ງ

ອ່ານຕໍ່ໜ້າ 7

## ເຊື່ອມຊຶມ, ເນື້ອໃນກອງປະຊຸມຄົບຄະນະກາງສະໄໝ ຂອງຄະນະບໍລິຫານງານສູນກາງພັກສະໄໝທີ IX




(ສພຊ) ສະຫາຍ ວິງສະຫວັນ ເທບພະຈັນ ຮອງເລຂາຄະນະບໍລິຫານງານພັກແຂວງ, ປະທານສະພາປະຊາຊົນແຂວງຫຼວງພະບາງ ໄດ້ເຄື່ອນໄຫວເຊື່ອມຊຶມ, ຜັນຂະຫຍາຍຜົນສຳເລັດກອງປະຊຸມຄົບຄະນະກາງສະໄໝຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ IX ຕິດພັນກັບການເຜີຍແຜ່ບັນດາເອກະສານທີ່ກ່ຽວຂ້ອງກັບການກະກຽມກອງປະຊຸມໃຫຍ່ 3 ຂັ້ນຂອງພັກ ເມື່ອທ້າຍເດືອນພະຈິກຜ່ານມາ; ເຂົ້າຮ່ວມຮັບຟັງມີບັນດາສະຫາຍຄະນະບໍລິຫານງານພັກເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການ, ອົງການ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ນາຍບ້ານ ແລະ ບັນດາສະຫາຍສະມາຊິກພັກເຂົ້າຮ່ວມຢ່າງພ້ອມພຽງ.

ໂອກາດດຽວກັນນີ້, ສະຫາຍ ວິງສະຫວັນ ເທບພະຈັນ ໄດ້ເຊື່ອມຊຶມບັນດາເອກະສານຕ່າງໆ ເພື່ອໃຫ້ຜູ້ເຂົ້າຮ່ວມມີຄວາມຮັບຮູ້ ແລະ ເຂົ້າໃຈແຈ້ງກ່ຽວກັບການສືບຕໍ່ຍູ້ແຮງ ຜັນຂະຫຍາຍແນວທາງການປ່ຽນແປງໃໝ່ ເຂົ້າສູ່ລ່ວງເລິກ ເພື່ອສ້າງການຫັນປ່ຽນທີ່ແຂງແຮງ ແລະ ຮອບດ້ານ ໃນການນຳພາຂອງພັກ. ຈາກນັ້ນ, ສະຫາຍຍັງໄດ້ຊີ້ນຳກ່ຽວກັບຂັ້ນຕອນໃນການກະກຽມກອງປະຊຸມ 3 ຂັ້ນຂອງພັກຢ່າງລະອຽດ, ໂດຍໄດ້ເນັ້ນໃຫ້ກຳນົດຈະແຈ້ງກ່ຽວກັບການຈັດຕັ້ງປະຕິບັດວຽກງານໄລຍະຜ່ານມາຕ້ອງສະແດງອອກເປັນລາຍລັກອັກສອນໃຫ້ຈະແຈ້ງ, ຖືກຕ້ອງຕາມຄວາມເປັນຈິງ ພ້ອມທັງຊອກໃຫ້ເຫັນຜົນງານທີ່ສາມາດເຮັດສຳເລັດໃນໄລຍະຜ່ານມາ ມີຈຸດດີ, ຈຸດອ່ອນ, ຂໍ້ຄົງຄ້າງ ແລະ ບົດຮຽນທີ່ສາມາດຖອດຖອນໄດ້ ບົນພື້ນຖານຄວາມຖືກຕ້ອງ ແລະ ສອດຄ່ອງກັບສະພາບຄວາມເປັນຈິງ.

ຕໍ່ຈາກໜ້າ 6

ທີ່ຕ້ອງເອົາໃຈໃສ່ ເປັນຕົ້ນແມ່ນການຈັດຕັ້ງປະຕິບັດແຜນການຜະລິດເປັນສິນຄ້າເພື່ອສົ່ງອອກຍັງບໍ່ທັນເຮັດໄດ້ຢ່າງເປັນຮູບປະທຳ, ການຫັນເປັນທັນສະໄໝ ໃນການຄຸ້ມຄອງເກັບລາຍຮັບ ຍັງເຮັດບໍ່ທັນໄດ້ໝົດ, ການອອກມາດຕະການດ້ານການປະຢັດ ແລະ ຕ້ານການຟູມເຟືອຍ ໃນທົ່ວສັງຄົມຍັງບໍ່ທົ່ວເຖິງ, ການຄຸ້ມຄອງລາຄາສິນຄ້າ, ອັດຕາແລກປ່ຽນຍັງເຮັດບໍ່ທັນດີເທົ່າທີ່ຄວນ, ຕົ້ນປີ 2023 ມານີ້ ຕົວເລກເງິນເຟີ້ຂອງແຂວງຫຼວງພະບາງ ສູງກວ່າໝູ່ໃນທົ່ວປະເທດ (ເກືອບ 50%) ການແກ້ໄຂຫຼາຍບັນຫາທີ່ເກີດຂຶ້ນ ໃນຂົງເຂດເສດຖະກິດ ຍັງບໍ່ທັນເດັດຂາດ, ເຂັ້ມງວດຕາມກົດໝາຍ.

+ ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ເຫັນວ່າ ບັນດາວຽກງານຈຸດສຸມຂອງວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດແມ່ນໄດ້ມີການຈັດຕັ້ງຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ເປັນຕົ້ນແມ່ນການສ້າງຄວາມຮັບຮູ້, ຄວາມເຂົ້າໃຈຕໍ່ຜົນຮ້າຍຂອງຢາເສບຕິດ, ເຜີຍແຜ່ນິຕິກຳ ແລະ ກົດໝາຍທີ່ກ່ຽວຂ້ອງ, ການປັບປຸງດ້ານກົງຈັກການຈັດຕັ້ງ ແລະ ຍົກລະດັບຄວາມສາມາດໃນການເຄື່ອນໄຫວຂອງອົງການທີ່ກ່ຽວຂ້ອງ ຕໍ່ການແກ້ໄຂບັນຫາຢາເສບຕິດ, ການຍົກສູງປະສິດທິພາບດ້ານການຄຸ້ມຄອງ-ຊີ້ນຳການແກ້ໄຂບັນຫາຢາເສບຕິດ ແລະ ປັບປຸງຂີດຄວາມສາມາດ ໃນການເຄື່ອນໄຫວເຮັດໜ້າທີ່ຂອງລະບົບການເມືອງ ນັບແຕ່ຂັ້ນແຂວງຈົນເຖິງຂັ້ນບ້ານ ເຮັດໃຫ້ບັນຫາຢາເສບຕິດພາຍໃນແຂວງ ໄດ້ຮັບການແກ້ໄຂຫຼາຍພໍສົມຄວນ.

ເຖິງຢ່າງໃດກໍຕາມ ໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຕ້ອງໄດ້ເອົາໃຈໃສ່ແກ້ໄຂ ເປັນຕົ້ນແມ່ນການໂຄສະນາເຜີຍແຜ່ນິຕິກຳ ແລະ ຜົນຮ້າຍຂອງຢາເສບຕິດ ຍັງເຮັດບໍ່ທັນໄດ້ກວ້າງຂວາງ ແລະ ເລິກເຊິ່ງ, ຄວາມເປັນເຈົ້າການຂອງຄອບຄົວ ແລະ ລະບົບການເມືອງຢູ່ຮາກຖານຈຳນວນບໍ່ໜ້ອຍຕໍ່ວຽກງານຄຸ້ມຄອງແກ້ໄຂບັນຫາຢາເສບຕິດຍັງບໍ່ສູງ ສ່ວນຫຼາຍຍັງເຂົ້າໃຈວ່າແມ່ນໜ້າທີ່ຂອງເຈົ້າໜ້າທີ່ຕຳຫຼວດ. ບັນຫານີ້ ຄະນະພັກແຕ່ລະຂັ້ນ ຕ້ອງໄດ້ເອົາໃຈໃສ່ນຳພາ-ຊີ້ນຳຢ່າງໃກ້ຊິດຕື່ມອີກ ຈຶ່ງຈະໄດ້ຮັບຜົນສຳເລັດດີຂຶ້ນ.

ໃນໂອກາດນີ້, ທ່ານ ວິງສະຫວັນ ເທບພະຈັນ ຍັງໃຫ້ຮູ້ຕື່ມວ່າ: ໃນຕໍ່ໜ້າຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 6, ຄະນະປະຈຳສະພາປະຊາຊົນແຂວງ, ຈະໄດ້ສົມທົບກັບອົງການປົກຄອງແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ສຸມໃສ່ແກ້ໄຂແຕ່ລະບັນຫາທີ່ກ່າວມານັ້ນ ດັ່ງນີ້:

1. ບັນຫາການລັບລອບຂຸດຄົ້ນແຮ່ຄຳ ຕ້ອງໄດ້ຮັບການແກ້ໄຂຢ່າງເຂັ້ມງວດ ແລະ ເດັດຂາດ ຕ້ອງຫັນໃຫ້ເຂົ້າສູ່ກົດໝາຍ ແລະ ລະບຽບການ. ທຸກພາກສ່ວນທີ່ກ່ຽວຂ້ອງຕ້ອງໄດ້ຮ່ວມມືກັນ ທັງເປັນເຈົ້າການ ໃນການແກ້ໄຂໃຫ້ໄດ້ຢ່າງຂາດຕົວ ເນື່ອງຈາກເປັນບັນຫາທີ່ຫຍຸ້ງຍາກສັບສົນທີ່ສຸດເຊິ່ງເປັນສາເຫດໃຫ້ເກີດປາກົດການຫຍໍ້ທໍ້ຕ່າງໆນຳມາ ເປັນຕົ້ນແມ່ນໄດ້ກະທົບຕໍ່ຄວາມເຊື່ອໝັ້ນຂອງປະຊາຊົນ ທີ່ມີຕໍ່ການນຳພາຂອງພັກ-ລັດ ແລະ ຜົນສັກສິດຂອງກົດໝາຍ; ບັນຫາການໃຫ້ ແລະ ຮັບສິນບົນ, ບັນຫາຢາເສບຕິດ ແລະ ບັນຫາອື່ນໆອີກ.

2. ບັນຫາຢາເສບຕິດ ໃນຕໍ່ໜ້າຈະໄດ້ສຸມໃສ່ແກ້ໄຂບັນຫານີ້ ຢ່າງເຂັ້ມງວດ ແລະ ເດັດຂາດ ໂດຍເນັ້ນໃສ່ການໂຄສະນາ, ເຜີຍແຜ່ຄວາມຮູ້ກ່ຽວກັບຜົນຮ້າຍ ແລະ ມາດຕະການຕໍ່ບັນຫາຢາເສບຕິດ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ທັງຍົກສູງຄວາມເປັນເຈົ້າການຂອງຄະນະພັກ-ຄະນະນຳແຕ່ລະຂັ້ນ, ຍົກລະດັບຄວາມຮູ້ແລະຄວາມຕື່ນຕົວຂອງເຈົ້າໜ້າທີ່, ປຸກລະດົມໃຫ້ພົນລະເມືອງທຸກຄົນ ມີຄວາມຕື່ນຕົວຮັບຮູ້ ແລະ ເຂົ້າໃຈບັນຫາຢາເສບຕິດ ຫຼີກເວັ້ນຄວາມເຂົ້າໃຈທີ່ວ່າ ການແກ້ໄຂບັນຫາຢາເສບຕິດແມ່ນພາລະບົດບາດຂອງເຈົ້າໜ້າທີ່ຕຳຫຼວດ. ບັນຫານີ້ ຄະນະພັກແຕ່ລະຂັ້ນຕ້ອງເອົາໃຈໃສ່ນຳພາ-ຊີ້ນຳຢ່າງໃກ້ຊິດ ເພື່ອໃຫ້ພົນລະເມືອງທຸກຄົນ ເຂົ້າໃຈວ່າ ການແກ້ໄຂບັນຫາຢາເສບຕິດ ແມ່ນບັນຫາຂອງໝົດທຸກຄົນ; ຜູ້ກະທຳຜິດຕ້ອງໄດ້ຮັບການລົງໂທດຕາມກົດໝາຍຢ່າງເຂັ້ມງວດ.

3. ບັນຫາອັດຕາເງິນເຟີ້, ລາຄານ້ຳມັນ ແລະ ລາຄາສິນຄ້າອຸປະໂພກ-ບໍລິໂພກທີ່ສູງຂຶ້ນ, ໃນຕໍ່ໜ້າ ຈະໄດ້ສຸມໃສ່ແກ້ໄຂ ເປັນຕົ້ນ: ການຊຸກຍູ້ສົ່ງເສີມດ້ານກະສິກຳການປູກ-ການລ້ຽງ, ການຜະລິດສິນຄ້າເພື່ອຊົມໃຊ້ພາຍໃນ ແລະ ສົ່ງອອກ, ການລ້ຽງສັດເປັນລ໋ອກເປັນຟາມ ໃຫ້ມີການຂະຫຍາຍຕົວ, ມອບໃຫ້ພະແນກການກ່ຽວຂ້ອງຊຸກຍູ້, ຕິດຕາມກວດກາ ແລະ ຄຸ້ມຄອງລາຄາສິນຄ້າໃນທ້ອງຕະຫຼາດ ເພື່ອບໍ່ໃຫ້ມີເອົາປຽບຜູ້ອຸປະໂພກ-ບໍລິໂພກ, ເອົາໃຈໃສ່ຊຸກຍູ້ພາກສ່ວນທະນາຄານ ແລະ ສະຖາບັນການເງິນພາຍໃນແຂວງ ໃນການສ້າງສະຖຽນລະພາບດ້ານເງິນຕາ; ຍົກສູງປະສິດທິພາບໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ; ເອົາໃຈໃສ່ໂຄສະນາເຜີຍແຜ່ກົດໝາຍ, ນິຕິກຳໃຕ້ກົດໝາຍທີ່ສຳຄັນຂອງແຂວງ, ຍົກສູງຄຸນນະພາບການບໍລິຫານລັດ ດ້ວຍການປັບປຸງກົງຈັກການຈັດຕັ້ງ ໄປຄຽງຄູ່ກັບການຍົກລະດັບຄວາມຮູ້ຄວາມສາມາດຂອງພະນັກງານ-ລັດຖະກອນ ໃນຈັດຕັ້ງປະຕິບັດວຽກງານຕ່າງໆ ໃຫ້ມີປະສິດທິພາບສູງຂຶ້ນ.

## ສະພາປະຊາຊົນແຂວງວຽງຈັນ ປາຖະກະຖາ ແລະ ເຜີຍແຜ່ເອກະສານສຳຄັນ

(ສພຊ) ສະພາປະຊາຊົນແຂວງວຽງຈັນ ໄດ້ຈັດພິທີປາຖະກະຖາທົບທວນຫວນຄືນເຖິງມູນເຊື້ອຂອງສອງວັນປະຫວັດສາດທີ່ສຳຄັນຂອງຊາດ ແລະ ເຜີຍແຜ່ເອກະສານສຳຄັນຈຳນວນໜຶ່ງ ເມື່ອວັນທີ 11 ທັນວາ 2023 ພາຍໃຕ້ການເປັນປະທານຮ່ວມຂອງທ່ານ ບຸນສອນ ເພັດລາວັນ ປະທານສະພາປະຊາຊົນແຂວງວຽງຈັນ ແລະ ທ່ານ ລຳໄມ ກູດລາວົງ ຮອງປະທານສະພາປະຊາຊົນແຂວງວຽງຈັນ; ມີຮອງປະທານສະພາປະຊາຊົນແຂວງ, ຄະນະກຳມະການ, ຮອງເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ, ສະມາຊິກພັກ, ພະນັກງານພາຍໃນສະພາປະຊາຊົນແຂວງວຽງຈັນເຂົ້າຮ່ວມຢ່າງພ້ອມພຽງ.




ເອກະສານທີ່ນຳມາເຊື່ອມຊຶມໃນຄັ້ງນີ້ ມີເອກະສານປາຖະກະຖາສະເຫຼີມສະຫຼອງວັນຊາດທີ 2 ທັນວາ ຄົບຮອບ 48 ປີ, ວັນເກີດປະທານໄກສອນ ພົມວິຫານ ຄົບຮອບ 103 ປີ ແລະ ຜົນສຳເລັດກອງປະຊຸມຄົບຄະນະບໍລິຫານງານພັກກາງສະໄໝທີ VI ຂອງອົງຄະນະພັກແຂວງ; ເອກະສານມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 7 ສະໄໝທີ XI; ມະຕິວ່າດ້ວຍສືບຕໍ່ຍູ້ແຮງງານຜັນຂະຫຍາຍແນວທາງປ່ຽນແປງໃໝ່ ສູ່ລວງເລິກສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານໃນການນຳພາຂອງພັກ.

ໃນພິທີ, ທ່ານ ບຸນສອນ ເພັດລາວັນ ໄດ້ກ່າວປາຖະກະຖາ ໂດຍຫວນຄືນມູນເຊື້ອຂອງຊາດທີ 2 ທັນວາ ໄຊຊະນະອັນໃຫ່ຍຫຼວງຂອງປວງຊົນລາວໃນການຕໍ່ສູ້ກູ້ຊາດ, ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ແລະ ການພັດທະນາຢູ່ແຂວງວຽງຈັນ 48 ປີ ເຊິ່ງວັນທີ 2 ທັນວາ 1975 ແມ່ນວັນທີ່ມີຄວາມໝາຍຄວາມສຳຄັນສຳລັບທົ່ວພັກ, ທົ່ວລັດ ແລະ ທົ່ວປວງຊົນລາວຕະຫຼອດໄລຍະຂອງການຕໍ່ສູ້ອັນເນື່ອງນິດລຽນຕິດເກືອບໜຶ່ງສັດຕະວັດ ຕ້ານຈັກກະພັດລ່າເມືອງຂຶ້ນແບບເກົ່າ ແລະ ແບບໃໝ່; ໄລຍະທີ່ດຸເດືອດ, ຂ້ຽວຂາດ, ຫຍຸ້ງຍາກ, ລຳບາກກວ່າໝູ່ໝົດ; ແຕ່ກໍເປັນໄລຍະຕໍ່ສູ້ຕ້ານກັບຈັກກະພັດລ່າເມືອງຂຶ້ນແບບໃໝ່ ພາຍໃຕ້ການນຳພາອັນປີຊາສາມາດ ແລະ ສະຫຼາດສ່ອງໃສຂອງພັກ ປະຊາຊົນປະຕິວັດລາວ ໂດຍມີປະທານ ໄກສອນ ພົມວິຫານ ທີ່ແສນເຄົາລົບຮັກເປັນຜູ້ນຳພາ; ວັນຊາດທີ 2 ທັນວາ 1975 ແມ່ນວັນແຫ່ງໄຊຊະນະອັນຍິ່ງໃຫຍ່, ທີ່ແລກມາດ້ວຍເລືອດເນື້ອເຫື່ອໄຄຂອງນັກຮົບປະຕິວັດ ແລະ ປະຊາຊົນບັນດາເຜົ່າບໍ່ຈັກວ່າເທົ່າໃດ, ພາຍໃຕ້ການຊີ້ນຳ-ນຳພາອັນສະຫຼາດສ່ອງໃສຂອງພັກປະຊາຊົນປະຕິວັດລາວໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ຕະຫຼອດໄລຍະ 48 ຜ່ານມາ, ເຮັດໃຫ້ຊາດລາວຂອງພວກເຮົາເປັນທີ່ຮັບຮູ້ໃນເວທີສາກົນ, ສະຖານະຂອງຊາດລາວໄດ້ຮັບການເຊີດຊູສູງເດັ່ນຂຶ້ນໃນເວທີໂລກ; ການສະເຫຼີມສະຫຼອງວັນສະຖາປະນາສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ວັນເກີດຂອງປະທານ ໄກສອນ ພົມວິຫານ ໃນປີນີ້ ແມ່ນຢູ່ໃນທ່າມກາງເຫດການສຳຄັນຂອງແຂວງ ເພາະເປັນຊ່ວງໄລຍະທີ່ຊາວແຂວງວຽງຈັນ ພວມເບີກບານມ່ວນຊື່ນ ຂໍ່ານັບຊົມເຊີຍຜົນສຳເລັດຂອງກອງປະຊຸມຄົບຄະນະບໍລິຫານງານພັກກາງສະໄໝທີ VI, ຜົນສຳເລັດກອງປະຊຸມຄົບຄະນະບໍລິຫານງານພັກແຂວງຄັ້ງທີ 11 ສະໄໝ VI ຂອງອົງຄະນະພັກແຂວງວຽງຈັນ, ກອງປະຊຸມສະຫຼຸບວຽກງານກໍ່ສ້າງຮາກຖານການເມືອງ ແລະ ວຽກງານ 3 ສ້າງປີ 2023 ທີ່ສຳເລັດລົງຢ່າງຈົບງາມ ແລະ ເປັນຊ່ວງໄລຍະທີ່ກະກຽມດຳເນີນກອງປະຊຸມ 3 ຂັ້ນຢ່າງເປັນຂະບວນຟົດຟື້ນ.

ໃນໂອກາດນີ້, ປະທານກອງປະຊຸມຍັງໄດ້ກ່າວຕີລາຄາສູງຕໍ່ຄວາມໝາຍສຳຄັນໃນການປາຖະກະຖາເພື່ອເຮັດໃຫ້ບັນດາສະມາຊິກພັກ, ພະນັກງານ-ລັດຖະກອນທີ່ເຂົ້າຮ່ວມລະນຶກຄືນເຖິງເຫດການປະຫວັດສາດ, ເຊື່ອມຊຶມກຳແໜ້ນຢ່າງເລິກເຊິ່ງຕໍ່ມູນເຊື້ອຂອງຊາດ, ມູນເຊື້ອອັນປະເສີດຂອງປະທານ ໄກສອນ ພົມວິຫານ ຜູ້ນຳທີ່ຍິ່ງໃຫຍ່ຂອງປວງຊົນລາວບັນດາເຜົ່າ ໃນການນຳພາຕໍ່ສູ້ກູ້ຊາດ, ປົກປັກຮັກສາ ແລະ ສ້າງສາປະເທດຊາດຈົນເຖິງທຸກມື້ນີ້.

# ຕິດຕາມກວດກາ ແລະ ຊຸກຍູ້ວຽກງານ ຢູ່ເມືອງບໍລິຄັນ ແຂວງບໍລິຄຳໄຊ



(ສພຊ) ວັນທີ 5 ທັນວາ 2023 ທ່ານ ເລື່ອນວິໄລ ຈັນທະລາພັນ ຮອງປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 11, ຮອງປະທານສະພາປະຊາຊົນແຂວງບໍລິຄຳໄຊ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດຄາດໝາຍໃນຂົງເຂດວຽກງານສຶກສາທິການ ແລະ ກິລາ ແລະ ຕິດຕາມກວດກາການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ທີ່ໄດ້ຮັບຜົນກະທົບຈາກໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳງຽບ 1 ເມືອງບໍລິຄັນ; ເຂົ້າຮ່ວມໂດຍທ່ານ ໄມທອງ ແກ້ວວຽງຄຳ ຮອງເຈົ້າເມືອງບໍລິຄັນ, ມີບັນດາທ່ານສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ, ຫົວໜ້າ-ຮອງຫົວໜ້າພະແນກການ ແລະ ຫ້ອງການທີ່ກ່ຽວຂ້ອງຂອງເມືອງເຂົ້າຮ່ວມ.

ການເຄື່ອນໄຫວເຮັດວຽກໃນຄັ້ງນີ້, ກໍເພື່ອເປັນການເກັບກຳຂໍ້ມູນລາຍງານຕໍ່ກອງປະຊຸມ ປະຈຳປີ 2023 ຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 11 ແລະ ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງຊຸດທີ II ໂດຍໄດ້ຮັບຟັງການລາຍງານຈາກບັນດາຫ້ອງການທີ່ກ່ຽວຂ້ອງພາຍໃນເມືອງ ໂດຍສະເພາະວຽກງານໃນຂົງເຂດວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ເປັນຕົ້ນແມ່ນການຈັດຕັ້ງປະຕິບັດບັນດາຄາດໝາຍ, ການຜັນຂະຫຍາຍມະຕິ 09/ລບ, ລົງວັນທີ 17 ກໍລະກົດ 2023 ກ່ຽວກັບນະໂຍບາຍ, ມາດຕະການແກ້ໄຂບັນຫາຂາດແຄນຄູ, ການປະລະການຮຽນ ແລະ ການສົ່ງເສີມເຂົ້າຮຽນວິຊາຊີບ, ການຈັດສັນ, ຍົກຍ້າຍ ແລະ ຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳງຽບ 1 ເພື່ອຍົກໃຫ້ເຫັນສະພາບການຈັດຕັ້ງປະຕິບັດວຽກງານດັ່ງກ່າວສະດວກ, ຂໍ້ຫຍຸ້ງຍາກ ປາກົດການຫຍໍ້ທໍ້ຕ່າງໆ ເພື່ອເປັນຂໍ້ມູນໃຫ້ແກ່ຄະນະສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງນຳສະເໜີຕໍ່ພາກສ່ວນກ່ຽວຂ້ອງຄົ້ນຄວ້າພິຈາລະນາແກ້ໄຂໃຫ້ສອດຄ່ອງຕາມກົດໝາຍ, ລະບຽບການ ແລະ ນະໂຍບາຍຕ່າງໆທີ່ກ່ຽວຂ້ອງ.

**(ນາງ ໂສລະຢ້າ)**

# ກອງປະຊຸມຄົບຄະນະຂອງກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ




(ສພຊ) ເມື່ອບໍ່ດົນມານີ້ ທີ່ສະພາປະຊາຊົນແຂວງຄຳມ່ວນ, ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ຄຍປປ) ສະພາປະຊາຊົນແຂວງຄຳມ່ວນໄດ້ຈັດກອງປະຊຸມຄົບຄະນະປະຈຳປີ 2023 ພາຍໃຕ້ການເປັນປະທານກອງປະຊຸມຂອງທ່ານ ຄຳສຸກ ວັນທະວົງສາ ປະທານ ຄຍປປ ສະພາປະຊາຊົນແຂວງ ໂດຍການເຂົ້າຮ່ວມມີທ່ານ ບົວພັນ ແສງຈັນ ຮອງປະທານສະພາປະຊາຊົນແຂວງຄຳມ່ວນ, ຜູ້ຊີ້ນຳວຽກງານຍຸຕິທຳ ແລະ ປກຊ-ປກສ, ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງແຂວງ, ສະມາຊິກສະພາປະຊາຊົນແຂວງທີ່ສັງກັດ ຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ, ມີຄະນະກອງບັນຊາການທະຫານແຂວງ, ປກສ ແຂວງ, ອົງການກວດກາລັດແຂວງ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ພະແນກຍຸຕິທຳແຂວງ ແລະ ພາກສ່ວນກ່ຽວຂ້ອງ.

ກອງປະຊຸມໄດ້ຮັບຟັງຮ່າງບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024 ຂອງຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ສະພາປະຊາຊົນແຂວງຄຳມ່ວນ ຊຸດທີ II ສະເໜີໂດຍທ່ານ ພັທ. ຈັນເພັງ ແກ້ວມະນີ ຮອງປະທານ ຄຍປປ. ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມໄດ້ຜັດປ່ຽນກັນປະກອບຄຳຄິດຄຳເຫັນໃສ່ຮ່າງບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງກຳມະການດັ່ງກ່າວ. ພ້ອມນັ້ນ, ຍັງໄດ້ຮັບຟັງການຈັດຕັ້ງປະຕິບັດວຽກງານປະຈຳປີ 2023 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2024 ຂອງອົງການໄອຍະການປະຊາຊົນແຂວງ, ການຈັດຕັ້ງປະຕິບັດວຽກງານປະຈຳປີ 2023 ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີ 2024 ປະສານປະຊາຊົນແຂວງ ແລະ ຮັບຟັງການລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດຈາກ ປກສ ແຂວງ.

ໂອກາດດັ່ງກ່າວ, ທ່ານ ບົວພັນ ແສງຈັນ ໄດ້ມີຄຳເຫັນໂອ້ລົມ ແລະ ໃຫ້ທິດຊີ້ນຳຕໍ່ກອງປະຊຸມຄົບຄະນະກຳມະການຄັ້ງນີ້ ແມ່ນມີຄວາມໝາຍຄວາມສຳຄັນ ເຊິ່ງເນື້ອແທ້ແມ່ນບັ້ນກວດກາ-ຕີລາຄາຄືນໃນການຈັດຕັ້ງປະຕິບັດພາລະບົດບາດຂອງ ຄຍປປ ໃນການຈັດຕັ້ງປະຕິບັດເຄື່ອນໄຫວວຽກງານ, ການຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ-ກົດໝາຍ ກໍຄືຄຳຮ້ອງ-ຄຳສະເໜີຂໍຄວາມເປັນທຳຂອງນາຍ ແລະ ພົນທະຫານ-ຕຳຫຼວດ ຕະຫຼອດຮອດປະຊາຊົນບັນດາເຜົ່າໃນທົ່ວແຂວງຄຳມ່ວນ, ຕິດພັນກັບການພົວພັນປະສານງານອຳນວຍຄວາມສະດວກເຊິ່ງກັນແລະກັນ ລະຫວ່າງສະພາປະຊາຊົນແຂວງກັບກອງກຳລັງ, ອົງການ, ພະແນກການທີ່ກ່ຽວຂ້ອງເພື່ອນຳເອົາຄວາມຍຸຕິທຳມາໃຫ້ສັງຄົມ; ພ້ອມກັນນັ້ນ, ກອງປະຊຸມຄັ້ງນີ້ບໍ່ພຽງແຕ່ເປັນການສະຫຼຸບຕີລາຄາບັນດາໝາກຜົນ, ບົດຮຽນໃນການຈັດຕັ້ງປະຕິບັດບັນດາມະຕິກອງປະຊຸມສະໄໝສາມັນເທື່ອທີ 4-5 ຂອງສະພາປະຊາຊົນແຂວງຄຳມ່ວນ ຊຸດທີ II, ເພື່ອບັນລຸເປົ້າໝາຍໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານມີຄວາມໂປ່ງໃສ, ເປັນທຳ ແລະ ຖືກຕ້ອງຕາມກົດໝາຍ, ເພື່ອເຮັດໃຫ້ວຽກງານຕິດຕາມກວດກາແລະແກ້ໄຂຄຳຮ້ອງຂໍຄວາມເປັນທຳ ມີປະສິດທິພາບຍິ່ງຂຶ້ນ.

**(ເອື້ອ ມະໂນສິງ)**

# ສະພາປະຊາຊົນແຂວງຈຳປາສັກ ມອບອຸປະກອນຮັບໃຊ້ສະໜາມກິລາບານເຕະເມືອງຈຳປາ



(ສພຊ) ໃນໂອກາດທີ່ຄະນະນຳຂອງສະພາປະຊາຊົນແຂວງຈຳປາສັກ ເຄື່ອນໄຫວຕິດຕາມກວດກາເກັບກຳຂໍ້ມູນການໃຫ້ເຊົ່າ-ສຳປະທານເນື້ອທີ່ດິນລັດ ຢູ່ເຂດເມືອງຈຳປາສັກ ເມື່ອຕົ້ນເດືອນຜ່ານມາ ນຳໂດຍທ່ານ ມະນີວົງ ແສນລາດ ຄະນະປະຈຳສະພາປະຊາຊົນແຂວງຈຳປະສັກ ທັງເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 15 ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ພ້ອມດ້ວຍຄະນະ ສົມທົບກັບທ່ານ ໄພສານ ອ່ອນໄຊວຽງ ຮອງເລຂາພັກເມືອງ, ປະທານກວດກາພັກ-ລັດເມືອງ ທັງເປັນຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງໂພນທອງ ພ້ອມດ້ວຍຄະນະ ໂດຍໄດ້ເຮັດວຽກຮ່ວມກັບຄະນະນຳອົງການປົກຄອງເມືອງຈຳປາສັກ ນຳໂດຍທ່ານ ສະຫວາດ ແກ້ວບັນດິດ ກຳມະການພັກແຂວງ, ເລຂາພັກເມືອງ, ເຈົ້າເມືອງຈຳປາສັກ ພ້ອມດ້ວຍບັນດາທ່ານໃນຄະນະນຳ ແລະ ວິຊາຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ພາຍຫຼັງສຳເລັດການດຳເນີນກອງປະຊຸມຮັບຟັງການລາຍງານສະພາບການລວມໃນການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງການໃຫ້ເຊົ່າ-ສຳປະທານເນື້ອທີ່ດິນລັດຂອງເມືອງ ໄດ້ມີພິທີມອບ-ຮັບອຸປະກອນພາກສະໜາມທີ່ຈະປະກອບເຂົ້າໃສ່ສະໜາມກິລາບານເຕະຂອງເມືອງຈຳປາສັກ ທີ່ສ້າງຂຶ້ນໃໝ່ ປະກອບມີ: ຕາໜ່າງປະຕູ 1 ຄູ່, ເສົາທຸງແຈສະໜາມ 4 ອັນ ແລະ ບານເຕະ ຈຳນວນໜຶ່ງ ລວມມູນຄ່າ 3 ລ້ານກວ່າກີບ ໂດຍການມອບຂອງທ່ານ ມະນີວົງ ແສນລາດ ຕາງໜ້າໃຫ້ຄະນະປະຈຳສະພາປະຊາຊົນ ແລະ ຮັບໂດຍທ່ານ ສະຫວາດ ແກ້ວບັນດິດ; ມີບັນດາທ່ານຄະນະນຳ ແລະ ສະມາຊິກສະພາປະຊາຊົນແຂວງ, ຄະນະນຳອົງການປົກຄອງເມືອງຈຳປາສັກເຂົ້າຮ່ວມ.

ອຸປະກອນຈຳນວນດັ່ງກ່າວ ແມ່ນໄດ້ຮັບການຊ່ວຍເຫຼືອຈາກບໍລິສັດ ພອນຈະເລີນກໍ່ສ້າງຂົວທາງຈຳກັດ ແລະ ສະຫະພັນກິລາບານເຕະແຂວງຈຳປາສັກ.

ໃນໂອກາດດັ່ງກ່າວ, ທ່ານ ສະຫວາດ ແກ້ວບັນດິດ ໄດ້ກ່າວສະແດງຄວາມຂອບໃຈ ແລະ ມອບໃບກຽດຕິຄຸນເພື່ອການຍ້ອງຍໍສັນລະເສີນ. ສຳລັບອຸປະກອນທີ່ນຳມາຊ່ວຍເຫຼືອເມືອງຈຳປາສັກໃນຄັ້ງນີ້ ຈະໄດ້ນຳໃຊ້ເຂົ້າໃນການຈັດການແຂ່ງຂັນກິລາບານເຕະລາຍການຕ່າງໆຕາມແຜນການທີ່ຄະນະນຳຂອງເມືອງກຳນົດໄວ້ ໂດຍສະເພາະການແຂ່ງຂັນກິລາບານເຕະເພື່ອສ້າງຂະບວນການຂໍ່ານັບຮັບຕ້ອນ ແລະ ສະເຫຼີມສະຫຼອງວັນສຳຄັນຂອງຊາດທີ່ຈະມາເຖິງ ໃຫ້ບັນຍາກາດຟົດຟື້ນເບີກບານມ່ວນຊື່ນ ແລະ ສາມາດສ້າງໄດ້ນັກກິລາບານເຕະຊາວໜຸ່ມເຍົາວະຊົນຮຸ່ນສືບທອດຂອງເມືອງ ເຮັດໃຫ້ຊາວໜຸ່ມໄວໜຸ່ມໄດ້ຫັນມາຫຼິ້ນກິລາ ເພື່ອຫ່າງໄກຈາກສິ່ງເສບຕິດ.

**(ວິລະສັກ ກິດຕິພົນ)**




# ມືທີ່ເບິ່ງບໍ່ເຫັນ

# ດົ້ນກົບເມກ



ວະລີທີ່ເວົ້າວ່າ ມືທີ່ເບິ່ງບໍ່ເຫັນ ເປັນຄຳເວົ້າຂອງ Adam smith ນັກເສດຖະສາດທີ່ຢູ່ປະເທດອັງກິດ ເຊິ່ງຄຳເວົ້າດັ່ງກ່າວອາດມີຄວາມໝາຍຕ່າງກັນ ເວລານິຍາມໃສ່ວິຊາການດ້ານຕ່າງໆ ຕົວຢ່າງ: ຄຳນີ້ປາກົດໃຊ້ຄັ້ງທີສອງໃນໜັງສືຂອງເຂົາ ໝາຍເຖິງ ຄົນລວຍທີ່ຂາດຄຸນນະທຳ ແລະ ຈະລິຍະທຳ ເຫັນແກ່ຕົວ ເອົາແຕ່ປະໂຫຍດຂອງຕົນເອງ (ໜັງສື the theory of Moral sentiments) ວະຈີມືທີ່ເບິ່ງບໍ່ເຫັນ ຍັງຖືກຕີຄວາມໝາຍກ່ຽວກັບການຄ້າລະຫວ່າງປະເທດທີ່ຜູກຂາດອຳນວຍປະໂຫຍດແກ່ທຸລະກິດອຸດສາຫະກຳສະເພາະ, ພໍ່ຄ້າບາງຄົນກໍຖືກຊັກຈູງຈາກມືທີ່ເບິ່ງບໍ່ເຫັນ ເພື່ອຜົນປະໂຫຍດຂອງຜູ້ກ່ຽວ.

ຜູ້ຂຽນເຂົ້າໃຈວ່າ: ມືທີ່ເບິ່ງບໍ່ເຫັນໃນທາງເສດຖະກິດ-ການຄ້າທີ່ມີອິດທິພົນຊັກຈູງ ແລະ ຊີ້ນຳເພື່ອສ້າງປະໂຫຍດແກ່ຕົນ ແລະ ພັກພວກ ເປັນອັນຕະລາຍແກ່ສ່ວນລວມຫຼາຍກວ່າ ເພາະຢ່າລືມວ່າ ການເຮັດທຸລະກິດ-ການຄ້າ ມຸ່ງກຳໄລສູງສຸດ ຖ້າບາງຄົນຄວາມໂລບຫຼາຍຍິ່ງຫາວິທີລັດຂັ້ນຕອນ, ບໍ່ເສຍພາສີກໍມີ ຫຼື ເສຍພາສີໃນລາຄາເກົ່າ ອີງໃສ່ຊ່ອງຫວ່າງ ພັກພວກ ທີ່ຮູ້ຈັກຄຸ້ນເຄີຍ ຄອຍຊ່ວຍກັນຢູ່ຫຼັງເວທີ, ມືທີ່ເບິ່ງບໍ່ເຫັນໃນທາງລັດຖະສາດການເມືອງ ກໍຕົກລັກສະນະດຽວກັນ ທີ່ເຂົາຜູ້ນັ້ນຄອຍຊັກໃຍຢູ່ຫຼັງເວທີ ເພື່ອໃຫ້ກົນໄກເປັນໄປຕາມທີ່ເຂົາປາຖະໜາ ເພື່ອສ້າງປະໂຫຍດແກ່ເຂົາ ເຊິ່ງພໍເວົ້າໃຫ້ສັ້ນໄດ້ວ່າ ມືທີ່ເບິ່ງບໍ່ເຫັນ ທັງໃນທາງເສດຖະສາດ ແລະ ລັດຖະສາດ ກໍເປັນອັນຕະລາຍພໍໆກັນ ພາໃຫ້ສ່ວນລວມຊາດ ແລະ ສັງຄົມເສຍປະໂຫຍດ, ຂໍ້ທີ່ໜ້າຄິດສຳລັບຜູ້ເປັນຕົ້ນຄິດເຈົ້າຂອງວະລີນີ້ Adam smith ໄດ້ເນັ້ນໄປທີ່ພຶດຕິກຳມະນຸດທີ່ມີຄວາມໂລບເປັນຕົ້ນເຫດ ບໍ່ວ່າໃນທາງເສດຖະກິດ ແລະ ການເມືອງ, ພໍ່ຄ້າທີ່ຂາດຄຸນນະທຳ ແລະ ສິນທຳ ກໍສາມາດຊັກຈູງໃຫ້ເກີດຜົນເສຍຫາຍທາງເສດຖະກິດແກ່ສ່ວນລວມໄດ້.

ສັງລວມແລ້ວ ຜູ້ຂຽນຄິດວ່າ ມະນຸດບາງຄົນເຖິງຈະຮຽນສູງ, ມີຄວາມຮູ້ສູງນັ້ນ ບໍ່ໝາຍຄວາມວ່າເວລາເຮັດວຽກຈະສ້າງຜົນດີແກ່ຊາດຢ່າງຕາຍໃຈ ແຕ່ມັນຕ້ອງການສິນທຳ, ຄຸນນະທຳປະຈຳໃຈ, ປອດໃສຂາວສະອາດ ຄວບຄູ່ກັບປະລິນຍາ ຈຶ່ງເວົ້າໄດ້ວ່າ ຄຸນສົມບັດສຶກສາ ຄູ່ກັບ ປັນຍາສຶກສາ ບໍ່ດັ່ງນັ້ນ, ສັງຄົມຈະມີບັນຫາຫຼາຍກວ່າຄວາມສະຫງົບສຸກ!

# ພາສາບອກຊາດ

# ດອກຫຍ້າ

ຊາດລາວເປັນຊາດໜຶ່ງໃນອາຊີອາຄະເນ ທີ່ມີປະຫວັດສາດອັນຮຸ່ງເຮືອງ ແລະ ມີອະລິຍະທຳອັນສູງສົ່ງມາແຕ່ບູຮານນະການ; ມໍລະດົກວັດທະນະທຳທາງພາສາ, ວັນນະຄະດີ, ສິລະປະ, ດົນຕີ, ປະຕິມະກຳ, ສະຖາປັດຕະຍາກຳ, ຫັດຖະກຳ ແລະ ອື່ນໆທີ່ປະກອບສ້າງຄຸນຄ່າທາງດ້ານວັດຖຸ ແລະ ຈິດໃຈ ໂດຍໄດ້ຮັບການປົກປັກຮັກສາ ແລະ ສືບຕໍ່ພັດທະນາໃຫ້ຍືນຍົງຢູ່ຄູ່ກັບຊາດລາວທຸກຍຸກທຸກສະໄໝ. ມໍລະດົກທີ່ບັນພະບູລຸດເຮົາໄດ້ສ້າງສົມ ແລະ ຕົກທອດມາໃຫ້ຄົນລາວໄດ້ສືບສານ, ຊົມໃຊ້ ໂດຍຜ່ານໜັງສືຄຳພີໃບລານຫຼາຍໝື່ນຫຼາຍແສນຜູກ ໄດ້ເປັນສັກຂີພິຍານສະແດງເຖິງຫຼັກຖານແຫ່ງວິວັດທະນາການທາງດ້ານພາສາ ແລະ ວັນນະຄະດີລາວຢ່າງຊັດເຈນ ເຊິ່ງເປັນແຫຼ່ງຂໍ້ມູນທາງວິຊາການໃຫ້ແກ່ການຄົ້ນຄວ້າ ເພື່ອຊອກຫາຮ່ອງຮອຍລາຍລັກອັກສອນ ແລະ ພູມປັນຍາອັນຍອດຍິ່ງຂອງນັກປາດອາຈານລາວຜູ້ດີເດັ່ນໃນອະດີດອັນຍາວໄກ; ພາສາປາກເວົ້າ, ການຂີດຂຽນທີ່ອ່ອນຫວານນິ້ມນວນ, ເລິກເຊິ່ງ, ມ່ວນອອນຊອນ ແລະ ອຸດົມຮັ່ງມີຂອງວັນນະຄະດີເລື່ອງຕ່າງໆ ໄດ້ເປັນອູ່ອະລິຍະທຳອັນລ້ຳຄ່າໃຫ້ແກ່ພາສາລາວ.

ຄົນລາວແຕ່ລະຍຸກແຕ່ລະສະໄໝໄດ້ມີຄວາມສະຫງວນຮັກ ຖະໜອມແພງ ແລະ ຕັ້ງໜ້າສືບທອດມໍລະດົກທາງປັນຍາ, ຄຸນຄ່າທາງສິລະປະ, ສີໄມ້ລາຍມື, ຄຸນງາມຄວາມດີ, ມູນເຊື້ອວິລະກຳ ແລະ ມໍລະດົກພາສາຂອງຊາດ ທີ່ບັນພະບູລຸດໄດ້ອຸທິດມອບໝາຍໄວ້ໃຫ້ສືບຕໍ່ກັນມາຢ່າງບໍ່ຂາດສາຍ ໂດຍສະເພາະວັດທະນະທຳທາງພາສາຂອງຊາດລາວເຮົາ ເຖິງວ່າເສດຖະກິດ-ສັງຄົມ, ການເມືອງ, ວັດທະນະທຳ, ວິທະຍາສາດ, ວິທະຍາການ, ເຕັກນິກ ແລະ ເຕັກໂນໂລຊີ ຈະມີການພັດທະນາ ແລະ ຂະຫຍາຍຕົວ ເຊິ່ງມີເຫດຜົນຊຸກຍູ້ໃຫ້ພາສາຂະຫຍາຍຕົວດ້ວຍສັບ ແລະ ສຳນວນໃໝ່ໆຫຼາຍໆຢ່າງ ທັງເປັນສັບທີ່ບັນຍັດຂຶ້ນໃຊ້ເອງພາຍໃນສັງຄົມລາວ ແລະ ສັບທີ່ຢືມເອົາມາຈາກພາສາຕ່າງປະເທດແບບຖືກກໍມີ ບໍ່ຖືກກໍຫຼາຍປົນເປກັນໄປ ອັນເຮັດໃຫ້ຄົນລາວເຮົາປາກເວົ້າຂີດຂຽນ ແລະ ໃຊ້ພາສາລາວແບບຜິດພ້ຽນ ປ່ຽນແປງຈາກເຄົ້າພາສາລາວເດີມ-ຫຼັກການເດີມໄປຊັກໃຊ້.

ດັ່ງນັ້ນ, ເຮົາມາຮ່ວມກັນຄິດ, ຮ່ວມປະດິດສ້າງ, ຮ່ວມສາຍທາງສາມັກຄີແຫ່ງການຮັກພາສາລາວ, ໃຊ້ພາສາລາວ, ປົກປັກຮັກສາ, ຟື້ນຟູສົ່ງເສີມ ແລະ ພັດທະນາພາສາຂອງຊາດເຮົາໃຫ້ຈະເລີນຮຸ່ງເຮືອງໄວ້ດ້ວຍກຽດສັກສີຂອງຄົນລາວຍຸກໃໝ່ ເພື່ອໃຫ້ປະຫວັດສາດໄດ້ຈາລຶກໄວ້ວ່າ "ເຮົາເກີດມາເພື່ອພັດທະນາ ແລະ ສົ່ງເສີມຄຸນຄ່າວັດທະນະທຳ ແລະ ຄວາມກ້າວໜ້າຂອງສັງຄົມ" ດັ່ງທ່ານ ພູມີ ວົງວິຈິດ ໄດ້ຂຽນໄວ້ໃນບົດນຳປຶ້ມໄວຍາກອນລາວຂອງທ່ານຕອນໜຶ່ງວ່າ "ການປົກປັກຮັກສາ ແລະ ຟື້ນຟູຕົວໜັງສື, ຄຳເວົ້າ, ວັນນະຄະດີ ແລະ ຫຼັກວັດທະນະທຳຂອງຊາດມັນສະແດງເຖິງນ້ຳໃຈຮັກຊາດອັນເປັນມໍລະດົກ ແລະ ມູນເຊື້ອອັນປະເສີດແຫ່ງຄວາມພິລະອາດຫານທີ່ພໍ່ແມ່ ປູ່ຍ່າຕາຍາຍ ໄດ້ຖ່າຍທອດມາໃຫ້ແກ່ພວກເຮົາ".

**ຄັດຈາກ: ບົດນຳວັດຈະນານຸກົມ**




# ວິທີເຮັດວຽກ

**ພາກທີ 4**

**ມາລະຍາດ ແລະ ຄຸນສົມບັດຂອງນັກປະຕິວັດ (ຕໍ່)**

ທ່າທີທີ່ 5 ເປັນທ່າທີທີ່ຖືກ, ຄືດັ່ງຈະເວົ້າຕໍ່ໄປ ລຸ່ມນີ້:

ກ) ຈຳແນກຄັກແນ່ໃຫ້ເຫັນຄັກວ່າອັນໃດມັນຖືກ ອັນໃດມັນຜິດ

ຂ) ບໍ່ຍອມປ່ອຍໃຫ້ຜົນສະທ້ອນຂອງຄວາມຄິດທີ່ຜິດພາດຂອງພວກຄົນທີ່ບໍ່ດີນັ້ນ ພົວພັນມາເຖິງຕົນເອງ, ອອກແຮງຮ່ຳຮຽນ ແລະ ເຊີດຊູຜູ້ທີ່ເປັນແບບຢ່າງອັນດີ

ຄ) ບໍ່ປະປ່ອຍຕາມຊ່າງ, ແຕ່ວ່າອອກແຮງແກ້ໄຂຕໍ່ສູ້ ຂໍ້ບົກພ່ອງບໍ່ໃຫ້ມັນຂະຫຍາຍໄດ້ ບໍ່ໃຫ້ມັນນຳຜົນຮ້າຍມາສູ່ພັກຂອງເຮົາໄດ້.

ງ) ບໍ່ເຮັດແບບກົນຈັກ ແຕ່ວ່າຊ່າງໃຊ້ວິທີຕຳຕົນເອງ ແລະ ຕຳໜິກັນ ຊ່ວຍເຫຼືອຕົນເອງ ແລະ ຊ່ວຍເຫຼືອໝູ່ເພື່ອນສະຫາຍຜູ້ອື່ນໃຫ້ແກ້ໄຂຂໍ້ບົກພ່ອງຜິດພາດເພື່ອກ້າວໜ້າ.

ຈ) ສ້າງສາມັກຄີພາຍໃນພັກ ດ້ວຍວິທີການຕໍ່ສູ້ພາຍໃນ, ຍົກຍໍລະບຽບວິໄນ ແລະ ອິດທິພົນຂອງພັກຂຶ້ນໃຫ້ສູງ.

ພວກປະຕິການ ແລະ ພວກສວຍໂອກາດ ແມ່ນຕົວສັດຕູທີ່ລັກລອບເຂົ້າມາຢູ່ໃນພັກເຮົາ ເພື່ອທຳການມ້າງເພ, ເພາະສະນັ້ນ ພວກເຮົາຕ້ອງຕັ້ງໃຈລະມັດລະວັງ ແລະ ຈັດການປ້ອງກັນຕົວຕໍ່ພວກນີ້, ເມື່ອໄດ້ເຫັນວ່າມີຂໍ້ບົກພ່ອງອັນໃດອັນໜຶ່ງເກີດຂຶ້ນໃນພັກເຮົານີ້ ພວກເຮົາຕ້ອງຮີບຊອກຫາວິທີແກ້ໄຂ ແລະ ຂັດຂວາງ ບໍ່ໃຫ້ໃຜສວຍໂອກາດ ເອົາໄປໃຊ້ເຮັດສິ່ງບໍ່ດີໃຫ້ພັກເຮົາໄດ້ ນັ້ນເປັນໜ້າທີ່ຂອງທຸກໆສະມາຊິກທີ່ແທ້ຈິງຂອງພັກ.

ທ່າທີທີ່ສາມ ທີ່ວ່າໃຜເປັນແນວໃດກໍຕາມຊ່າງນັ້ນ ກໍບໍ່ຖືກເໝືອນກັນ. ແຕ່ວ່າພາຍໃນພັກເຮົາ ກໍຍັງຄົງມີຫຼາຍຄົນວາງທ່າທີແນວນີ້ຢູ່ ເປັນຕົ້ນລະຫວ່າງຊັ້ນຕ່ຳຕໍ່ຊັ້ນສູງ, ທ່າທີແນວນັ້ນພາໃຫ້ເກີດນິດໄສ "ເວົ້າຕໍ່ໜ້າແລ້ວຈົ່ມວ່າລັບຫຼັງ", ມັນກໍໃຫ້ເກີດມີຄວາມອຸກອັ່ງ ແລ້ວບໍ່ສາມັກຄີກັນຢູ່ພາຍໃນພັກ. ມັນເຮັດໃຫ້ພວກຄົນໂລເລສາມາດເລັດລອດເຂົ້າມາມ້າງເພຢູ່ໃນພັກໄດ້. ມັນເຮັດໃຫ້ຂໍ້ບົກພ່ອງນັບມື້ນັບກ່າຍກອງຂຶ້ນ ແລະ ຂະຫຍາຍຕົວກວ້າງຂວາງອອກ.

ອ່ານຕໍ່ສະບັບໜ້າ...



# ຂຽນຄຳລາວໃຫ້ຖືກ

# ຄູແສງ

| ຄຳຖືກ | ຄຳຜິດ |
|---|---|
| ຮັກໄຄ່ | ຮັກໃຄ່ |
| ໄຈ້ແຍກ | ໃຈ້ແຍກ |
| ລຳໄສ້ | ລຳໃສ້ |
| ຂັ້ນໄດ | ຂັ້ນໃດ |
| ໄຕ້ໄຟ | ໃຕ້ໄຟ |
| ໝາໄນ | ໝາໃນ |
| ຊີ້ໄຫ້ | ຊີ້ໃຫ້ |
| ຜ້າສະໄບ | ຜ້າສະໃບ |
| ຄາງກະໄຕ | ຄາງກະໃຕ |



## ສຸກສະບາຍທາຍໂລດ

# ໝາກມອນ



ໂດຍ: ສາວແອ່ນ

ໝາກມອນ ເປັນໝາກໄມ້ທີ່ມີປະໂຫຍດຕໍ່ສຸຂະພາບ ເພາະເປັນໝາກໄມ້ທີ່ໃຫ້ພະລັງງານຕ່ຳ ທັງມີສານອາຫານທີ່ສຳຄັນເຊັ່ນ: ຄາໂບໄຮເດດ ແລະ ເສັ້ນໄຍທີ່ເຮັດໃຫ້ອີ່ມໄວ ນອກນີ້, ຍັງຊ່ວຍເພີ່ມພະລັງງານໃຫ້ຮ່າງກາຍອີກດ້ວຍ ນອກນັ້ນ, ຍັງຖືກຈັດເປັນໝາກໄມ້ທີ່ມີນ້ຳຫຼາຍ ເພາະ 88% ຂອງໝາກມອນແມ່ນນ້ຳ ຈຶ່ງສາມາດຊ່ວຍເພີ່ມລະດັບນ້ຳໃນຮ່າງກາຍ ແລະ ຊ່ວຍປ້ອງກັນການຂາດນ້ຳໄດ້.

ໝາກມອນ ຍັງອຸດົມໄປດ້ວຍວິຕາມິນແລະແຮ່ທາດທີ່ສຳຄັນເຊັ່ນ: ວິຕາມິນຊີ, ວິຕາມິນອີ, ວິຕາມິນເຄ 1, ທາດເຫຼັກ, ໂພແທດຊຽມ ແລະ ຍັງເປັນແຫຼ່ງຂອງສານຕ້ານອະນຸມູນອິດສະຫຼະທີ່ມີປະໂຫຍດ ເຊັ່ນ: ແອນໂທໄຊຍານິນ (Anthocyanin), ໄຊຍານິດິນ (Cyanidin), ເມຣິເຊຕິນ (Myricetin), ອາຊິດ ໂຄໂລຈີນິກ (Chlorogenic Acid), ລູທິນ (Rutin) ເຊິ່ງສານຕ້ານອະນຸມູນອິດສະຫຼະເຫຼົ່ານີ້ ແມ່ນດີຕໍ່ລະບົບພູມຕ້ານທານ ແລະ ປ້ອງກັນຈຸລັງໃນຮ່າງກາຍຈາກການຖືກທຳລາຍໂດຍສານອະນຸມູນອິດສະຫຼະ

**ປະໂຫຍດຂອງໝາກມອນ**

**1. ຫຼຸດຜ່ອນຄວາມສ່ຽງຂອງມະເຮັງ**

ສານຕ້ານອະນຸມູນອິດສະຫຼະ ເປັນສານອາຫານສຳຄັນທີ່ຊ່ວຍໃຫ້ລະບົບພູມຕ້ານທານໃນຮ່າງກາຍແຂງແຮງ ຊ່ວຍກະຕຸ້ນການເຮັດວຽກຂອງເຊວ ແລະ ປ້ອງກັນຈຸລັງຕ່າງໆໃນຮ່າງກາຍ ຈາກສານອະນຸມູນອິດສະຫຼະທີ່ບໍ່ດີ ຍິ່ງໄປກວ່ານັ້ນສານຕ້ານອະນຸມູນອິດສະຫຼະຍັງຊ່ວຍປ້ອງກັນບໍ່ໃຫ້ຈຸລັງມະເຮັງຂະຫຍາຍຕົວ ຫຼື ຫຼຸດໂອກາດການເປັນມະເຮັງ

**2. ດີຕໍ່ກັບການຫຼຸດນ້ຳໜັກ**

ໝາກມອນ ມີເສັ້ນໄຍຫຼາຍ ແລະ ແຄລໍຣີຕ່ຳ ຈຶ່ງເໝາະສົມສຳລັບຜູ້ທີ່ຢູ່ໃນໄລຍະຫຼຸດນ້ຳໜັກ ຫຼື ຄວບຄຸມອາຫານ ເສັ້ນໄຍຈະເຮັດໃຫ້ຮູ້ສຶກອີ່ມດົນ, ບໍ່ຫິວເລື້ອຍໆ ແລະ ບໍ່ເຮັດໃຫ້ແຄລໍລີ່ສູງຂຶ້ນ ເພາະວ່າມີແຄລໍລີ່ຕ່ຳ ຈຶ່ງສາມາດຈຳກັດຫຼືຄວບຄຸມພະລັງງານປະຈຳວັນໄດ້.

**3. ດີຕໍ່ສຸຂະພາບຕັບ**

ຕັບເປັນອະໄວຍະວະທີ່ມີຄວາມສຳຄັນຫຼາຍໃນຮ່າງກາຍ ເພາະເຮັດໜ້າທີ່ໃນການກັ່ນຕອງສານພິດຕ່າງໆ ແລະ ທຳລາຍໄຂມັນ ທັງປ້ອງກັນບໍ່ໃຫ້ເລືອດກ້າມເຊິ່ງສານຕ້ານອະນຸມູນອິດສະຫຼະໃນໝາກມອນຖືວ່າດີຫຼາຍສຳລັບຕັບ ເພາະມັນຊ່ວຍລ້າງສານພິດໃນຕັບ ທັງຍັງຊ່ວຍປ້ອງກັນໄຂມັນຈາກການສະສົມໃນຕັບ ເຊິ່ງເປັນໜຶ່ງໃນສາເຫດຂອງພະຍາດໄຂມັນຫຸ້ມຕັບ.

**4. ປັບລະດັບນ້ຳຕານໃນເລືອດໃຫ້ຄົງທີ່**

ລະດັບນ້ຳຕານໃນເລືອດສູງ ສາມາດເພີ່ມຄວາມສ່ຽງຕໍ່ການເປັນພະຍາດຫົວໃຈ ແລະ ພະຍາດເບົາຫວານ ເພື່ອປ້ອງກັນຄວາມສ່ຽງຂອງພະຍາດຊຳເຮື້ອເຫຼົ່ານີ້ ການໃຫ້ຄວາມສຳຄັນຕໍ່ກັບການກິນອາຫານເປັນສິ່ງທີ່ບໍ່ຄວນເບິ່ງຂ້າມ ໂດຍສະເພາະໝາກມອນ ເຊິ່ງເປັນໝາກໄມ້ທີ່ມີເສັ້ນໄຍຫຼາຍ ຖ້າກິນເປັນປະຈຳຈະຊ່ວຍໃຫ້ການດູດຊຶມຂອງນ້ຳຕານໃນກະແສເລືອດຊ້າລົງ ດັ່ງນັ້ນ, ຈຶ່ງຊ່ວຍປ້ອງກັນບໍ່ໃຫ້ລະດັບນ້ຳຕານໃນເລືອດສູງຂຶ້ນ.

**5. ທາດເຫຼັກຫຼາຍ**

ເຖິງວ່າທາດເຫຼັກສ່ວນຫຼາຍຈະມີຢູ່ໃນຊີ້ນ ຫຼື ເຄື່ອງໃນສັດ ແຕ່ໝາກໄມ້ກໍອຸດົມດ້ວຍທາດເຫຼັກເຊັ່ນດຽວກັນ ໂດຍສະເພາະແມ່ນໝາກມອນ ມີປະລິມານທາດເຫຼັກຫຼາຍເຖິງ 2,6 ມິນລິກຣາມ (ຕໍ່ໝາກມອນໜຶ່ງໜ່ວຍ) ເທົ່າກັບ 14% ຂອງປະລິມານທາດເຫຼັກທີ່ຮ່າງກາຍຄວນໄດ້ຮັບໃນແຕ່ລະມື້.

ທາດເຫຼັກມີປະໂຫຍດໃນການຊ່ວຍເກັບຮັກສາ ແລະ ການຂົນສົ່ງອົກຊີແຊນ ໄປສູ່ສ່ວນຕ່າງໆຂອງຮ່າງກາຍ, ປ້ອງກັນບໍ່ໃຫ້ຮ່າງກາຍເກີດອາການຂາດອົກຊີແຊນ ແລະ ຊ່ວຍກະຕຸ້ນການເຕີບໃຫຍ່ຂອງເມັດເລືອດຂາວ ເຊິ່ງດີຕໍ່ລະບົບພູມຕ້ານທານຂອງຮ່າງກາຍ ແລະ ຊ່ວຍປ້ອງກັນອາການແຊກຊ້ອນລະຫວ່າງການຖືພານຳອີກ.

www.sanook.com

## ອາດກະວີລາວ

## ຄືບໍ່ຂຽນຄວາມລາວ?

\# ເຜີດວິຈິດ

❊ ຍຸກສັງຄົມເດັ່ນກ້າວ
ຝູງປະຊາຊົນລາວ
ໂຄສະນາຂາຍຊື້
ພາກັນຂຽນແຕ່ງປ້າຍ

ການແຂ່ງຂັນສູງ
ແຂ່ງຂັນກັນຄ້າ
ຫຼາຍທາງຍາດແຍ່ງ
ພຸງພົ້ວທົ່ວເມືອງ

❊ ແຕ່ຄາວ ລຸງແມ່ປ້າ
ໝາຍເຖິງເຮືອນຮັງເຮົາ
ແຕ່ຍຸກຫຼັງມານີ້
ພາກັນເອີ້ນວ່າບ້ານ

ເອີ້ນວ່າເຄຫັງ
ນັ່ງນອນເນົາຢັ້ງ
ມີຄຳມາປ່ຽນ
ຫຼານນ້ອຍຈື່ຈຳ

❊ ແຕ່ກ່ອນຄຳວ່າບ້ານ
ມີອາຄານຫຼາຍຫຼັງ
ອອນຊອນເດດຽວນີ້
ບອກວ່າຕິດໃສ່ບ້ານ

ລວມໝູ່ເຮືອນຊານ
ຢູ່ໂຮມຮຽງຊ້ອນ
ມີແອເຢັນຕິດປະກາດ
ເຢັນແທ້ແນ່ນອນ

❊ ແອມາຕິດອ້ອນຕ້ອນ
ສັງມາໂຄສະນາ
ປານວ່າແອຂອງເຈົ້າ
ຕິດເຄື່ອງດຽວດັ່ງດ້າມ

ແຂວນຢູ່ໃນເຮືອນ
ວ່າແອຕິດບ້ານ
ເຢັນໄກໄປທົ່ວ
ເຢັນແທ້ທຸກເຮືອນ

❊ ຄົນທີ່ຂາຍແວ່ນແກ້ວ
ວ່າກະຈົກຂອງລາວ
ສັງບໍ່ຄືຄຳເວົ້າ
ເພິ່ນພາເອີ້ນແວ່ນແກ້ວ

ຕິດແຜ່ນໂຄສະນາ
ຈ່າວຂາຍໃຫ້ຄົນຊື້
ຄົນລາວຄາວກ່ອນ
ມາຕັ້ງແຕ່ເດີມ

❊ ປັດຈຸບັນຫາກເລີ້ມ
ຄົນປັບປຸງແປງລົດ
ໂຄສະນາໃນປ້າຍ
ຫຼືວ່າໄດ້ແຕ່ງແຕ້ມ

ຮຽກລົດມາເປັນຍົນ
ແຕ່ງແປງໃຫ້ງາມໂກ້
ປະດັບຍົນແຜ່ນໃຫຍ່
ປະດັບແທ້ໝູ່ຍົນ

❊ ຄຳລາວແຕ່ກ່ອນກໍ້
ສັງບໍ່ເອົາມາຂຽນ
ຫຼືເຈົ້າອາຍເຂົາເວົ້າ
ພາສາລາວ ຄົນລາວຄວນເອກອ້າງ

ມີຢູ່ມະຫາສານ
ໃສ່ຍໍຍັງປ້າຍ
ສຳນວນເຮົາດ້ອຍຄ່າ
ຖະໜອມໃຊ້ຮັກສາ ທ່ານເອີຍ!



## ສັບສາຍລະບາຍ

(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

\# ສາວຈົ້ມ

❊ ຊົມເຊີຍຜົນສຳເລັດຂອງກອງປະຊຸມສະໄໝສາມັນ **ເທື່ອທີ VI** ຂອງ**ສະພາປະຊາຊົນນະຄອນຫຼວງວຽງຈັນ** ໃນນັ້ນໄດ້ຮັບຮອງເອົາຫຼາຍບັນຫາສຳຄັນຂອງຊາດ ກໍຄືທ້ອງຖິ່ນ ໂດຍ**ເສັດສິ້ນ**ລົງຢ່າງເປັນທາງການ **ດ້ວຍຜົນງານອັນຍິ່ງໃຫຍ່** ຕໍ່ໄປພັງຂ່າວລື ຖະແຫຼງເປີດຕາມມາວ່າ**ເລດໃດຊິຕາມຄິວ** ຕໍ່ເປັນ**ທີສອງ**ໃຫ້ ສື່ມວນຊົນເຮົາໄດ້ ຊຽນຜົນງານອອກຂ່າວ ກ່າວໃຫ້ພົງພີ່ນ້ອງ ປະຊາຮູ້ທົ່ວເຖິງ **ນັ້ນແລ້ວ!**

❊ **ນັບ**ຍາມາກາດກະກຽມຕ້ອນຮັບປີໃໝ່ສາກົນ 2024 ເລີ່ມມີຊະບອນພົດຟື້ນ ເຊິ່ງຫຼາຍສຳນັກງານ-ບໍລິສັດ ຊຸ່ມຊ້ຽວສະຫຼຸບ ແລະວາງແຜນກິດຈະກຳຕ່າງໆຢ່າງຄຶກຄື້ນ ແຕ່ແນວໃດກໍດີ **ຂໍໃຫ້ມີສະຕິຕັ້ງ** ເຄົາລົບກົດໝາຍ ລະບຽບກົດຈາລະຈອນ ຜ່ອນຜັນອະໄພພ້ອມ ການເຄື່ອນເຄີນທະຍັບຍ້າຍ ຕາມທາງຂໍທຸກທ່ານ **ຈົ່ງປອດໄພ-ໄປຮອດຈຸດທີ່ຕັ້ງ** ປະສົງມຸ້ງຢ່າງບ່ອນໝາຍ **ທຸກທ່ານເນີ!**

## ຊວນຍິ້ມ

\# ແອ່ນຕຸ້ງ

### ເລື່ອງ: ໂຈນງົ່ງ

ຄົນຂີ້ລັກເຂົ້າໄປໃນເຮືອນຫຼັງໜຶ່ງ ມັນລັກເອົາໂທລະທັດ, ເງິນ, ຄຳ, ເຄື່ອງປະດັບ... ແລະກຽມຊິອອກໄປ ບັງເອີນໄດ້ຍິນສຽງເດັກນ້ອຍຮ້ອງມາໃສ່

**ເດັກນ້ອຍ:** ທ່ານເອີຍ! ລັກເອົາໃບຄະແນນຫຼານໄປນຳແດ່

**ຄົນຂີ້ລັກ :** ???!!!



## ຄະຕິເຕືອນໃຈ

\# ດອກຫຍ້າ

ຮູ້ຖ່ອມຕົນໃຫ້ຄົນຮັກ ດີກວ່າຈັກ ທ່າເບັ່ງ ເກັ່ງອວດເຂົາ
ຄຸນຄວາມດີ ແມ່ນເຫັນເປັນພຽງເງົາ ແຕ່ຕາມຕິດ
ໂຕເຮົາໄປຈົນຕາຍ




# ກົດໝາຍ ວ່າດ້ວຍພິພິທະພັນ

ຕໍ່ຈາກສະບັບກ່ອນ

**ມາດຕາ 14 ຫໍພິພິທະພັນລັດວິສາຫະກິດ**

ຫໍພິພິທະພັນລັດວິສາຫະກິດ ແມ່ນສະຖານທີ່ສະສົມ ທ້ອນໂຮມ, ຄົ້ນຄວ້າ, ວິໄຈ, ຂຶ້ນທະບຽນ, ອະນຸລັກ, ປົກປັກຮັກສາ ແລະ ຈັດວາງສະແດງວັດຖຸພັນທີ່ມີຄຸນຄ່າ ກ່ຽວກັບລັດວິສາຫະກິດ.

**ມາດຕາ 15 ອະນຸສອນສະຖານ**

ອະນຸສອນສະຖານ ແມ່ນສະຖານທີ່ສະສົມຜົນງານ ແລະ ລະນຶກຄຸນງາມຄວາມດີ, ຄວາມພິລະອາດຫານຂອງວິລະຊົນ, ວິລະສະຕີ, ວິລະບຸລຸດ, ບັນພະບຸລຸດ, ຜູ້ນໍາຄົນສໍາຄັນ ທີ່ໄດ້ນໍາໃຊ້ເປັນບ່ອນດໍາລົງຊີວິດ ຫຼື ນໍາໃຊ້ເຂົ້າໃນການຕໍ່ສູ້ໃນແຕ່ລະຍຸກສະໄໝ ແລະ ເຫດການສໍາຄັນອື່ນ ເພື່ອໂຄສະນາ ເຜີຍແຜ່ໃຫ້ສັງຄົມໄດ້ສຶກສາ, ຮຽນຮູ້ ແລະ ເຂົ້າໃຈ.

**ມາດຕາ 16 ຫໍວາງສະແດງ**

ຫໍວາງສະແດງ ແມ່ນສະຖານທີ່ສະສົມທ້ອນໂຮມ, ສຶກສາ, ຄົ້ນຄວ້າ, ວິໄຈ ແລະ ຈັດວາງສະແດງກ່ຽວກັບມູນເຊື້ອປະຕິວັດ, ປະຫວັດການເຄື່ອນໄຫວ ແລະ ວັດຖຸສິ່ງຂອງຕ່າງໆ ຂອງວິລະຊົນ, ວິລະສະຕີ, ວິລະບຸລຸດ, ຜູ້ນໍາ ແລະ ບັນພະບຸລຸດ, ລັດວິສາຫະກິດ ຫຼື ການຈັດຕັ້ງລັດໃດໜຶ່ງ ເພື່ອໂຄສະນາເຜີຍແຜ່ຜົນງານ ແລະ ຜະລິດຕະພັນຂອງຕົນໃຫ້ສັງຄົມໄດ້ສຶກສາ, ຮຽນຮູ້ ແລະ ເຂົ້າໃຈ.

**ມາດຕາ 17 ຫ້ອງວາງສະແດງ**

ຫ້ອງວາງສະແດງ ແມ່ນສະຖານທີ່ໃຊ້ວາງສະແດງຜົນງານ, ຮູບພາບ, ວັດຖຸພັນ, ຜະລິດຕະພັນຂອງການຈັດຕັ້ງລັດ, ລັດວິສາຫະກິດ ຕາມຫົວຂໍ້ ຫຼື ທິວເລື່ອງໃດໜຶ່ງ ເພື່ອໂຄສະນາເຜີຍແຜ່ ແລະ ຮັບໃຊ້ສັງຄົມ.

**ໝວດທີ 2**

**ພິພິທະພັນລວມໝູ່**

**ມາດຕາ 18 ພິພິທະພັນລວມໝູ່**

ພິພິທະພັນລວມໝູ່ ແມ່ນພິພິທະພັນທີ່ສ້າງຕັ້ງຂຶ້ນ ແລະ ຄຸ້ມຄອງໂດຍກຸ່ມຄົນ, ສະມາຄົມ, ຊຸມຊົນໃດໜຶ່ງ ທີ່ຖືກຕ້ອງຕາມກົດໝາຍ ແລະ ຫຼັກວິຊາການດ້ານພິພິທະພັນວິທະຍາ ເພື່ອນໍາໃຊ້ເປັນສະຖານທີ່ສະສົມທ້ອນໂຮມ, ຄົ້ນຄວ້າ, ວິໄຈ, ຂຶ້ນທະບຽນ, ອະນຸລັກ, ປົກປັກຮັກສາ ແລະ ຈັດວາງສະແດງວັດຖຸພັນ ກ່ຽວກັບກຸ່ມຄົນ, ສະມາຄົມ, ຊຸມຊົນ.

ພິພິທະພັນລວມໝູ່ ປະກອບດ້ວຍຫໍວາງສະແດງລວມໝູ່ ແລະ ຫ້ອງວາງສະແດງລວມໝູ່.

**ມາດຕາ 19 ຫໍວາງສະແດງລວມໝູ່**

ຫໍວາງສະແດງລວມໝູ່ແມ່ນ ສະຖານທີ່ ສະສົມ ທ້ອນໂຮມ, ຄົ້ນຄວ້າ, ວິໄຈ, ຂຶ້ນທະບຽນ, ອະນຸລັກ, ປົກປັກຮັກສາ ແລະ ຈັດວາງສະແດງຜົນງານ, ປະຫວັດການເຄື່ອນໄຫວ, ຜະລິດຕະພັນ ແລະ ວັດຖຸສິ່ງຂອງຕ່າງໆທີ່ພົວພັນກັບການດໍາລົງຊີວິດຂອງກຸ່ມຄົນ, ສະມາຄົມ, ຊຸມຊົນໃດໜຶ່ງ ໃຫ້ສັງຄົມໄດ້ສຶກສາ, ຮຽນຮູ້ ແລະ ເຂົ້າໃຈ.

**ມາດຕາ 20 ຫ້ອງວາງສະແດງລວມໝູ່**

ຫ້ອງວາງສະແດງລວມໝູ່ ແມ່ນ ສະຖານທີ່ໃຊ້ວາງສະແດງຜົນງານ, ຮູບພາບ, ວັດຖຸ ຫຼື ຜະລິດຕະພັນຂອງກຸ່ມຄົນ, ສະມາຄົມ, ຊຸມຊົນໃດໜຶ່ງ ຕາມຫົວຂໍ້ ຫຼື ທິວເລື່ອງໃດໜຶ່ງ ເພື່ອໂຄສະນາ ເຜີຍແຜ່ ແລະ ຮັບໃຊ້ສັງຄົມ.

**ໝວດທີ 3**

**ພິພິທະພັນເອກະຊົນ**

**ມາດຕາ 21 ພິພິທະພັນເອກະຊົນ**

ພິພິທະພັນເອກະຊົນ ແມ່ນພິພິທະພັນ ທີ່ສ້າງຕັ້ງຂຶ້ນ ແລະ ຄຸ້ມຄອງໂດຍບຸກຄົນ ຫຼື ນິຕິບຸກຄົນໃດໜຶ່ງ ທີ່ຖືກຕ້ອງຕາມກົດໝາຍ ແລະ ຫຼັກວິຊາການດ້ານພິພິທະພັນວິທະຍາ ເພື່ອນໍາໃຊ້ເປັນສະຖານທີ່ສະສົມ ທ້ອນໂຮມ, ຄົ້ນຄວ້າ, ວິໄຈ, ຂຶ້ນທະບຽນ, ອະນຸລັກ, ປົກປັກຮັກສາ ແລະ ຈັດວາງສະແດງ ວັດຖຸພັນ ຂອງບຸກຄົນ ຫຼື ນິຕິບຸກຄົນນັ້ນ ເປັນຕົ້ນ ພິພິທະພັນເຄື່ອງຫັດຖະກໍາ, ພິພິທະພັນການນຸ່ງຖືຂອງຊົນເຜົ່າ.

ພິພິທະພັນເອກະຊົນ ປະກອບດ້ວຍ ຫໍວາງສະແດງເອກະຊົນ ແລະ ຫ້ອງວາງສະແດງເອກະຊົນ.

**ມາດຕາ 22 ຫໍວາງສະແດງເອກະຊົນ**

ຫໍວາງສະແດງເອກະຊົນ ແມ່ນສະຖານທີ່ສະສົມ ທ້ອນໂຮມ, ຄົ້ນຄວ້າ, ວິໄຈ, ຂຶ້ນທະບຽນ, ອະນຸລັກ, ປົກປັກຮັກສາ ແລະ ຈັດວາງສະແດງຜົນງານ, ປະຫວັດການເຄື່ອນໄຫວ, ຜະລິດຕະພັນ ແລະ ວັດຖຸສິ່ງຂອງຕ່າງໆ ທີ່ພົວພັນກັບການດໍາລົງຊີວິດຂອງ ບຸກຄົນ ຫຼື ນິຕິບຸກຄົນໃດໜຶ່ງ ໃຫ້ສັງຄົມໄດ້ ສຶກສາ, ຮຽນຮູ້ ແລະ ເຂົ້າໃຈ.

**ມາດຕາ 23 ຫ້ອງວາງສະແດງເອກະຊົນ**

ຫ້ອງວາງສະແດງເອກະຊົນ ແມ່ນສະຖານທີ່ໃຊ້ວາງສະແດງຜົນງານ, ຮູບພາບ, ວັດຖຸ ຫຼື ຜະລິດຕະພັນຂອງບຸກຄົນ ຫຼື ນິຕິບຸກຄົນໃດໜຶ່ງ ຕາມຫົວຂໍ້ ຫຼື ທິວເລື່ອງໃດໜຶ່ງເພື່ອໂຄສະນາເຜີຍແຜ່ ແລະ ຮັບໃຊ້ສັງຄົມ.

**ພາກທີ III**

**ວຽກງານພິພິທະພັນ**

**ໝວດທີ 1**

**ກິດຈະການພິພິທະພັນ**

**ມາດຕາ 24 ກິດຈະການພິພິທະພັນ**

ກິດຈະການພິພິທະພັນ ມີ ດັ່ງນີ້:

1. ການສະສົມ ທ້ອນໂຮມ ວັດຖຸພັນ;
2. ການສຶກສາ, ຄົ້ນຄວ້າ, ວິໄຈ, ຈໍາແນກປະເພດວັດຖຸພັນ ແລະ ຄົ້ນຄວ້າເນື້ອໃນ;
3. ການຂຶ້ນທະບຽນວັດຖຸພັນ;
4. ການອະນຸລັກ ແລະ ປົກປັກຮັກສາວັດຖຸພັນ;
5. ການຈັດວາງສະແດງ;
6. ການໂຄສະນາ ເຜີຍແຜ່ ແລະ ນໍາທ່ຽວ;
7. ການຈໍາລອງແບບວັດຖຸພັນ.

**ມາດຕາ 25 ການສະສົມ ທ້ອນໂຮມ ວັດຖຸພັນ**

ການສະສົມທ້ອນໂຮມວັດຖຸພັນແມ່ນການສໍາຫຼວດ, ການເກັບກໍາ, ການລວບລວມເອົາວັດຖຸພັນທີ່ມີຄຸນຄ່າທາງດ້ານວັດທະນະທໍາ, ປະຫວັດສາດ, ທໍາມະຊາດ, ວິທະຍາສາດ ແລະ ສັງຄົມທີ່ໂດດເດັ່ນແຕ່ລະຍຸກແຕ່ລະສະໄໝ ເພື່ອອະນຸລັກ, ປົກປັກຮັກສາວັດຖຸພັນ, ພັດທະນາ ແລະ ສົ່ງເສີມວຽກງານພິພິທະພັນໃຫ້ເກີດປະໂຫຍດສູງສຸດ.

ການສະສົມ ທ້ອນໂຮມວັດຖຸພັນ ໄດ້ມາຈາກການລວບລວມວັດຖຸໃນການຄົ້ນຄວ້າ, ຂຸດຄົ້ນ, ວິໄຈທາງດ້ານບູຮານວິທະຍາ, ການບໍລິຈາກຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ລວມທັງການຈັດຊື້ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 26 ການສຶກສາ, ຄົ້ນຄວ້າ, ວິໄຈ, ຈໍາແນກປະເພດວັດຖຸພັນ ແລະ ຄົ້ນຄວ້າເນື້ອໃນ**

ການສຶກສາ, ຄົ້ນຄວ້າ, ວິໄຈ, ຈໍາແນກປະເພດວັດຖຸພັນ ແມ່ນກິດຈະການໜຶ່ງທີ່ສໍາຄັນຂອງວຽກງານພິພິທະພັນໃນການ ສຶກສາ, ຄົ້ນຄວ້າ, ວິໄຈ ຂໍ້ມູນເບື້ອງຕົ້ນ ແລະ ຫຼັກຖານຕ່າງໆ ທີ່ກ່ຽວຂ້ອງກັບວັດຖຸພັນທີ່ມີຄຸນຄ່າທາງດ້ານວັດທະນະທໍາ, ປະຫວັດສາດ, ທໍາມະຊາດ, ວິທະຍາສາດ ແລະ ສັງຄົມ ກ່ອນຈະນໍາມາຈັດວາງສະແດງ ເປັນຕົ້ນ ການກໍານົດປະເພດ, ອາຍຸການ, ຮູບແບບສິລະປະຂອງວັດຖຸພັນ.

ການຄົ້ນຄວ້າເນື້ອໃນ ແມ່ນ ການວິເຄາະ, ວິໄຈ, ການຂຽນ, ການຮຽບຮຽງ, ການອະທິບາຍ, ການໃຫ້ຂໍ້ມູນ, ການຕີລາຄາຄຸນຄ່າຂອງວັດຖຸພັນ ແລະ ການລາຍງານ.

**ມາດຕາ 27 ການຂຶ້ນທະບຽນວັດຖຸພັນ**

ການຂຶ້ນທະບຽນວັດຖຸພັນ ແມ່ນ ການບັນທຶກຂໍ້ມູນຂອງວັດຖຸພັນທີ່ສະສົມ ທ້ອນໂຮມໄວ້ໃນພິພິທະພັນ ຊຶ່ງເປັນວຽກງານຕົ້ນຕໍສໍາຄັນ ເພື່ອໃຫ້ເປັນຫຼັກຖານປ້ອງກັນການເສຍຫາຍ ແລະ ເປັນຂໍ້ມູນທາງດ້ານວິຊາການ ທີ່ຢັ້ງຢືນກ່ຽວກັບແຫຼ່ງທີ່ມາ, ປະຫວັດຄວາມເປັນມາ, ຂະໜາດ, ນໍ້າໜັກ, ທາດປະກອບ, ຮູບແບບສິລະປະ, ອາຍຸ, ຍຸກສະໄໝ, ປະເພດຂອງວັດຖຸພັນ.

**ມາດຕາ 28 ການອະນຸລັກ ແລະ ປົກປັກຮັກສາວັດຖຸພັນ**

ການອະນຸລັກ ແລະ ປົກປັກຮັກສາວັດຖຸພັນ ແມ່ນກິດຈະການພື້ນຖານທີ່ສໍາຄັນໃນວຽກງານພິພິທະພັນ ເພື່ອປ້ອງກັນບໍ່ໃຫ້ວັດຖຸພັນປ່ຽນແປງຈາກສະພາບເດີມ, ຊຸດໂຊມ, ເສື່ອມສະພາບ

ອ່ານຕໍ່ສະບັບໜ້າ




## ຊອດກະຈາ

‘ຊອດກະຈາ’ ເປັນຄໍາປະສົມປະເພດຄໍາຄຸນນາມ ລະຫວ່າງ ‘ຊອດ’ ແລະ ‘ກະຈາ’.

‘ຊອດ’ ໝາຍເຖິງ ‘ສອງສາຍພັນມາປະສົມກັນ’ ເຊັ່ນ

- ທ້າວຈອນນີເປັນລູກຊອດຝຣັ່ງ.
- ໄກ່ຂອງຂ້ອຍໂຕນີ້ຊອດໄກ່ຕີ.

‘ກະຈາ’ ໝາຍເຖິງ “ເຄິ່ງໆກາງໆ” ເຊັ່ນ

- ໝາກແຕງທີ່ເຄິ່ງສຸກເຄິ່ງດິບ ເພິ່ນເອີ້ນວ່າໝາກແຕງກະຈາ.
- ໝາກພ້າວເຄິ່ງອ່ອນເຄິ່ງແກ່ ເພິ່ນເອີ້ນວ່າໝາກພ້າວກະຈາ.
- ເຄິ່ງຊາວນາເຄິ່ງຂຸນນາງ ເພິ່ນເອີ້ນວ່າ ຂຸນກະຈາ ດັ່ງ “ຂຸນກະຈານີ້ ເປັນຜົ່ນນາດີກວ່າ ເປັນຜົ່ນນາເອື້ອມອິ່ມເຂົ້າ ຂຸນກະຈາເອື້ອມອິ່ມລົມ” (ກາບປູ່ສອນຫຼານ)

ເມື່ອສອງຄໍານີ້ ມາປະສົມກັນກໍກາຍເປັນ ‘ຊອດກະຈາ’ ເຊິ່ງໝາຍເຖິງ “ແບບເຄິ່ງໆກາງໆ”.

‘ຊອດກະຈາ’ ມັກໃຊ້ກັບວັດທະນະທໍາ ເຊັ່ນ ວັດທະນະທໍາຊອດກະຈາ ແມ່ນວັດທະນະທໍາທີ່ມີວັດທະນະທໍາທີ່ບໍ່ສອດຄ່ອງຂອງຊາດອື່ນເຂົ້າມາປະປົນນໍາ ມັກມີຄວາມໝາຍໃນທາງລົບ.

ພ້ອມກັນນັ້ນ ‘ຊອດກະຈາ’ ຍັງມັກໃຊ້ກັບພາສາ ເຊັ່ນ ໃຊ້ພາສາຊອດກະຈາ. ພາສາຊອດກະຈາແມ່ນໝາຍເຖິງພາສາທີ່ໃຊ້ຄໍາຂອງພາສາໂຕເອງແດ່ ແລະ ຄໍາສັບພາສາອື່ນແດ່ປະປົນກັນໄປ. ບາງເທື່ອເຮົາກໍເອີ້ນຄໍາສັບຊອດກະຈາ ເຊັ່ນ

- ໂອເຄ, ມື້ອື່ນພົບກັນໃໝ່.
- ບ້າຍໆ ໄປກ່ອນເດີ.
- ແຟນຂອງລາວຈັ່ງແມ່ນແຄບຫຼໍອັນດິດ!
- ຄູນແມ່ໄປຊື້ໄກ່ຢ້າງມາໃຫ້ກິນແລ້ວຈ້າ.
- ມື້ອື່ນຊິໃຫ້ເຂົາມາດູດສ້ວມກ່ອນ.

ສະຫຼຸບແລ້ວ, ພາສາຊອດກະຈາ ຫຼື ຄໍາຊອດກະຈາມັກໃຊ້ໃນພາສາປາກເວົ້າທີ່ບໍ່ເປັນທາງການ. ດັ່ງນັ້ນ ເວລາໃຊ້ພາສາທັງການເວົ້າແລະການຂຽນທີ່ເປັນທາງການ ພວກເຮົາຄວນຫຼີກເວັ້ນການໃຊ້ພາສາຫຼືຄໍາສັບຊອດກະຈາ.

ເຫັນໄວ້ ໄດ້ຍິນມາ

❖ ວິເສດ ສະແຫວງສຶກສາ

# ຂໍ້ຫ້າມກ່ຽວກັບການປະຕິບັດຕໍ່ສັດລ້ຽງ

**ສິງກະໂປ** ມີມາດຕະການປົກປ້ອງສິດທິຂອງສັດ ທີ່ຫ້າມທໍລະມານສັດ. ສາເຫດທີ່ເປັນສະນວນ ສູ່ການອອກມາດຕະການດັ່ງກ່າວເກີດຈາກ ກໍລະນີ ນັກທຸລະກິດ ໃຈໂຫດຄົນໜຶ່ງ ທີ່ທໍລະມານໝາຈົນເສຍຊີວິດ ໃນຕົ້ນປີ 2014. ນັກທຸລະກິດທີ່ວ່ານັ້ນ ຖືກຕັດສິນລົງໂທດດ້ວຍການ ປັບໃໝເປັນເງິນເຖິງ 10.000 ໂດລາສິງກະໂປ (ເທົ່າກັບ 8.000 ໂດລາສະຫະລັດ ຕາມອັດຕາການແລກປ່ຽນໃນປີນັ້ນ). ການກະທຳຂອງຜູ້ກໍ່ເຫດບໍ່ໄດ້ມອດມິດລົງໄປພ້ອມກັບ ການຖືກປັບໃໝ ແຕ່ມັນຍັງໄດ້ກໍໃຫ້ເກີດ ມີກະແສຮຽກຮ້ອງໃນ ທົ່ວສັງຄົມ ສິງກະໂປ ໃຫ້ມີກົດໝາຍປົກປ້ອງສັດຈາກການຖືກທໍລະມານຢ່າງໂຫດຮ້າຍປ່າເຖື່ອນ. ທ່ານ ເດສະມອນລີ (Desmond Lee) ລັດຖະມົນຕີພັດທະນາແຫ່ງຊາດ ໃນເວລານັ້ນ ໄດ້ອອກມາຊີ້ແຈງກ່ຽວກັບບັນຫານີ້ວ່າ ສິງກະໂປ ຕ້ອງໄດ້ປັບປຸງ ກົດໝາຍເພື່ອເພີ່ມໂທດຕໍ່ຜູ້ມີຄວາມຜິດກ່ຽວກັບສັດລ້ຽງ. ຕາມທັດສະນະຂອງ ທ່ານແລ້ວ ເຫັນວ່າ ບຸກຄົນໃດທີ່ມີການກະທຳຕໍ່ສັດແບບໃດ ກໍມັກຈະປະພຶດແບບດຽວກັນໃນວິຖີຊີວິດຂອງເຂົາຄົນນັ້ນ. ຢູ່ ສິງກະໂປ ມີອົງການໜຶ່ງທີ່ຊື່ວ່າ "ອົງການປົກປ້ອງໝາຂ້າງຖະໜົນ" ທີ່ເຮັດໜ້າທີ່ຊ່ວຍເຫຼືອໝາ ທີ່ບໍ່ມີເຈົ້າຂອງລ້ຽງ ກໍຄືໝາທີ່ຖືກປ່ອຍປະ ໃຫ້ພະເນຈອນໄປຕາມຖະໜົນ. ຂ່າວໃນຕອນນັ້ນ (ໜັງສືພິມ KPL ພາສາອັງກິດ ວັນທີ 13/5/2014) ໄດ້ໃຫ້ຮູ້ຕື່ມວ່າ ອົງການປົກປ້ອງໝາຂ້າງຖະໜົນ ສາມາດເກັບເອົາໝາພະເນຈອນ ເຂົ້າສູນລ້ຽງ ຈຳນວນ 20-30 ໂຕຕໍ່ວັນ, ທັງໝົດເປັນໝາ ທີ່ຖືກປ່ອຍປະ ຫຼື ຖືກເຈົ້າຂອງທໍລະມານ. ອີກຂ່າວໜຶ່ງ ທີ່ແກະມາຈາກ ໜັງສືພິມ Vientiane Times ສະບັບ ວັນທີ່ 13 ມັງກອນ 2016 ໄດ້ໃຫ້ຮູ້ວ່າ ສານສູງສຸດ **ອິນເດຍ** ໄດ້ປະກາດໃຫ້ຍົກເລີກກິລາ "ຄົນໄລ່ງົວ" ທີ່ເປັນກິລາພື້ນເມືອງຍອດນິຍົມປະຕິບັດກັນມາຫຼາຍກວ່າ 2000 ປີ ຢູ່ ລັດຕາມິນນາດູ. ກິລານີ້ ມີຊື່ເປັນພາສາທ້ອງຖິ່ນວ່າ ຈາລີກັດຕຸ (Jalikattu). ກິລາ ຈາລີກັດຕຸຈັດຂຶ້ນຫຼັງລະດູເກັບກ່ຽວຂອງທຸກໆປີ ໂດຍຊາວບ້ານພາກັນຄັດເລືອກ ເອົາງົວເຖິກໂຕໃຫຍ່ໆ ແຂງແຮງ ແລະ ມີເຂົາແຫຼມໆ. ຈາກນັ້ນ ກໍເອົາຫໍ່ຂອງຂັວນມັດຕິດເຂົາງົວ, ປ່ອຍມັນອອກສູ່ເດີ່ນກວ້າງ ແລ້ວຜູ້ຄົນໃນທີມນັກແຂ່ງກໍພາກັນໄລ່ຍາດເອົາຫໍ່ຂອງຂັວນຈາກງົວ. ພວກນັກແຂ່ງໃຊ້ຄ້ອນ, ມີດ, ຫອກ, ງ້າວ ແລະ ເຄື່ອງມືທຸກຊະນິດເພື່ອບັງຄັບໃຫ້ງົວຢຸດ ຫຼື ປ້ອງມັນໃຫ້ໄປຄາຢູ່ບວກຂຸມ ຫຼື ບ່ອນກີດຂວາງຈົນງົວລົ້ມລົງ ຫຼື ໄປຕໍ່ບໍ່ໄດ້. ຈາກນັ້ນ ບັນດານັກແຂ່ງ ກໍຈະຍາດກັນແກ້ເອົາມັດຂອງຂວັນ, ໃຜຍາດຫໍ່ໄດ້ ກໍຈະຖືວ່າເປັນແຊ້ມ. ແຕ່ບັນດານັກເຄື່ອນໄຫວເພື່ອສິດທິຂອງສັດ ເຫັນວ່າກິລານີ້ ເປັນການທໍລະມານສັດເກີນໄປ ເພາະເປັນຜົນໃຫ້ງົວບາດເຈັບ, ປ່ວຍໄຂ ແລະ ມີກໍລະນີເຖິງຕາຍ.

ຂ່າວບອກວ່າໃນປີ 2014 ສານສູງສຸດຂອງ ອິນເດຍ ກໍເຄີຍສັ່ງໃຫ້ຍົກເລີກກິລາຊະນິດນີ້ຢ່າງເດັດຂາດແລ້ວ ແຕ່ບໍ່ຮູ້ວ່າດ້ວຍເຫດໃດຈຶ່ງມີການລັກຫຼິ້ນ ກິລານີ້ອີກໃນຕົ້ນປີ 2016. ສ່ວນຢູ່ **ຫວຽດນາມ**ນັ້ນ ໜັງສືພິມລາວພັດທະນາສະບັບວັນທີ 13 ກັນຍາ 2018 ກໍໄດ້ສະເໜີກ່ຽວກັບທາງອົງການປົກຄອງນະຄອນຫຼວງ ຮ່າໂນ້ຍ ໄດ້ອອກຄຳຮຽກຮ້ອງໃຫ້ຊາວນະຄອນຫຼວງ ຢຸດກິນຊີ້ນໝາ ໂດຍໃຫ້ເຫດຜົນວ່າ "ມັນຈະກະທົບຕໍ່ພາບພົດຕໍ່ນະຄອນຫຼວງ..." ຜູ້ອອກມາຮຽກຮ້ອງນັ້ນ ໄດ້ແກ່ທ່ານ ຫງວຽນຟາມຊູ, ຮອງເຈົ້າຄອງໃນເວລານັ້ນ ໂດຍທ່ານໄດ້ອ້າງວ່າ ການຂ້າ, ການບໍລິໂພກຊີ້ນໝານັ້ນ ເປັນເລື່ອງບາດຕາບາດໃຈສຳລັບຊາວຕ່າງປະເທດ ທີ່ພົບເຫັນ ເຊິ່ງສິ່ງຜົນກະທົບຕໍ່ພາບພົດຂອງນະຄອນຫຼວງຮ່າໂນ້ຍ ໃນຖານະທີ່ເປັນເມືອງຫຼວງ ທີ່ທັນສະໄໝ ແລະ ມີອາລິຍະທຳ.




# ເຄື່ອງມືຕ້ານໄຟໄໝ້

*#ບ່າວກະບື*

**ພັນງາມ ໄດ້ຍິນຂ່າວວ່າ ໄຟໄໝ້ໂຮງງານຂອງສ່ຽວ ຊື່ ວີໄລ. ດັ່ງນັ້ນ ເຂົາຈຶ່ງໄປສະແດງຄວາມເຫັນໃຈຕໍ່ສ່ຽວ.**

**"ສ່ຽວວີໄລ ເຮົາ ເສຍໃຈຫຼາຍທີ່ ໂຮງງານຂອງໂຕຖືກໄຟໄໝ້. ເຮົາ ຢາກຮູ້ວ່າແມ່ນໂຕຜະລິດຫຍັງຢູ່ໂຮງງານນັ້ນ?"**

**"ຜະລິດບັ້ງມອດໄຟ" ວີໄລຕອບ.**

# FIRE FIGHTING

*#BAOKBU*

Pan Ngam heard that his friend Vilay had had a huge fire in his factory, so he went to commiserate with him.

"Vilay my friend, I am very sorry to hear that your factory was burnt down. I want to know what were you manufacturing in the factory?"

"Fire extinguishers," replied Vilay.

## ປາຖະກະຖາ...

(ຕໍ່ຈາກໜ້າ 1)

12/2023) ໂດຍການເປັນປະທານຂອງສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ; ມີບັນດາສະຫາຍຄະນະບໍລິຫານງານພັກສະພາແຫ່ງຊາດ, ຄະນະພັກຮາກຖານ, ໜ່ວຍພັກຮາກຖານ, ໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ, ສະມາຊິກພັກສົມບູນ, ສະມາຊິກພັກສຳຮອງ ແລະ ພະນັກງານ-ລັດຖະກອນພາຍໃນສະພາແຫ່ງຊາດ ເຂົ້າຮ່ວມເພື່ອຮັບຟັງການເຜີຍແຜ່ ແລະ ເຊື່ອມຊຶມມະຕິກອງປະຊຸມ ແລະ ວັນສຳຄັນຕ່າງໆຂອງຊາດໃຫ້ເຂົ້າໃຈເລິກເຊິ່ງ.

ກອງປະຊຸມໄດ້ຮັບຟັງການປາຖະກະຖາວັນຊາດທີ 2 ທັນວາ ຄົບຮອບ 48 ປີ ແລະ ວັນເກີດປະທານ ໄກສອນ ພົມວິຫານ ຄົບຮອບ 103 ປີ ຈາກສະຫາຍ ສົມສະຫວາດ ເລັ່ງສະຫວັດ ອະດີດກຳມະການກົມການເມືອງສູນກາງພັກ, ອະດີດຮອງນາຍົກລັດຖະມົນຕີ; ເຜີຍແຜ່ມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກຄັ້ງທີ 7 ສະໄໝທີ XI ໂດຍສະຫາຍ ຄຳໃບ ດຳລັດ ກຳມະການສູນກາງພັກ, ປະທານຄະນະກວດກາພັກສະພາແຫ່ງຊາດ. ຫຼັງຈາກນັ້ນ, ສະຫາຍ ສິງຄຳ ວົງພະຈັນ ກຳມະການຄະນະບໍລິຫານງານພັກ, ຫົວໜ້າຄະນະຊ່ວຍວຽກຄະນະບໍລິຫານງານພັກສະພາແຫ່ງຊາດ ໄດ້ຜ່ານມະຕິຄະນະປະຈຳສະພາແຫ່ງຊາດວ່າດ້ວຍການອະນຸມັດໃຫ້ພະນັກງານຮັບອຸດໜູນບຳນານ, ປະກາດຕຳແໜ່ງການນຳຂັ້ນສູງ, ຕຳແໜ່ງບໍລິຫານປະເພດ 1, 2, 3 ແລະ ຍົກຍ້າຍພະນັກງານມາປະຈຳການຢູ່ສະພາແຫ່ງຊາດ; ຜ່ານຂໍ້ຕົກລົງຂອງຄະນະເລຂາທິການສະພາແຫ່ງຊາດ ວ່າດ້ວຍການແຕ່ງຕັ້ງຕຳແໜ່ງບໍລິຫານປະເພດ 4 ແລະ 5 ພາຍໃນສະພາແຫ່ງຊາດ.

ໂອກາດດັ່ງກ່າວສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ຍັງໄດ້ມີຄຳເຫັນໂອ້ລົມ ແລະ ໃຫ້ທິດຊີ້ນຳຕໍ່ກອງປະຊຸມວ່າ: ຄະນະບໍລິຫານງານພັກສະພາແຫ່ງຊາດທີ່ນຳພາຢູ່ແຕ່ລະຂົງເຂດ, ບັນດາຮາກຖານພັກ ຈະຕ້ອງໄດ້ເພີ່ມທະວີຄວາມເອົາໃຈໃສ່ໃນການສຶກສາອົບຮົມການເມືອງ-ແນວຄິດໃຫ້ແກ່ສະມາຊິກພັກ, ພະນັກງານ-ລັດຖະກອນ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ; ເປັນເຈົ້າການນຳພາການຈັດຕັ້ງຜັນຂະຫຍາຍຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດຊຸດທີ IX ຕາມຂອບເຂດຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ ໃຫ້ໄດ້ຮັບຜົນສຳເລັດ. ວຽກງານສຳຄັນອີກອັນໜຶ່ງ ແມ່ນການປັບປຸງເນື້ອໃນຂອງມະຕິກອງປະຊຸມສະພາແຫ່ງຊາດທີ່ຮັບຮອງເອົາວຽກງານຕ່າງໆ ເປັນຕົ້ນແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ສອງວາລະແຫ່ງຊາດ, ວຽກງານກວດສອບແຫ່ງລັດ, ວຽກງານກວດກາແຫ່ງລັດ ໃຫ້ສຳເລັດທັນເວລາ ເພື່ອເປັນນິຕິກຳທີ່ມີຄວາມສັກສິດ ແລະ ມີຜົນບັງຄັບຈັດຕັ້ງປະຕິບັດໃຫ້ເກີດໝາກຜົນຕົວຈິງ; ຖອດບົດຮຽນໃນໄລຍະຜ່ານມາ ການປະກາດໃຊ້ກົດໝາຍທີ່ຜ່ານການພິຈາລະນາຮັບຮອງຢູ່ກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດແຕ່ລະຄັ້ງ ແມ່ນມີຄວາມຊັກຊ້າ, ບໍ່ທັນປະຕິບັດໄດ້ຕາມກຳນົດເວລາ 30 ວັນ ພາຍຫຼັງກອງປະຊຸມສະພາແຫ່ງຊາດໄດ້ຮັບຮອງເອົາ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ມາດຕາ 60. ສະຫາຍກ່າວຕື່ມອີກວ່າ: ຕາມທິດທາງແຜນການເຄື່ອນໄຫວຂອງສະພາແຫ່ງຊາດໃນປີ 2024 ກໍຄືແຜນການທ້າຍສະໄໝຂອງສະພາແຫ່ງຊາດ ຊຸດທີ IX ແມ່ນພວກເຮົາມີໜ້າທີ່ວຽກງານສຳຄັນອັນໜຶ່ງໄດ້ແກ່ການປັບປຸງລັດຖະທຳມະນູນ ເຊິ່ງເປັນກົດໝາຍແມ່ຂອງບັນດາກົດໝາຍທັງຫຼາຍ; ເພື່ອບັນລຸວຽກງານສຳຄັນດັ່ງກ່າວ ຈຶ່ງສະເໜີມາຍັງຄະນະບໍລິຫານງານພັກສະພາແຫ່ງຊາດທີ່ຊີ້ນຳວຽກງານຢູ່ແຕ່ລະຂົງເຂດ, ບັນດາທ່ານຄະນະປະຈຳ, ບັນດາກຳມາທິການ ຈຶ່ງໄດ້ຮີບຮ້ອນກະກຽມແຜນການເຄື່ອນໄຫວຂອງຕົນໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ. ວຽກງານທີ່ສຳຄັນແມ່ນການຮັບຟັງຄວາມຄິດຄວາມເຫັນຈາກພະນັກງານ-ລັດຖະກອນພາຍໃນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງຢ່າງກວ້າງຂວາງ ເພື່ອເຮັດໃຫ້ການປັບປຸງກົດໝາຍຂົງເຂດສະພາແຫ່ງຊາດ ມີຄວາມສອດຄ່ອງກັບສະພາບຕົວຈິງຂອງວຽກງານແຕ່ລະຂົງເຂດຂອງສະພາແຫ່ງຊາດ; ການກະກຽມໃຫ້ແກ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ III ກໍເປັນໜ້າທີ່ການເມືອງສຳຄັນຂອງສະພາແຫ່ງຊາດ ທີ່ຈະຕ້ອງໄດ້ຈັດຕັ້ງປະຕິບັດເພື່ອຮັບປະກັນໃຫ້ວຽກງານດັ່ງກ່າວ ໄດ້ຮັບຜົນສຳເລັດເປັນຢ່າງດີ ຈຶ່ງສະເໜີມາຍັງບັນດາສະຫາຍຄະນະບໍລິຫານງານພັກ, ຄະນະປະຈຳ, ບັນດາກຳມາທິການ, ຄະນະເລຂາທິການ, ສະຖາບັນຄົ້ນຄວ້ານິຕິກຳ ສະພາແຫ່ງຊາດ ສຸມໃສ່ກະກຽມວຽກງານດັ່ງກ່າວແຕ່ຫົວທີ. ໃນການມີຄຳເຫັນໂອ້ລົມຕອນທ້າຍ, ສະຫາຍກ່າວເນັ້ນຕື່ມອີກວ່າ: ຄະນະບໍລິຫານງານພັກສະພາແຫ່ງຊາດ ໄດ້ພິຈາລະນາການສະເໜີຂອງບັນດາຮາກຖານພັກ ແລະ ໄດ້ຕົກລົງແຕ່ງຕັ້ງຕຳແໜ່ງບໍລິຫານຈຳນວນໜຶ່ງ ເພື່ອຮັບປະກັນການປະຕິບັດໜ້າທີ່ວຽກງານຂອງບັນດາກຳມາທິການ, ຄະນະເລຂາທິການ ກໍຄືສະຖາບັນຄົ້ນຄວ້ານິຕິກຳ ສະພາແຫ່ງຊາດ ໃຫ້ມີບາດກ້າວຫັນປ່ຽນໃໝ່ນັບມື້ດີຂຶ້ນ; ສະນັ້ນ, ສະເໜີໃຫ້ບັນດາສະຫາຍທີ່ໄດ້ຮັບການແຕ່ງຕັ້ງ ຈົ່ງເພີ່ມທະວີຄວາມຮັບຜິດຊອບໜ້າທີ່ການເມືອງຂອງຕົນ, ບຸກບືນສູ້ຊົນເຮັດໃຫ້ການປະຕິບັດໜ້າທີ່ວຽກງານມີປະສິດທິພາບ, ປະສິດທິຜົນ ນັບມື້ສູງຂຶ້ນ ສົມກັບຄວາມເຊື່ອໝັ້ນ ແລະ ໄວ້ວາງໃຈຂອງການຈັດຕັ້ງທີ່ໄດ້ມອບໝາຍວຽກງານໃຫ້.

(ສອນສັກ ວັນວິໄຊ)

**ຜູ້ຊີ້ນຳ :** ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ :** ທ່ານ ສີສຸພັນ ແສງສະຫວັນ; ທ່ານ ວິເສດ ສະແຫວງສຶກສາ; ທ່ານ ທອງດາ ສຸພາສິດ; ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ :** ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ; ທ່ານ ວິລະພັດ ພາບວິໄຊ ຮອງ ບກ; ທ່ານ ບຸນເກີດ ວົງໄຊຍາ ຮອງ ບກ

**ກອງບັນນາທິການ :** ນາງ ກົງໃຈ ແສງອຳພັນ; ນາງ ສຸພາວັນ ຫອມສະນິດ; ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ :** ນາງ ກຸກກິກ ບຸດດາໄຊ